ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ
Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 7-9, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-9, Easter Lesson
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 5, 6, 10-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 5, 6, 10-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ພຣະຄຣິດເປັນເຈົ້າຂອງໃນທຸກສິ່ງ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ພຣະນິມິດ ບົດທີ 1

ຂໍ້ພຣະຄັມພີສໍາລັບເບື້ອງຫລັງ: ພຣະນິມິດ ບົດທີ 1

ຈຸດສໍາຄັນຂອງບົດຮຽນນີ້: ເຖິງແມ່ນວ່າຈະມີການຕໍ່ສູ້ຫລາຍປານໃດ ແລະ ການຂູ່ເຂັນຈະຫນັກນ່ວງຫລາຍທໍ່ໃດກໍຕາມ, ຄຣິສຕຽນຕ້ອງມີຄວາມແນ່ນອນໃຈ ວ່າພຣະຄຣິດ ແມ່ນເຈົ້າຂອງໃນທຸກສິ່ງ, ບໍ່ວ່າ ໃນປັດຈຸບັນແລະໃນອະນາຄົດທີ່ຈະມາເຖິງ.

ຄໍາຖາມເພື່ອສໍາຣວດ: ແມ່ນຫຍັງຄືສິ່ງທີ່ເຮັດໃຫ້ທ່ານຢ້ານກົວ?

ຈຸດປະສົງຂອງບົດຮຽນ: ເພື່ອຈະສລູບຄວາມຫມາຍທີ່ໂຢຮັນເຫັນນິມິດຫມາຍໃນອົງພຣະຄຣິດ.

## ຄໍານໍາ

ເພື່ອຢາກໃຫ້ຜູ້ອື່ນມີຄວາມແນ່ນອນໃຈໃນສິ່ງທີ່ເກີດຂື້ນ ພວກເຮົາຕ້ອງອະທິບາຍເຖິງຄວາມເປັນຈິງຢ່າງແນ່ນອນ, ຕ້ອງເນັ້ນດ້ວຍຄວາມເວົ້າ ເຊັ່ນ: ຂ້ອຍເຫັນກັບຕາຂອງຂ້ອຍເອງ!! ຫລັງຈາກນັ້ນພວກເຮົາຈື່ງສາມາດສະແດງໄດ້ວ່າ ສິ່ງຕ່າງໆນັ້ນເປັນຈິງແທ້ຕາມຄໍາບອກເລົ່າ.

ໂຢຮັນໄດ້ເຮັດສິ່ງຕ່າງໆເຫລົ່ານີ້, ແລະກໍໄດ້ເຮັດຫລາຍແລ້ວ !! ນີ້ຄືຊີວິດທີ່ມີຄຸນຄ່າລາຄາຫລາຍໃນນິມິດຫມາຍຂອງໂຢຮັນ ເພື່ອຜູ້ທີ່ໄດ້ອ່ານແລະຜູ້ທີ່ໄດ້ຟັງ ແລະຜູ້ທີ່ຮັກສາໄວ້ໃນຈິດໃຈຈະໄດ້ຮັບຄວາມສຸກຈາກການບັນທຶກໄວ້ນີ້. ຍັງບໍ່ແມ່ນແຕ່ນິມິດຫມາຍທີ່ໂຢຮັນໄດ້ປະຈັກແກ່ຕາຕົວເອງເທົ່ານັ້ນ, ແຕ່ຍັງເປັນຖ້ອຍຄໍາທີ່ມາຈາກພຣະເຈົ້າ, ແລະເປັນຄໍາພະຍານທີ່ບໍ່ແມ່ນມາຈາກຜູ້ໃດທັງນັ້ນນອກຈາກພຣະເຢຊູຄຣິດ.

1. ການຮັບຮອງຈາກ ຜູ້ເປັນພຣະເຈົ້າຂອງທຸກສິ່ງ (1:1-8)

ໂຢຮັນໄດ້ທັກທາຍຄຣິສຕະຈັກທັງ 7 ທີ່ຢູ່ໃນແຂວງເອເຊັຍ. ຄອບຄົວທີ່ມີຄວາມເຊື່ອທັງຫລາຍເຫລົ່ານີ້ຕ້ອງການພຣະຄໍາແລະການຫນູນໃຈໃນເວລາທີ່ພວກເຂົາເຈົ້າປ່າວປະກາດຢູ່ໃນດິນແດນຂອງພວກທີ່ຕໍ່ຕ້ານ. ເຂົາເຈົ້າໄດ້ຈັດການກັບພວກທີ່ພິຖີພິຖັນໃນຮີດຄອງປະເພນີ. ແຕ່ຖ້ອຍຄໍາຂອງພຣະເຈົ້າຊົງຈັດຕຽມການຫ່ວງໃຍແລະພຣະອົງກໍຊົງຮູ້ວ່າພວກເຂົາກະທໍາດີຫລືຊົ່ວ ຊຶ່ງມັນສະແດງອອກໃນການກະທໍາຕໍ່ຄຣິສຕະຈັກແລະຄວາມເຊື່ອຂອງແຕ່ລະບຸກຄົນໃນທຸກວັນນີ້.

"ພຣະຄຸນ" ຮາກຖານຂອງພຣະພອນຕ່າງໆ, "ສັນຕິສຸກ" ໄດ້ປະກາດແກ່ຄຣິສຕະຈັກເຫລົ່ານີ້ (1:4). ພຣະຄຸນແລະສັນຕິສຸກນີ້ ມາຈາກພຣະເຈົ້າຕຣີເອການຂອງພວກເຮົາຄື: ພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດ ແລະ ພຣະເຈົ້າພຣະວິນຍານບໍຣິສຸດ ໄດ້ແຕ່ງຕັ້ງໃຫ້ເປັນພຣະວິນຍານທັງ 7 ທີ່ເຝົ້າຢູ່ຫນ້າພຣະຣາຊບັນລັງຂອງພຣະອົງ. ( ເລກ 7 ມີຄວາມຫມາຍວ່າເປັນນໍ້າເບີທີ່ຄົບຖ້ວນຂອງພຣະວິນຍານຂອງພຣະເຈົ້າ) ແລະຈາກພຣະບຸດຜູ້ຊົງເປັນພະຍານແຫ່ງຄວາມເຊື່ອ ຄືພຣະອົງໄດ້ຕາຍແລະກໍໄດ້ຟື້ນຄືນມາອີກ ແລະຜູ້ທີ່ຈະຄອບຄອງກະສັດທັງຫລາຍທົ່ວໂລກ. (1:5)

ໃນຄໍາທັກທາຍນີ້ແມ່ນແຮງກະຕຸ້ນເພື່ອໃຫ້ພວກເຮົາໄດ້ສັຣເສີນພຣະເຢຊູເພາະການຊົງໄຖ່. ພຣະອົງໄດ້ປົດປ່ອຍພວກ

ເຮົາອອກຈາກການຜິດບາບ ດ້ວຍພຣະໂລຫິດຂອງພຣະອົງ(1:5) ພຣະອົງຊົງແຕ່ງຕັ້ງພວກເຮົາໃຫ້ເປັນອານາຈັກຂອງພຣະອົງ ແລະເປັນປະໂລຫິດຂອງພຣະອົງ (1:6). ຕາມທັມດາແລ້ວພວກເຮົາທຸກຄົນເປັນປະໂລຫິດຕໍ່ໜ້າພຣະພັກພຣະເຈົ້າ, ຊຶ່ງເຫັນໄດ້ໃນພຣະທັມເຮັບເຣີ (4:14-5:3)ເຖິງແມ່ນວ່າໂລກນີ້ຍັງເຫັນວ່າເປັນສິ່ງທີ່ບໍ່ສຳຄັນ ແລະຍັງເປັນປໍຣະປັກກໍຕາມ ຄຳໜູນໃຈນີ້ກໍຍັງເປັນທີ່ມາແຫ່ງຄວາມຈິງ ແລະກໍຍັງເປັນທີ່ຖວາຍການຮັບໃຊ້ໃຫ້ແກ່ພຣະເຈົ້າ. ສະພາບການຕ່າງໆອາດຈະຫຍຸ້ງຍາກ ແຕ່ພວກເຮົາກໍບຸກໜ້າກ້າວໄປດ້ວຍການມີເປົ້າໝາຍແຫ່ງຊີວິດ.

ໂຢຮັນ ໄດ້ປ່າວປະກາດວ່າ ພຣະເຢຊູຈະສະເດັດກັບມາໃນໝູ່ເມກ ແລະຕາທຸກໆດວງກໍຈະເຫັນພຣະອົງ (1:7). ມະນຸດທຸກຊາດໃນທົ່ວໂລກຈະຕີອົກຮ້ອງໄຫ້" (1:7) ໃນຂະນະທີ່ພຣະອົງຊົງທໍຣະມານຢູ່ນັ້ນ ພວກສາວົກກໍເປັນທຸກ, ແຕ່ພຣະອົງຊົງທໍຣະມານເພື່ອພວກເຂົາ. ຜູ້ທີ່ທໍຣະມານພຣະບຸດແລະຜູ້ທີ່ປະຕິເສດກໍຈະເຫັນດ້ວຍຕາເພາະພວກເຂົາບໍ່ເຊື່ອ. ໂປໂລໄດ້ກ່າວໄວ້ໃນ ຟີລິບປອຍ 2:6-11 ພຣະເຈົ້າຈະຊົງຍົກພຣະອົງຂຶ້ນຢ່າງສູງ ແລະຈະປະທານນາມໃຫ້ເໜືອນາມທັງປວງ, ແລະທຸກເຂົ່າໃນສວັນ, ທີ່ແຜ່ນດິນໂລກ, ແລະໃຕ້ແຜ່ນດິນໂລກ ຈະຄຸລົງຂາບພຣະອົງ. ຂໍ້ທີ 11 ຍັງໄດ້ເນັ້ນອີກວ່າທຸກລີ້ນຈະຍອມຮັບພຣະອົງ. ພວກເຮົາເຫັນໄດ້ວ່າການເຫັນນິມິດນີ້ ໂຢຮັນແລະໂປໂລມີຄວາມສອດຄ້ອງກັນ.

ໃນຂໍ້ ທີ 8 ພຣະອົງຊົງກ່າວວ່າ "ເຮົາເປັນ ອັລຟາ ແລະເປັນ ໂອເມກາ" ອັລຟາ ແລະ ໂອເມກາ ແມ່ນຕົວໜັງສືທຳອິດແລະຕົວສຸດທ້າຍຂອງພາສາກຣີກ ຊຶ່ງໝາຍຄວາມວ່າພຣະອົງຊົງເປັນຜູ້ເລີ້ມຕົ້ນໂລກນີ້ ແລະກໍເປັນຜູ້ສຸດທ້າຍຂອງໂລກນີ້ເຊັ່ນກັນ. ເວົ້າອີກຢ່າງນຶ່ງວ່າພຣະອົງຊົງເປັນຢູ່ກ່ອນແລ້ວ, ປັດຈຸບັນພຣະ ອົງກໍເປັນຢູ່ ແລະພຣະອົງຈະຍັງເປັນຢູ່ຕລອດໄປ.

## 2. <u>ລັກສະນະພາບຂອງຜູ້ທີ່ເປັນພຣະເຈົ້າໃນທຸກສິ່ງ (1:9-16)</u>

ສມັຍຂ້າພະເຈົ້າເປັນເດັກນ້ອຍ, ຂ້າພະເຈົ້າມີເພື່ອນຄົນນຶ່ງ ຊື່ເຂົາວ່າ ຄຳດີ. ຄຳດີເປັນຄົນນ້ອຍກວ່າໝູ່ຊັ້ນດຽວກັນ. ລາວມັກຈະຖືກຫາເລື່ອງ, ກຸກກວນຢູ່ເລື້ອຍໆ ບາງຄັ້ງກໍຖືກຈົກຮອດປື້ມ ຫລືຖືກຍາດແຍ່ງເອົາສໍແລະປາກກາ. ແຕ່ວ່າລາວຊ້ຳພັດມີເພື່ອນທີ່ດີຕໍ່ລາວຄົນນຶ່ງ ຊຶ່ງເປັນຄົນໃຫຍ່, ລ້ຳສັນ, ຊົກຕ່ອຍກໍເປັນອີກດ້ວຍ. ຄຳດີ ສາມາດຜ່ານມັທຍົມ ແລະອຸດົມໄປດ້ວຍດີ ໂດຍບໍ່ມີຜູ້ໃດຈະສາມາດລົບກວນລາວໄດ້. ເພາະລາວມີເພື່ອນທີ່ເກັ່ງກ້າສາມາດ.

ນິມິດຂອງໂຢຮັນນີ້ ແມ່ນນຳຄຳຕັກເຕືອນໃຫ້ພວກສາວົກທັງຫລາຍເຫັນວ່າ ພວກເຂົາຢູ່ພາຍໃຕ້ການເບິ່ງແຍງຂອງພຣະເຢຊູຄຣິດ. ພຣະອົງຈະນຳຊັຍຊະນະມາສູ່ພວກເຂົາ ແລະ ພຣະອົງຈະຢັ້ງຢືນຄວາມເຊື່ອຂອງພວກເຂົາ.

ນິມິດໝາຍນີ້ມາເຖິງໂຢຮັນ ໃນຂະນະທີ່ລາວຖືກເນລະເທດໄປຢູ່ເກາະປັດໂມ. ລາວມີການພົວພັນກັບພຣະເຈົ້າດ້ວຍການອະທິຖານ ແລະບົດຮ້ອງເພັງ. ລາວມີການນະມັສການອັນໜວານຊື້ສ່ວນຕົວກັບພຣະເຈົ້າໂດຍພຣະວິນຍານບໍຣິສຸດ. ສຽງສິນທະນາມັນຊ່າງດັງກັງວານເໜືອນສຽງແກ, ມັນຊ່າງຈະແຈ້ງທີ່ໂຢຮັນໄດ້ບັນທຶກ ແລະໄດ້ສົ່ງໄປເຖິງ 7 ຄຣິສຕະຈັກໃນແຂວງອາເຊັຍ.

ເມື່ອໂຢຮັນອວ່າຍໜ້າໄປຫາສຽງ, ລາວກໍເຫັນສິ່ງທີ່ສົດງວຍງົດງາມຂອງ "ພຣະບຸດພຣະເຈົ້າ" (ພຣະເຢຊູເປັນຜູ້ອອກແບບຕົກແຕ່ງເອງ). ໃນດານີເອນ 7:13 "ບຸດມະນຸດ" ແມ່ນຜູ້ຕາງໜ້າມວນຊົນທົ່ວໄປ ແລະເປັນຜູ້ມີອຳນາດເຕັມ ຕາງໜ້າໃຫ້ ພຣະເຈົ້າ. ໃນມັດທາຍ ໄດ້ກ່າວຢ່າງຈະແຈ້ງວ່າ ບຸດມະນຸດ ແລະ ພຣະເຢຊູ ຊົງເປັນຜູ້ດຽວກັນ. (ມທ 26:45)

ພຣະລັກສະນະຂອງພຣະອົງໄດ້ບົ່ງບອກເຖິງຊັຍຊະນະ ແລະຊັຍຊະນະນີ້ມັນພຽງພໍທີ່ຈະນຳພາພວກເຮົາໄປສູ່ຊັຍຊະນະນີ້ໄດ້ເຫມືອນກັນ.  ເຄື່ອງຊົງໄດ້ຊີ້ໃຫ້ເຫັນວ່າພຣະອົງສົມຄວນເປັນຈອມກະສັດ. ສ່ວນພຣະສຽນ (ຫົວ)ແລະພຣະເກສາ (ຜົມ) ມີສີຂາວເຫມືອນຂົນແກະຫລືຫິມະ,  ສະແດງເຖິງຄວາມບໍຣິສຸດຂອງພຣະອົງ.  ພຣະເນດ (ຕາ)  ເປັ່ງແສງກ້າດັ່ງແປວໄຟ  ຊຶ່ງຫມາຍວ່າພຣະອົງຊົງເຫັນໄດ້ໃນທຸກໆສະຖານທີ່. (1:14) ພຣະບາດ(ຕີນ) ເຫມືອນທອງສຳຣິດກ້ຽງລະອຽດດັ່ງໄດ້ຫລໍ່ຫລອມມາຢ່າງດີ ຫມາຍຄວາມວ່າພຣະອົງຊົງເຂັ້ມແຂງສາມາດຢືນຢັດໄດ້ໂດຍບໍ່ມີການໂອນອຽງເລີຍ. (1:15).  ພຣະສຸຣະ (ສຽງ)  ເຫມືອນດັ່ງນ້ຳຕົກຕາດ.  ເຫມືອນສຽງຮ້ອງກຳປະນາດ ຢ່າງມີອຳນາດ (1:15) ໃນມືເບື້ອງຂວາ ພຣະຊົງຖືດາວເຈັດດວງ ຊຶ່ງຫມາຍເຖິງຄຣິສຕະຈັກທັງ 7.   (1:16; 20)  ສ່ວນພຣະພັກ (ຫນ້າ) ມີແສງປະກາຍກ້າ ເຫມືອນດວງຕາເວັນ.   (ເບິ່ງ ໃນພຣະຄັມພີເດີມ ອົພຍົບ 3:1-21; 40:34;  ແລະເອຊາຍາ 6:1-3) ອອກມາຈາກພຣະໂອດ (ປາກ) ຂອງພຣະອົງກໍແມ່ນດາບສອງຄົມ ຊຶ່ງຫມາຍເຖິງພຣະຄຳຂອງພຣະອົງ.

ເມື່ອໂຢຮັນເຫັນດັ່ງນັ້ນແລ້ວກໍເກງຂາມ ຫນ້າຟຸບລົງໃສ່ພຣະບາດ   ຂອງພຣະອົງແຂງໄປຫມົດຕົນຕົວເຫມືອນດັ່ງຄົນຕາຍ.  ຖ້າຈະເວົ້າແລ້ວ ຖ້າພວກເຮົາຫາກພົບພຣະເຢຊູຢ່າງແທ້ຈິງ ພວກເຮົາຈະບໍ່ຢ້ານຄົນໃດອີກເລີຍ.ຕົວຢ່າງ: ຊາວຫນຸ່ມເຮັບເຣີ້ ສາມຄົນ ທີ່ກະສັດເນບູກັດເນັດຊາ ສັ່ງໃຫ້ກາບຮູບເຄົາຣົບ, ຖ້າຜູ້ໃດບໍ່ກາບຜູ້ນັ້ນຈະຖືກຖິ້ມລົງໃນເຕົາໄຟທີ່ຮ້ອນເຮົ່າ. (ດານີເອນ 3:17-18)  ນີ້ຄືສິ່ງທີ່ພວກເຮົາຄວນກະທຳ ບໍ່ວ່າຈະມືດມົວໃນກາງຄືນຫລືແດດຮ້ອນໃນກາງເວັນກໍຕາມ ພວກເຮົາຕ້ອງຢຶດຫມັ້ນໃນຄວາມເຊື່ອ.

3. <u>ຄຳສັ່ງພິເສດຈາກພຣະຜູ້ເປັນເຈົ້າໃນທຸກສິ່ງ  (1:17-20 )</u>

ຄຳເຕືອນທີ່ດີເລີດ ທີ່ຊ່ວຍໃຫ້ໂຢຮັນຜ່ອນຄາຍຄວາມເກງກົວ ຄືພຣະຄຣິດໄດ້ຊົງແຕະຕ້ອງດ້ວຍພຣະຫັດຂວາ ແລະຊົງກ່າວວ່າ:  "ຢ່າຊູຢ້ານ"     ຖ້າໂຢຮັນຫາກບໍ່ຢ້ານຄົນນີ້ແລ້ວ ລາວຈະຢ້ານກົວຜູ້ໃດອີກໃນໂລກນີ້.  ພຣະຄຣິດຍັງກ່າວຕໍ່ໄປອີກວ່າ: "ເຮົາເປັນເບື້ອງຕົ້ນແລະເປັນເບື້ອງປາຍ"  ປັດຈຸບັນນີ້ເຮົາກໍຍັງເປັນຢູ່ ແລະຈະ ເປັນຢູ່ຕລອດໄປ. (1:18)

"ແດນມໍຣະນາ"  ພາສາໄທ ແມ່ນແດນຄົນຕາຍ.  ຫລືເວົ້າອີກຢ່າງນຶ່ງວ່າ ເປັນສະຖານທີ່ ທີ່ຄົນຕາຍໄປແລ້ວຕ້ອງໄດ້ຢູ່ທີ່ນັ້ນ. ອົງພຣະເຢຊູຄຣິດໄດ້ຊົງຜ່ານຄວາມຕາຍ, ຜ່ານສະຖານທີ່ນັ້ນແລະຊົງມີຊັຍຊະນະເຫນືອທັງສອງຢ່າງນີ້. ພຣະອົງຈຶ່ງສາມາດກ່າວໄດ້ວ່າພຣະອົງຊົງຖືກຸນແຈ ແຫ່ງແດນຄວາມຕາຍ. (1:18)

ພຣະຄຣິດໄດ້ບອກໃຫ້ໂຢຮັນບັນທຶກສິ່ງຕ່າງໆທີ່ລາວໄດ້ເຫັນນັ້ນ  ແລະສິ່ງທີ່ຈະມາໃນພາຍຂ້າງຫນ້າ. (1:19)   ສ່ວນດາວທັງເຈັດທີ່ຢູ່ໃນມືຂວາຂອງເຮົານີ້ (1:20) ຄືທູດສວັນຂອງຄຣິສຕະຈັກທັງ 7  ແລະເຄື່ອງຮອງຕີນໂຄມ ກໍໄດ້ແກ່ຄຣິສຕະຈັກທັງ 7.   ທູດສວັນຂອງຄຣິສຕະຈັກແມ່ນສິດຍາພິບານຂອງຄຣິສຕະຈັກ ເພື່ອຈະນຳເອົາພຣະວິນຍານບໍຣິສຸດມາສູ່ຄຣິສຕະຈັກ. ສິດຍາພິບານ ຄືຜູ້ທີ່ຢູ່ກ້ຳຂວາຂອງພຣະເຈົ້າ   ເປັນຜູ້ທົນທຸກທໍຣະມານເພື່ອວຽກງານຂອງພຣະເຈົ້າ ຫລາຍກວ່າສະມາຊິກທັມດາ, ແຕ່ຢູ່ ພາຍໃຕ້ການເບິ່ງແຍງຈາກພຣະເຈົ້າຕລອດມາ.

ນິມິດຫມາຍຂອງໂຢຮັນນີ້   ທີ່ບັນທຶກໄວ້ທັງຫມົດນີ້ ແມ່ນຊີ້ໃຫ້ເຫັນວ່າ ໃນອານາຄົດຂ້າງຫນ້ານີ້ ທຸກຢ່າງຈະຢູ່ໃນກຳມືຂອງຄົນຂອງພຣະເຈົ້າ.

<u>ຄຳຖາມ</u>

1. ຄຳຕັສຂອງພຣະເຈົ້າທີ່ກ່າວວ່າ: "ເຮົາເປັນອາລະຟາ ແລະໂອເມກາ" ໝາຍຄວາມວ່າແນວໃດ? (ພຣະນິມິດ 1:8; ເບິ່ງອີກໃນຂໍ້ ທີ 17)

໒. ທ່ານໄດ້ຮັບຫຍັງແດ່ ໃນນິມິດໝາຍວ່າ ຊັຍຊະນະທີ່ພຣະເຢຊູຊົງຢືນຢັດຢູ່ໃນຄຣິສຕະຈັກ ?

3. ທ່ານຄິດແນວໃດ ກ່ຽວກັບທູດສວັນທັງ 7 ທີ່ຢູ່ເບື້ອງຂວາມືຂອງພຣະຄຣິດ?

4. "ເຮົາຖືຂໍກະແຈ ແຫ່ງແດນມໍລະນາ" ຖ້ອຍຄຳຕອນນີ້ມີຄວາມໝາຍວ່າຢ່າງໃດ?

## ບົດຮຽນທີ 2
## ພຣະຄຣິດ, ຊຶ່ງເປັນພຣະເຈົ້າຂອງທຸກໆຄຣິສຕະຈັກ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 2:1-11; 3:14-21

ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ພຣະນິມິດ ບົດທີ 2 ແລະ ບົດທີ 3

ຈຸດສຳຄັນຂອງບົດຮຽນນີ້: ພຣະຄຣິດຊົງຫນູນໃຈທຸກໆຄຣິສຕະຈັກ ແລະຊົງຮຽກຮ້ອງໃຫ້ມີຈິດສຳນຶກແລະຮຽກຮ້ອງໃຫ້ມີຄວາມເຊື່ອຢ່າງຫນັກແຫນ້ນ.

ຄຳຖາມເພື່ອສຳຣວດ: ແມ່ນຫຍັງຄືສິ່ງທີ່ພຣະເຢຊູຄຣິດຕ້ອງການໃຫ້ທຸກໆຄຣິສຕະຈັກເຮັດ?

ຈຸດປະສົງຂອງບົດຮຽນ: ເພື່ອລຳດັບ ຄຳຕັກເຕືອນໃນຈົດຫມາຍຄົ້ນຄວ້າວ່າຈະປະຕິບັດອັນໃດ ໃຫ້ ເຫມາະສົມ.

### ຄຳນຳ

ເມື່ອເວລາຂ້າພະເຈົ້າສອບເຂົ້າໂຮງຮຽນກິນນອນໄດ້ ປີທຳອິດເວລາກັບໄປຢ້ຽມບ້ານແຕ່ລະອາທິດ ພໍ່ແມ່ຂອງຂ້າພະເຈົ້າມັກເວົ້າຢູ່ເລື້ອຍໆວ່າ "ຕັ້ງໃຈຮຽນເດີ້ ພໍ່ແມ່ເປັນຫ່ວງ" ຄຳຫນູນໃຈແລະຄຳແນະນຳມາພ້ອມໆກັນ.

ໂປຣັນໄດ້ຂຽນຈົດຫມາຍໄປເຖິງສິດຍາພິບານຂອງຄຣິສຕະຈັກທັງ 7 ທີ່ຢູ່ໃນແຄ້ວນເອເຊັຍ ຊຶ່ງຈົດຫມາຍນີ້ສາມາດເວົ້າໄດ້ວ່າເປັນຈົດຫມາຍແນະນຳໃນການນຳພາເພື່ອໃຫ້ກ້າວຫນ້າຂຶ້ນໄປ. ເປັນຫຍັງທ່ານຈຶ່ງສົ່ງໄປຫາແຕ່ຄຣິສຕະຈັກເຈັດແຫ່ງເທົ່ານັ້ນ, ຄຳຕອບກໍມີຢູ່ວ່າເລກເຈັດເປັນຕົວເລກທີ່ຄົບຖ້ວນ ແລະຜູ້ທຳນວາຍທັງຫລາຍກໍມັກໃຊ້ເປັນເຄື່ອງມື. ເຊັ່ນດຽວກັນ ເລກເຈັດຍັງເປັນຕົວແທນຂອງຄຣິສຕະຈັກທັງເຈັດທົ່ວໂລກ, ສະເພາະຢ່າງຍິ່ງແລ້ວແມ່ນໃນແຄວ້ນເອເຊັຍ.

ຈົດຫມາຍທັງເຈັດຍັງມີສິ່ງຄ້າຍຄືກັນໂດຍສະເພາະແລ້ວແມ່ນລັກສະນະນິດສັຍຂອງຜູ້ຂຽນ (ພຣະຄຣິດ) ໃນຈົດຫມາຍແຕ່ລະສະບັບ ພຣະຄຣິດໄດ້ຍົກຍ້ອງຊົມເຊີຍຄຣິສຕະຈັກ, ພ້ອມກັບຄຳຕຳຫນິຕ່າງໆ.

1. ຈົ່ງຮັກສາໃຫ້ເປັນຂອງເດີມຢູ່ສເມີ (2:1-7)

ຜູ້ຂຽນຈົດຫມາຍສະບັບນີ້ ໄດ້ແນະນຳຕົວເອງ "ພຣະອົງຊົງຖືດາວທັງເຈັດໄວ້ໃນພຣະຫັດເບື້ອງຂວາ ແລະສະເດັດໄປມາໃນຖ້າມກາງເຄື່ອງຮອງຕີນໂຄມທອງຄຳທັງເຈັດນັ້ນ" (2:1) ການຊົງກ່າວດັ່ງນີ້ກໍຫມາຍຄວາມວ່າພຣະຄຣິດຊົງມີການພົວພັນແລະເປັນຜູ້ຕິດຕາມການກະທຳຂອງຄຣິສຕະຈັກທັງເຈັດຢູ່ທຸກເວລາ. ພຣະຄຣິດໄດ້ຢັ້ງຢືນເຖິງຄວາມເຊື່ອຂອງຊາວເອເຟໂຊ "ເຮົາຮູ້ຈັກການກະທຳຂອງເຈົ້າ, ຮູ້ຈັກຄວາມເມື່ອຍຍາກແລະຄວາມພຽນອົດທົນຂອງເຈົ້າ.... (2:2) ແຕ່ພຣະອົງກໍຍັງມີຄຳຕັກເຕືອນແກ່ພວກເຂົາເຖິງຄວາມຮັກດັ້ງເດີມ (2:4). ພວກນີ້ໄດ້ເຄີຍຊົມຣົດຄວາມຊົມຊື່ນຍິນດີໃນອົງພຣະເຢຊູມາແລ້ວ. ພວກເຂົາເຈົ້າເຄີຍມີຄວາມ ຮູ້ສຶກໃນການຮັບໃຊ້ແລະການນະມັສການມາແລ້ວເປັນຢ່າງດີ ພຣະຄຣິດຊົງແນະນຳແກ່ພວກເຂົາເຈົ້າວ່າ ຢ່າໄດ້ຫລົງລືມຈົ່ງກັບໃຈໃຫມ່ແລະເຮັດຕາມຢ່າງເດີມເສັຽ. ຖ້າເຈົ້າຫາກບໍ່ກັບໃຈໃຫມ່ເຮົາກໍຈະຍົກເຄື່ອງຮອງຕີນໂຄມຂອງເຈົ້າອອກຈາກບ່ອນຂອງມັນ. ຫມາຍຄວາມວ່າໃຫ້ເຈົ້າປ່ຽນໃຈແລະກັບໃຈເສັຍໃຫມ່ ແລ້ວກໍໃຫ້ລະນຶກວ່າພຣະເຢຊູຄຣິດຊົງມີຄຸນຄ່າໃນຊີວິດ.

ຊາວເອເຟໂຊໄດ້ຖືກເຕືອນວ່າ ພວກເຂົາເຈົ້າບໍ່ມີສິດທິຫຍັງທັງຫມົດທີ່ເປັນຄຣິສຕະຈັກໄດ້ຖ້າບໍ່ກັບໃຈໃຫມ່, ຊຶ່ງເຫັນໄດ້ໃນຂໍ້ທີ 7 "ຜູ້ໃດມີຫູ ຈົ່ງຟັງ....." ຂໍ້ຄວາມນີ້ສໍາຄັນຫລາຍ, ຈຶ່ງຂໍໃຫ້ທ່ານທັງຫລາຍໄດ້ຕັ້ງໃຈຟັງ ຢ່າງຄັກແນ່ຖີ່ຖ້ວນ. "ຜູ້ໃດມີຊັຍຊະນະເຮົາຈະໃຫ້ຜູ້ນັ້ນກິນຜົນຈາກຕົ້ນໄມ້ແຫ່ງຊີວິດ ຊຶ່ງຢູ່ໃນເທບອຸທຍານຂອງພຣະເຈົ້າ" (2:7) ພວກເຮົາສາມາດມີຊັຍຊະຊະໃນພຣະຄຣິດ, ເພາະພຣະອົງຊົງຊະນະການທົດລອງ, ຄວາມບາບ, ຄວາມຕາຍ, ແລະອຸບໂມງຝັງສົບ. ຄວາມເຊື່ອ ແລະການຖວາຍຕົວຂອງພວກເຮົາແມ່ນພະລັງອໍານາດເຣັດ ໃຫ້ເຮົາໄດ້ຮັບຊັຍຊະນະ.

ທ່ານຈໍາໄດ້ບໍ່ ເວລາອາດາມແລະເອວາເຮັດບາບ ພຣະເຈົ້າໄດ້ຂັບໄລ່ພວກເຂົາໃຫ້ອອກຈາກສວນເອເດນ ເພາະການກະບົດຂອງພວກເຂົາ ແຕ່ພຣະເຈົ້າກໍຍັງສັນຍາກັບພວກເຂົາວ່າ ຈະໃຫ້ພວກເຂົາໄດ້ກິນຫມາກໄມ້ທີ່ມີຊີວິດ ຖ້າທ່ານຫາກໄດ້ຮັບຊັຍຊະນະ.

2. <u>ພຣະພອນຈົ່ງເກີດມີແກ່ຜູ້ທຸກຍາກລໍາບາກ (2:8-11)</u>

ຄໍາແນະນໍາຕົວຂອງຜູ້ຂຽນຈົດຫມາຍໄປຫາຄຣິສຕະຈັກທີ່ເມືອງຊະມີນາ "ພຣະອົງຊົງເປັນຜູ້ຕົ້ນແລະຜູ້ປາຍຜູ້ສິ້ນພຣະຊົນແລ້ວແລະກັບຄືນມາອີກ" (ພນມ 2:8) ຄໍາແນະນໍານີ້ໄດ້ເນັ້ນເຖິງການຊົງເປັນຢູ່ຂອງພຣະອົງ ຄືພຣະອົງເປັນຜູ້ຊົງເລີ້ມຕົ້ນສ້າງໂລກ, ພຣະອົງຊົງເປັນມະນຸດ ແລະພຣະອົງຍັງຊົງເປັນພຣະວິນຍານທີ່ ສະຖິດຢູ່ນໍາຜູ້ທີ່ເຊື່ອທັງຫລາຍໃນປັດຈຸບັນນີ້ດ້ວຍ.

ສໍາລັບຜູ້ທີ່ຖືກກົດຂີ່ຂົ່ມເຫັງແລະຜູ້ທີ່ທຸກຍາກ ພຣະອົງກໍມີຄວາມເຫັນໃຈເພາະພຣະອົງຊົງເຄີຍຜ່ານມາແລ້ວແລະກໍໄດ້ຊັຍຊະນະມາຫມົດແລ້ວ. ສິ່ງທີ່ພວກເຂົາເຈົ້າຄວນຮັບຮູ້ນັ້ນກໍຄືວ່າ ພຣະຄຣິດຊົງຮັບຮູ້ແລະຊົງເປັນຫ່ວງເປັນໃຍໃນຄວາມຣະທົມຂົມຂື່ນທັງປວງ.

ທຸກວັນນີ້ ພວກເຮົາທັງຫລາຍຂາດຄວາມເຂົ້າໃຈເຖິງຄວາມເປັນຫ່ວງເປັນໃຍນີ້, ພວກເຮົາທັງຫລາຍບໍ່ເຂົ້າໃຈເຖິງຄວາມຮັ່ງມີຂອງພວກເຮົາເອງ. ພຣະເຢຊູຊົງເຕືອນວ່າ ການຕໍ່ສູ້ນີ້ແມ່ນຍືດເຍື້ອຍາວນານແລະຫນັກຫນ່ວງ. ການຕໍ່ສູ້ອາດນໍາໄປສູ່ຊີວິດກໍເປັນໄດ້. ແຕ່ພຣະອົງຊົງສັນຍາວ່າ : "ຢ່າຢ້ານກົວຄວາມທຸກທໍຣະມານຊຶ່ງເຈົ້າຈະໄດ້ຮັບນັ້ນ.... ...ເຮົາຈະໃຫ້ມົງກຸດຊີວິດແກ່ທ່ານ." ຜູ້ໃດມີຫູ...ຈົ່ງຟັງເອົາ ຜູ້ທີ່ມີຊັຍຊະນະຈະບໍ່ໄດ້ຮັບອັນຕະລາຍຈາກຄວາມຕາຍຄັ້ງທີສອງເລີຍ.

ຖ້ອຍຄໍາຫນູນໃຈນີ້ແມ່ນເພື່ອຄຣິສຕະຈັກຊະມີນາ ທີ່ກໍາລັງຕໍ່ສູ້ເອົາຄວາມຫວັງແລະການຮັປກັນທຸກຢ່າງ ໃນຂະນະມີການປະເຊີນຫນ້າກັບບັນຫາແລະຍັງສົງສັຍໃນການເປັນຫ່ວງເປັນໃຍຂອງພຣະເຈົ້າ. ໃນຂໍ້ພຣະທັມເບິ່ງເຫມືອນວ່າບອກໃຫ້ເຮົາຕັ້ງຫມັ້ນຢູ່ໃນຄວາມເຊື່ອ. ເພາະການປ່າວປະກາດນີ້ແມ່ນຕ້ອງການໆຖວາຍຊີວິດ. ຈາກພຣະໂອດ(ຮິມຝີປາກ)ຂອງອົງພຣະຄຣິດແລ້ວ ພຣະຄໍານີ້ແມ່ນເພື່ອຊ່ວຍລູກຂອງພຣະອົງທີ່ກໍາລັງຕໍ່ສູ້.

3. <u>ຄວາມສຸພາບອ່ອນໂຍນ ແລະຄວາມໂຄຣົບນັບຖື (3:14-21)</u>

ພຣະຄຣິດໄດ້ຂຽນຈົດຫມາຍອີກສະບັບນຶ່ງໄປເຖິງຄຣິສຕະຈັກເມືອງລາວດີເກອາ "ພຣະອົງຊົງເປັນພຣະອາແມນ, ຊົງເປັນພະຍານທີ່ສັດຊື່ແລະທ່ຽງຕົງ ແລະຊົງເປັນປະຖົມມະການແຫ່ງສິ່ງສາຣະພັດ" (3:14)ໂຢຮັນ 1:3 "ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງດຽວທີ່ໄດ້ເປັນມານອກເຫນືອຈາກພຣະວາທະ" ເມື່ອສັງເກດເບິ່ງແລ້ວຈະເຫັນໄດ້ວ່າພຣະຄຣິດຊົງເປັນຄວາມຈິງຂອງທຸກສິ່ງ, ພຣະຄຣິດຊົງເປັນພະຍານແຫ່ງຄວາມສັດຊື່ ແລະພຣະຄຣິດຊົງເປັນຜູ້ທີ່ເຊື່ອຖື

ໄດ້ຢ່າງແນ່ນອນ.

ບໍ່ມີອັນໃດທີ່ຈະຊື່ນຊົມຍົກຍ້ອງໃນຄຣິສຕະຈັກນີ້ ເພາະເວລາເບິ່ງແລ້ວເຫັນວ່າ ພວກເຂົາເຮັດເສີຍໆ ບໍ່ເຢັນບໍ່ຮ້ອນ. ເມືອງລາວດີເກອາຕັ້ງຢູ່ໃນເສັ້ນທາງການຄ້າຜ່ານຈົນເຖິງເມືອງເອເຟໂຊ. ປະຊາຊົນທີ່ຢູ່ແຖບນັ້ນເປັນຄົນຮັ່ງມີແຕ່ພຣະເຢຊູຊົງເອີ້ນພວກເຂົາວ່າເປັນຄົນທີ່ທຸກຮ້ອນເຂັນໃຈທີ່ສຸດ. (3:17 ) ຍັງບໍ່ຫມົດເທົ່ານັ້ນ ພວກເຂົາຍັງເປັນຄົນຂັດສົນ, ເປັນຄົນຕາບອດແລະເປືອຍກາຍຢູ່. ພວກເຂົາພູມໃຈໃນຊັບສົມບັດຂອງພວກເຂົາຫລາຍກວ່າພຣະເຢຊູ. ຖ້າພວກເຂົາຢາກຈະໄດ້ຂອງທີ່ມີຄຸນຄ່າຢ່າງແທ້ຈິງນັ້ນ ພວກເຂົາຕ້ອງເອົາພຣະເຢຊູ. ຖ້າພວກເຂົາຢາກຮັ່ງມີຢ່າງແທ້ຈິງພວກເຂົາຕ້ອງຮັ່ງມີຈາກພຣະເຢຊູ, ຕາຂອງພວກເຂົາຕ້ອງແມ່ນຕາແຫ່ງຄວາມເຊື່ອ, ເສື້ອຜ້າຕ້ອງເປັນເສື້ອຜ້າແຫ່ງຄວາມຊອບທັມທີ່ພຣະເຢຊູມອບໃຫ້.

ຂໍ້ 19 ກ່າວວ່າ "ເຮົາຮັກຜູ້ໃດເຮົາກໍຕັກເຕືອນແລະຕີສອນຜູ້ນັ້ນ" ພຣະເຢຊູກ່າວສອນເຂົາ ເພື່ອຢາກໃຫ້ພວກເຂົາປ່ຽນແປງແລະກັບໃຈໃຫມ່. ຂໍ້ 20 ກ່າວວ່າ "ເຮົາຢືນເຄາະຢູ່ທີ່ປະຕູ ຖ້າຜູ້ໃດໄດ້ຍິນສຽງຂອງເຮົາແລະເປີດເຮົາຈະເຂົ້າໄປຫາຜູ້ນັ້ນ ແລະຈະຮັບປະທານອາຫານຮ່ວມກັບເຂົາ ແລະເຂົາຈະຮັບປະທານອາຫານຮ່ວມກັບເຮົາ" ລອງຄິດເບິ່ງດູວ່າເປັນຫຍັງເຮົາຈຶ່ງໄດ້ໄປນັ່ງຢູ່ທີ່ນັ້ນ, ກໍເພາະວ່າພຣະເຢຊູເປັນຜູ້ໄດ້ຮັບຊັຍຊະນະແລ້ວ ແລະເຮົາກໍໄດ້ຮັບຊັຍຊະນະ ຮ່ວມກັບພຣະອົງດ້ວຍຄວາມເຊື່ອ ແລະດ້ວຍການຍອມໃຫ້ພຣະເຢຊູຄຣິດເປັນພຣະເຈົ້າຂອງເຮົາ. (3:21) ດ້ວຍພຣະຄຸນເຮົາຈຶ່ງໄດ້ຮ່ວມໂຕະກັບພຣະອົງ.

ສະລູບ: ພຣະຄຣິດເປັນຫ່ວງເປັນໃຍຄຣິສຕະຈັກຢ່າງແທ້ຈິງ. ພຣະອົງຊົງຊາບກຳລັງແລະຄວາມອ່ອນແອຂອງພວກເຂົາ ແລະມີພຣະປະສົງຢາກໃຫ້ພວກເຂົາໄດ້ຮັບລາງວັນຕາມທີ່ພວກເຂົາສົມຄວນຈະໄດ້ຮັບ. ບໍ່ມີສິ່ງໃດທີ່ຈະຂັດຂວາງພຣະອົງໄດ້ໃນການດູແລແຕ່ລະຄົນ. ຟັງພຣະເຢຊູກ່າວຕໍ່ໂປໂລ(ກຈ 9:4) ".....ເປັນຫຍັງເຈົ້າຈຶ່ງຂົ່ມເຫັງເຮົາ?" ຄຳທີ່ກ່າວຢ່າງນີ້ກໍຫມາຍຄວາມວ່າ ຖ້າເຈົ້າແຕະຕ້ອງຄຣິສຕະຈັກກໍເຫມືອນກັນກັບເຈົ້າແຕະຕ້ອງເຮົາ.

ພຣະເຢຊູຄຣິດຈະຊ່ວຍເຫລືອຄຣິສຕະຈັກທຸກເວລາ ເພື່ອໃຫ້ຄຣິສຕະຈັກເປັນໄປຕາມທີ່ສົມຄວນຈະເປັນ. ການຫນູນໃຈ, ການຕຳຫນິ, ການສິດສອນ, ແລະຄຳສັນຍາຂອງພຣະເຢຊູຄຣິດ ແມ່ນເພື່ອເຮັດໃຫ້ເຮົາມີຄວາມ ລະມັດລະວັງໃນຄວາມຈົງຮັກພັກດີ ໃນຄວາມຮັກ ເພື່ອພຣະຄຣິດ. ຈົ່ງໃຫ້ຄຣິສຕະຈັກ ເປັນຄຣິສຕະຈັກທີ່ແທ້ຈິງເຖີດ !!!!!!!!!!

<u>ຄຳຖາມ</u>

1. ເຮົາຈະລະມັດລະວັງຢ່າງໃດ ໃນການເຄື່ອນໄຫວ ຖ້າພວກເຮົາຫາກຂາດຄວາມຮັກຈາກພຣະເຢຊູ?

2. ບໍ່ມີຄຣິສຕະຈັກໃດດອກ ທີ່ຢາກເປັນພໍອຸ່ນໆ. ຖ້າຢ່າງນັ້ນ ເປັນຫຍັງຈຶ່ງມີຄຣິສຕະຈັກພໍອຸ່ນໆ ຢູ່?

3. ຄຣິສຕະຈັກຊະມີນາ ໄດ້ຖືກເອີ້ນວ່າເປັນຄຣິສຕະຈັກທີ່ຮັ່ງມີ, ທຸກຍາກ . ເປັນຫຍັງຈຶ່ງວ່າຢ່າງນັ້ນ?

4. ຄຣິສຕະຈັກລາວດີເກອາໄດ້ຖືກເອີ້ນວ່າເປັນຄຣິສຕະຈັກທຸກຍາກ, ຮັ່ງມີ. ເປັນຫຍັງຈຶ່ງວ່າຢ່າງນັ້ນ?

5. ເປັນຫຍັງແຕ່ລະຄຣິສຕະຈັກຈຶ່ງບໍ່ໄດ້ຮັບຄຳສັນຍາວ່າຈະບໍ່ມີການຂົ່ມເຫັງ?

# ບົດຮຽນທີ 3
# ພຣະຄຣິດແມ່ນຄວາມໝາຍແຫ່ງຊີວິດ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 4:1-3; 5: 1-14
ຂໍ້ພຣະຄັມພີສຳລັບເບື້ອງຫລັງ: ພຣະນິມິດ ບົດທີ 4 ຫາ ບົດທີ 5
ຈຸດສຳຄັນຂອງບົດຮຽນນີ້: ກຸນແຈແຫ່ງປະຫວັດສາດແລະຊີວິດແມ່ນຢູ່ໃນພຣະຄຣິດ, ພຣະອົງແມ່ນພຣະຜູ້ຊ່ວຍ
ຄຳຖາມເພື່ອສຳຣວດ: ຈະພົບຄວາມໝາຍຂອງປະຫວັດສາດແລະຊີວິດໄດ້ຢູ່ໃສ?
ຈຸດປະສົງຂອງບົດຮຽນ: ເພື່ອຈະຊີ້ແຈງເຖິງໜ້າທີ່ຂອງພຣະຄຣິດໃນການຈັດຕຽມຄວາມໝາຍຂອງປະຫວັດສາດແລະຊີວິດຂອງພວກເຮົາ.

## ຄຳນຳ

ຄຳບອກເລົ່າຂອງສິດຍາພິບານທ່ານນຶ່ງກ່າວວ່າ: ເມືອງກະເລຕັນ ຕັ້ງຢູ່ຕາມຮ່ອມ ຕາມເຈີ່ຍພູ ໃນຣັຖໂອກລາໂຮມາ. ເມື່ອຂ້າພະເຈົ້າໄດ້ຖືກເອີ້ນໃຫ້ໄປຮັບໃຊ້ເປັນສິດຍາພິບານທີ່ເມືອງນັ້ນ. ເວລາເລີ້ມຕົ້ນໃຫມ່ໆ ຂ້າພະເຈົ້າຄິດວ່າທາງທີ່ດີຕ້ອງໄປຢ້ຽມຢາມປະຊາຊົນໃນແຖບນັ້ນ. ແຕ່ວ່າໃນເວລານັ້ນ 40 ປີ ຜ່ານມາແລ້ວແຜນທີ່ຂອງເມືອງຍັງບໍ່ທັນມີເທື່ອ. ດ້ວຍວ່າມີຫ້ວຍໜອງ ມີຮ່ອມພູ ຈຶ່ງເຮັດໃຫ້ຂ້າພະເຈົ້າຫລົງທາງຢູ່ເລື້ອຍໆ. ຂ້າພະເຈົ້າກໍໄດ້ໄປຫ້ອງການເມືອງເພື່ອໄປເບິ່ງວ່າຂອບເຂດຂອງເມືອງໄປເຖິງໃສກັນແທ້. ປານ ນັ້ນກໍຍັງເຮັດໃຫ້ຂ້າພະເຈົ້າຫລົງອີກຢູ່.

ໃນທີ່ສຸດ ຂ້າພະເຈົ້າກໍໄດ້ໄປຫາເມືອງອີກ ແລ້ວກໍໄປຢືມເອົາຮູບທີ່ຖ່າຍຈາກເຄື່ອງບິນ, ເພາະຮູບຖ່າຍ ເຮົາຈະເຫັນໄດ້ໃນມຸມແຕກຕ່າງກັນ. ການເບິ່ງມຸມເຮັດໃຫ້ເຫັນຄວາມແຕກຕ່າງ.

1. ກະສັດຜູ້ຊົງສະງ່າຜ່າເຜີຍ (4:1-3)

ຫລັງຈາກທີ່ໂຢຮັນໄດ້ບັນທຶກຂໍ້ຄວາມທີ່ພຣະຄຣິດມອບໃຫ້ເພື່ອຄຣິສຕະຈັກ, ລາວກໍສາມາດເຫັນປະຕູທີ່ໄຂຢູ່ໃນສວັນ (4:1). ສຽງທີ່ດັງຂຶ້ນຄ້າຍກັບສຽງພຣະຄຣິດທີ່ຕັກເຕືອນລາວເຖິງອານາຄົດຂ້າງໜ້າ. ໂຢຮັນ ຖືກເອີ້ນວ່າ "ຈົ່ງຂຶ້ນມາທີ່ນີ້" ນີ້ໝາຍຄວາມວ່າໂຢຮັນຈະໄດ້ເຫັນທິດທາງໃຫມ່, ເຫັນນິມິດໝາຍອັນໃຫມ່. ພຣະນິມິດ 4:2 ກ່າວວ່າ ທັນທີທັນໃດນັ້ນໂຢຮັນກໍປະກອບດ້ວຍພຣະວິນຍານບໍຣິສຸດ ແລະກໍປາກົດວ່າຕົວເອງກຳລັງຢູ່ໃນແຜ່ນດິນສວັນແລະກໍໄດ້ເຫັນທ່ານຜູ້ນຶ່ງປະທັບຢູ່ເທິງບັນລັງນັ້ນ.

ສຳລັບຂໍ້ຕໍ່ໄປນີ້ ແມ່ນຈະອະທິບາຍເຖິງພຣະລັກສະນະຂອງຜູ້ທີ່ນັ່ງຢູ່ເທິງຣາຊບັນລັງ, ທ່ານມີລັກສະນະເຫມືອນແກ້ວມະນີໂຊດແລະແກ້ວພິລາ ມີຣັສມີເຫມືອນຮຸ້ງກິນນ້ຳອ້ອມຮອບຣາຊບັນລັງ ຄ້າຍຄືແສງແກ້ວມໍຣະກົດ (4:3).ຈິນຕະນາພາບໄດ້ເນັ້ນໃຫ້ເຫັນເຖິງຄວາມງາມແລະຄວາມເຫລື້ອມລະຍິບລະຍັບຂອງຜູ້ທີ່ຢູ່ເທິງບັນລັງນັ້ນ. ຫົວທັດທີ່ເຮົາສາມາດເຫັນໄດ້ໃນເວລານີ້ແມ່ນສະແດງເຖິງຜູ້ປົກຄອງທີ່ມີອຳນາດສູງສຸດ ແລະຄວາມສະງ່າຜ່າເຜີຍແຫ່ງຄວາມບໍຣິສຸດທີ່ປາກົດຢູ່ຖ້າມກາງສິ່ງສາຣະພັດ. ໃນບົດທີ 4 ຊຶ່ງເປັນບົດທີ່ບັນລະຍາຍຮູບພາບຊຶ່ງອອກມາຈາກຈິນຕະນາພາບແລະສິ່ງເຫລົ່ານີ້ຈະກ່າວອອກມາວ່າ: ພຣະອົງເປັນພຣະເຈົ້າຂອງທຸກສິ່ງ, ເປັນພຣະເຈົ້າຂອງທຸກຢ່າງ, ແລະເປັນພຣະເຈົ້າຂອງທຸກໆຄົນທີ່ນະມັສການພຣະອົງ.

ໃນບົດທີ 4 ພວກເຮົາຈະໄດ້ເຫັນບົດເພງທີ່ກ່າວເຖິງຄວາມສະງ່າຜ່າເຜີຍຂອງພຣະເຈົ້າ. ຜູ້ອາວຸໂສ 24 ທ່ານນັ່ງຢູ່ເທິງບັນລັງທີ່ລ້ອມຮອບໄປດ້ວຍແກ້ວມໍຣະກົດ. ທ່ານເຫລົ່ານີ້ນຸ່ງຫົ່ມສີຂາວ ແລະມີມົງກຸດເປັນພວງມາລັຍສວມຢູ່ເທິງຫົວໃນຂະນະທີ່ກຳລັງຮ້ອງເພງ. ບົດເພງກໍແມ່ນບັນລະຍາຍເຖິງຄຸນຄ່າຂອງພຣະເຈົ້າທີ່ພຣະອົງສົມຄວນທີ່ຈະໄດ້ຮັບພຣະກຽດ, ພຣະສະງ່າຣາສີ, ແລະພຣະອຳນາດ ເພື່ອທຸກສິ່ງສາຣະພັດຊົງເປັນຂອງພຣະອົງ. ຜູ້ອາວຸໂສ 24 ທ່ານ ເບິ່ງເໝືອນວ່າຈະເປັນຕົວແທນໃຫ້ແກ່ 12 ເຜົ່າໃນພຣະຄັມພີເດີມ ແລະສາວົກ 12 ຄົນໃນພຣະຄັມພີໃໝ່.

ຕລອດວັນຕລອດຄືນພວກເຫລົ່ານີ້ຈະຮ້ອງເພັງກ່ຽວກັບຄວາມບໍຣິສຸດ ແລະການຊົງເປັນຢູ່ອັນຕລອດໄປຂອງພຣະອົງ. ບົດເພງນີ້ເຮັດໃຫ້ທວນຄືນເຖິງຄວາມຊົງຈຳໃນບົດເພງໃນເອຊາຢາ ບົດທີ 6.

ແນ່ນອນແລ້ວ ການເບິ່ງໃນແງ່ມຸມຕ້ອງມີຄວາມແຕກຕ່າງ. ຖ້າໃຜຜູ້ນຶ່ງຫາກເຫັນກໍຈະຕ້ອງແຕກຕ່າງກັບການເຫັນຂອງໂຢຮັນທີ່ເກາະປັດໂມ. ເວລານັ້ນໂຢຮັນໂດດດ່ຽວໃນການນະມັສການຮ່ວມກັບຜູ້ທີ່ເຊື່ອທັງຫລາຍ. ລາວລໍຄອຍເວລາທີ່ຈະໄດ້ຮ່ວມນະມັສການຮ່ວມກັບຜູ້ທີ່ເຊື່ອທັງຫລາຍ. ໃນສະພາບການເຊັ່ນນີ້ໂຢຮັນເຫັນວ່າຄົງເປັນໄປໄດ້ຍາກເພາະອຳນາດຂອງກຸງໂຣມເຮັດໃຫ້ຊີວິດຂອງໂຢຮັນກາຍເປັນເຊັ່ນນີ້. ຢ່າງໃດກໍຕາມ ເຖິງເຂົາຈະມີອຳນາດຫລາຍປານໃດກໍຕາມ ພຣະເຈົ້າກໍຍັງປົກຄອງເໜືອພວກເຂົາຢູ່.

ຜູ້ອ່ານແລະຜູ້ຟັງຈົດໝາຍຂອງໂຢຮັນໃນພຣະນິມິດ 4 ນີ້ຄົງຈະໄດ້ຮັບຄຳໜູນໃຈ ແລະຢາກຈະບອກກັບທ່ານທັງຫລາຍວ່າພຣະເຈົ້າປົກຄອງທຸກຢ່າງ. ເຊື່ອໃນພຣະເຈົ້າ. ພຣະອົງເປັນຜູ້ບໍຣິສຸດ. ພຣະອົງສົມຄວນໄດ້ຮັບການສັຣເສີນ.

2. <u>ພຣະເມສານ້ອຍຜູ້ທີ່ສົມຄວນ (5:1-11)</u>

ໃນຊົ່ວຂະນະນຶ່ງທີ່ພຣະຫັດກ້ຳຂວາຂອງພຣະອົງ ຂ້າພະເຈົ້າໄດ້ເຫັນໜັງສືມ້ວນນຶ່ງຊຶ່ງມີໜັງສືຂຽນໄວ້ທັງສອງຂ້າງແລະໄດ້ປະທັບຕາໄວ້ເຈັດດວງ. ບັນດາເຫລົ່າທູດສວັນທັງຫລາຍຢາກຈະເຫັນວ່າໃຜເດນໍຈະສາມາດແກະຕານີ້ໄດ້. ທູດສວັນຜູ້ມີຣິດອຳນາດເໜືອກວ່າໝູ່ຖາມຂຶ້ນ. (5:2) ໃນສວັນບໍ່ມີຜູ້ສາມາດ, ເທິງແຜ່ນດິນໂລກບໍ່ມີໃຜສາມາດ ແລະໃຕ້ພື້ນດິນກໍບໍ່ມີຜູ້ໃດສາມາດ. ໂຢຮັນຮ້ອງໄຫ້ເພາະບໍ່ມີຜູ້ໃດສົມຄວນທີ່ຈະເປີດໜັງສືນີ້ອອກໄດ້.

(5:5) ຜູ້ນຶ່ງໃນພວກຜູ້ອາວຸໂສໄດ້ບອກໂຢຮັນວ່າ "ຢ່າຮ້ອງໄຫ້ເລີຍ" ເຜົ່າແຫ່ງຢູດາ, ເຊື້ອສາຍຂອງດາວິດຜູ້ນັ້ນລະຈຶ່ງຈະສາມາດແກະຕາທັງເຈັດນີ້ໄດ້. ຄຳບອກເລົ່າຢ່າງແທ້ຈິງໃນບົດທີ 5 ນີ້ ບໍ່ແມ່ນກ່ຽວກັບໜັງສືມ້ວນເທົ່ານີ້. ແຕ່ແມ່ນພຣະເມສານ້ອຍຜູ້ດຽວເທົ່ານັ້ນທີ່ສົມຄວນ. ຖ້າມກາງພວກຜູ້ອາວຸໂສ ໂຢຮັນໄດ້ເຫັນພຣະເມສານ້ອຍປະທັບຢືນຢູ່ເໝືອນວ່າພຣະອົງຊົງຖືກປົງພຣະຊົນແລ້ວ. ຊຶ່ງໝາຍຄວາມວ່າພຣະອົງໄດ້ສຳເຣັດໃນການຊົງໄຖ່ເພື່ອຄວາມບາບຂອງມະນຸດແລ້ວ. (5:6) ຈົ່ງຈຳຄຳຂອງໂຢຮັນບັບຕິສໂຕທີ່ກ່າວວ່າ "ແລະທ່ານໄດ້ເຫັນພຣະເຢຊູຂະນະທີ່ພຣະອົງຊົງດຳເນີນແລະກ່າວວ່າ ຈົ່ງເບິ່ງພຣະເມສານ້ອຍຂອງພຣະເຈົ້າ" (ໂຢຮັນ 1:36)

ພຣະເມສານ້ອຍຊົງມີເຈັດເຂົາແລະມີຕາເຈັດດວງ ຊຶ່ງເປັນວິນຍານທັງເຈັດຂອງພຣະເຈົ້າ. ແຕ່ລະເຂົາໝາຍເຖິງຄວາມແຂງແຮງຂອງພຣະອົງ ແລະເລກເຈັດກໍເປັນເລກທີ່ຄົບຖ້ວນຊຶ່ງພະລັງແລະອຳນາດ ແລະຄວາມແຂງແຮງຂອງພຣະອົງກໍຄົບຖ້ວນ. ພຣະເມສານ້ອຍຍັງມີຕາເຈັດຕາ ຊຶ່ງໝາຍຄວາມວ່າວິນຍານທັງເຈັດຂອງພຣະເຈົ້າ ອັນນຶ່ງເລກເຈັດເປັນເລກທີ່ຄົບຖ້ວນ. ພຣະເຈົ້າເປັນຜູ້ທີ່ຄົບຖ້ວນດ້ານຄວາມບໍຣິສຸດແລະສາມາດກະທຳໄດ້ທຸກສິ່ງທຸກຢ່າງ.

ເມື່ອພຣະເມສານ້ອຍຊົງຮັບມ້ວນໜັງສືຈາກພຣະຫັດຂວາຂອງພຣະອົງຜູ້ຊົງປະທັບທີ່ບັນລັງແລ້ວ (5:7) ສັດທັງສີ່

ແລະຜູ້ອາວຸໂສທັງຊາວສີ່ຄົນກໍຄຸເຂົ່າລົງຂາບບັງຄົມພຣະເມສານ້ອຍ. ແລະເຂົາທັງຫລາຍກໍຮ້ອງເພງໃຫມ່ວ່າ: "ພຣະອົງຊົງເປັນຜູ້ສົມຄວນ ຈະຊົງຮັບມ້ວນຫນັງສື ແລະແກະຕາມ້ວນຫນັງສືອອກ." (5:8-10) ໂດຍການຄືນພຣະຊົນຂອງພຣະເຢຊູນັ້ນແຫລະ, ພຣະເຈົ້າຈຶ່ງຮັບຮອງການສຳເຣັດວຽກງານຂອງອົງພຣະເຢຊູຢູ່ເທິງໄມ້ກາງແຂນຊຶ່ງເປັນການພຽງພໍໃນການໄຖ່ບາບຂອງມວນມະນຸດທັງປວງ. ທຸກໆຄົນທີ່ໄວ້ວາງໃຈໃນພຣະອົງກໍຈະໄດ້ຮັບຄວາມລອດ. ຄວາມບາບຂອງເຂົາຖືກຍົກແລ້ວ ແລະເຂົາກໍຈະຖືກຫຸ້ມຫໍ່ດ້ວຍຄວາມຊອບທັມຂອງພຣະເຢຊູ.

ພຣະຄຣິດຊົງສ້າງຄຣິສຕຽນ ໃຫ້ມາຢູ່ໃນຂອບເຂດຂອງຜູ້ເຜີຍພຣະທັມ ແລະໃນຣາຊອານາຈັກຂອງພຣະເຈົ້າ ແລະພວກເຂົາຈະໄດ້ເປັນຜູ້ຄອບຄອງແຜ່ນດິນໂລກ.(5:10) ພວກເຂົາຈະບໍ່ໄດ້ຜ່ານການຕັດສິນເພາະພຣະຄຣິດຊົງໄຖ່ໄວ້ແລ້ວ.

ຂໍ້ທີ 11 ກ່າວວ່າ ໂຢຮັນໄດ້ເຫັນແລະໄດ້ຍິນສຽງເຫລົ່າທູດສວັນເປັນໂກດໆແສນໆຮ້ອງສຽງດັງໆວ່າ "ພຣະເມສານ້ອຍຜູ້ຖືກປົງພຣະຊົນແລ້ວນັ້ນ ເປັນຜູ້ສົມຄວນໄດ້ຮັບຣິດເດດ ຊັບສົມບັດ ປັນຍາ ອານຸພາບ ກຽດ ພຣະສະງ່າຣາສີແລະຄຳສັຣເສີນຕ່າງໆຈຶ່ງເປັນຂອງພຣະອົງ. (5:12)

ຂໍ້ 13 ໂຢຮັນໄດ້ຍິນສຽງສິ່ງທີ່ມີຊີວິດທັງຫມົດ ທັ້ງໃນສວັນ ໃນແຜ່ນດິນໂລກແລະໃຕ້ແຜ່ນດິນ ໃນມະຫາສມຸດສິ່ງທັງຫມົດໃນທີ່ເຫລົ່ານັ້ນຮ້ອງວ່າ " ຂໍໃຫ້ຄຳສັຣເສີນແລະກຽດ ແລະພຣະສະງ່າຣາສີແລະລິດເດດຈົ່ງມີແດ່ພຣະອົງຜູ້ປະທັບຢູ່ເທິງພຣະທີ່ນັ່ງ ແລະແດ່ພຣະເມສານ້ອຍຕລອດໄປເປັນນິດ. ແລະຂໍ້ທີ 14 ກ່າວວ່າສັດທັງຫລາຍກໍຮ້ອງວ່າອາແມນ ແລະອາວຸໂສເຫລົ່ານັ້ນກໍຄຸເຂົ່າລົງຂາບນະມັສການ.

ໂປໂລໄດ້ກ່າວເຖິງຄວາມເປັນພຣະເຈົ້າຂອງພຣະອົງວ່າ ທຸກເຂົ່າໃນສວັນແລະໃນແຜ່ນດິນໂລກຈະຄຸລົງຂາບພຣະເຢຊູ. ແລະເພື່ອທຸກລີ້ນຈະຍອມຮັບວ່າພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ. (ຟີລິປປອຍ 2:10-11) ພວກເຮົາທັງຫມົດອາດຈະບໍ່ເຂົ້າໃຈທັງຫມົດສິ່ງທີ່ໂຢຮັນແລະໂປໂລໄດ້ເຫັນ. ສິ່ງທີ່ພວກເຮົາຮູ້ກໍຄືວ່າມີການນະມັສການໃນສວັນພຣະອົງຊົງນັ່ງເທິງພຣະບັນລັງ (5:13)

ການເຫັນນິມິດຫມາຍຈາກມຸມທີ່ໂຢຮັນໄດ້ເຫັນນີ້ ແມ່ນການຫນູນໃຈຄຣິສຕຽນໃຫ້ເຫັນວ່າເຖິງຈະມີການຂົ່ມເຫັງປານໃດກໍຕາມ ຈົ່ງຕັ້ງຫມັ້ນໃນພຣະຄຣິດຜູ້ຊົງໄດ້ຮັບຊັຍຊະນະ. ພວກເຮົາອາດຈະຫຍຸ້ງຍາກມືດມົວ ແຕ່ເວລາພຣະເຢຊູສະເດັດມາແລ້ວພຣະອົງຈະຊົງເປັນແສງສະວ່າງ.

<u>ຄຳຖາມ:</u>

1. ອ່ານຄືນອີກ ພນມ. 4-5, ຈະອະທິບາຍຕຣີເອການຸພາບຢ່າງໃດ ?

2. ພຣະເຢຊູມີຈັກຊື່ທີ່ໃຊ້ໃນພຣະນິມິດບົດທີ 5, ມີຊື່ໃດແດ່?

3. ທ່ານຄິດວ່າແນວໃດ ໃນຄຳເວົ້າທີ່ທູດສວັນຖາມວ່າ "ໃຜເປັນຜູ້ທີ່ສົມຄວນຈະແກະຕາແລະພືຫນັງສືມ້ວນນັ້ນອອກ?" ຕໍ່ຄຳຖາມນີ້ທູດສວັນຫວັງເອົາຄຳຕອບຫລືບໍ່?

4. ບົດຄວາມຕອນໃດທີ່ທ່ານເຫັນວ່າມັນສອດຄ້ອງກັບຊີວິດປະຈຳວັນໃນທຸກວັນນີ້?

## <u>ບົດຮຽນທີ 4</u>
## <u>ແກະຕາປະທັບຂອງໜັງສືມ້ວນຂອງພຣະເຈົ້າ</u>

---

<u>ຂໍ້ພຣະຄຳພີສຳລັບບົດຮຽນ:</u> ພຣະນິມິດ 6
<u>ຂໍ້ພຣະຄຳພີສຳລັບເບື້ອງຫລັງ:</u> ພຣະນິມິດ 6
<u>ຈຸດສຳຄັນຂອງບົດຮຽນນີ້:</u> ເຫດການສັບປ່ຽນແລະປະຫວັດສາດປັ່ນປ່ວນຮ້າຍແຮງປານໃດກໍຕາມ ພຣະເຈົ້າຊົງເປັນອົງພຣະຜູ້ເປັນເຈົ້າຂອງເຫດການທັງປວງ.
<u>ຄຳຖາມເພື່ອການສຳຣວດ:</u> ໃນໂລກທີ່ປັ່ນປ່ວນຢ່າງນີ້ ພວກເຮົາມີຄວາມຫວັງອັນໃດແດ່?
<u>ຈຸດປະສົງຂອງບົດຮຽນນີ້:</u> ອະທິບາຍເຖິງຄວາມໝາຍແລະຊີ້ບອກເຖິງຄວາມກ່ຽວຂ້ອງຂອງຕາທັງຫົກ.

### <u>ບົດຮຽນ</u>

<u>ຄຳນຳ</u>
ໂຢຮັນໄດ້ເປີດເຜີຍໃຫ້ເຫັນວ່າ ເຖິງແມ່ນວ່າໄພ່ພົນຂອງພຣະເຈົ້າຈະຖືກນາບຂູ່ຈາກອຳນາດອັນໃດກໍຕາມໃນສັງຄົມນີ້ ພຣະເຈົ້າຊົງເປັນອົງພຣະຜູ້ເປັນເຈົ້າຂອງປະຫວັດສາດ.

1. <u>ແກະຕາທັງສີ່</u> (6:1-7)
ພຣະເມສານ້ອຍເປັນສັນຍາລັກສຳລັບພຣະຄຣິດທີ່ຖືກນຳໄປຂ້າແລະເປັນພຣະຄຣິດທີ່ຄືນພຣະຊົນຂຶ້ນມາອີກ. ບໍ່ມີຜູ້ໃດສົມຄວນທີ່ຈະແກະຕາປະທັບແລະມາຍມ້ວນໜັງສືນີ້ (ໃຫ້ອ່ານພຣະນິມິດ ບົດທີ 5). ຕາທີ່ປະທັບໃສ່ໜັງສືມ້ວນນັ້ນແມ່ນຕາປະທັບອັນແທ້ຈິງຂອງພຣະເຈົ້າ. ແກະຕາປະທັບທັງສີ່ອັນທຳອິດເປັນການປະກາດການມາຂອງຜູ້ທີ່ຂີ່ມ້າສີ່ຄົນ ແລະການມາຂອງພວກເຂົາຈະເປັນຄວາມຈົດຈຳໃຫ້ແກ່ຄຣິສຕະຈັກຕລອດໄປ.

ຜູ້ທີ່ຂີ່ມ້າແຕ່ລະຄົນນັ້ນມີຄວາມໝາຍອັນໃດແດ່ສຳລັບຜູ້ທີ່ອ່ານຈົດໝາຍຂອງໂຢຮັນໃນສມັຍນັ້ນ ແລະຈະນຳມາໃຊ້ອັນໃດໄດ້ແດ່ສຳລັບພວກເຮົາໃນສມັຍນີ້?

ຜູ້ທີ່ນຶ່ງຂີ່ມ້າສີຂາວມີຖືທະນູແລະໄດ້ຮັບພວງມາລັຍ. ເມື່ອອອກເສິກຍາມໃດກໍຕາມເພິ່ນຈະໄດ້ຮັບຊັຍຊະນະ. ເມື່ອກ່າວເຖິງຜູ້ທີ່ຂີ່ມ້າສີຂາວແລ້ວ ຜູ້ທີ່ອ່ານຈົດໝາຍຂອງໂຢຮັນເກືອບຈະໝົດທຸກຄົນຮູ້ຈັກເຣື່ອງລາວຂອງນັກຮົບຂອງຊາວພາເທັຽ (Parthian). ເຖິງແມ່ນວ່ານັກຮົບຂອງຈັກກະພັດໂຣມຈະເກັ່ງປານໃດກໍຕາມ
ພວກເຂົາບໍ່ສາມາດຈະຢຶດເອົາ
ຣາຊອານາຈັກນີ້ໄດ້. ຣາຊອານາຈັກຂອງຊາວພາເທັຽ (Parthian Empire)
ຕັ້ງຢູ່ທິດຕາເວັນອອກຂອງແມ່ນ້ຳເອີຟຣາດ
(Euphrates River). ເມື່ອຈັກກະພັດໂຣມປົກຄອງໄດ້ພຽງແຕ່ບາງພາກສ່ວນຂອງຣາອາຊ
ນາຈັກນີ້ໃນເວລາອັນສັ້ນໆ
ເທົ່ານັ້ນ ຈັກກະພັດໂຣມຍັງມີຄວາມຢ້ານນັກຮົບຂອງພວກພາເທັຽຢູ່. ຈັກກະພັດໂຣມມີພະລັງທະຫານແລະອາວຸດຄົບຊຸດໄດ້ຊັຍຊະນະທຸກປະເທດທີ່ພວກເຂົາເຂົ້າຢຶດຄອງ ແຕ່ພວກເຂົາຍັງມີຄວາມຢ້ານວ່າຈັກກະພັດພາເທັຽອາດຈະເຂົ້າຈົມຕີແລະຢຶດເອົາແຜ່ນດິນຂອງໂຣມໄດ້.

ຈາກພາບຂອງຜູ້ທີ່ຂີ່ມ້າຜູ້ທີນຶ່ງນັ້ນ  ໂຢຮັນໄດ້ໃຫ້ຄວາມໝັ້ນໃຈແກ່ຊາວຄຣິສຕຽນຈາກເອເຊັຽນ້ອຍ (Asia Minor)
ທີ່ໄດ້ຮັບຄວາມລຳບາກນັ້ນວ່າ ອຳນາດຂອງໂຣມທີ່ກຳລັງຂົ່ມເຫງພວກເຂົານັ້ນຈະບໍ່ຄົງຢູ່ຕລອດໄປ. ຈັກກະພັດຜູ້ເກ່ງກ້າທີ່ໃຊ້ດາບກໍຈະຕາຍຍ້ອນດາບ. ບໍ່ວ່າແຕ່ຣາຊອານາຈັກໂຣມຫລືຈັກກະພັດຂອງພວກເຂົາຈະບໍ່ຄົງຢູ່ຕລອດໄປ. ພຣະເຈົ້າຈະຂົ່ມຊາວໂຣມທີ່ພູມໃຈໃນຕົວເອງລົງແລະພຣະອົງຈະໃຫ້ໄພ່ພົນຂອງພຣະອົງໄດ້ຮັບຄວາມບັນເທົາ.
ໃນທຳນອງດຽວກັນ ຄຣິສຕຽນທີ່ຖືກຂົ່ມເຫງໃນສມັຍໃດກໍຕາມຈະໄດ້ຮັບຄວາມບັນເທົາຈາກການປ່ຽນແປງຂອງແຕ່ລະສມັຍຂອງອຳນາດການປົກຄອງອັນໂຫດຮ້າຍ.   ພຣະເຈົ້າຈະບໍ່ອະນຸຍາດໃຫ້ການປົກຄອງຢ່າງນີ້ສືບຕໍ່ຕລອດໄປ. ການປົກຄອງຂອງພວກເຂົາຈະຫລົ້ມຈົມທັນຕາເຫັນຢ່າງແນ່ນອນ. ໃນສມັຍຂອງພວກເຮົານີ້ ພວກເຮົາເປັນພຍານໄດ້ກ່ຽວກັບຄວາມຫລົ້ມຈົມຂອງຣະບອບສັງຄົມນິຍົມຂອງປະເທດໂຊວຽດ. ເຫດການດັ່ງກ່າວເຮັດໃຫ້ຄົນໃນໂລກປລາດໃຈແລະຄຣິສຕຽນໃນຂົງເຂດນັ້ນໄດ້ຮັບຄວາມບັນເທົາຢ່າງຫລວງຫລາຍ.

ມີບາງຄົນຕີຄວາມໝາຍຂອງພຣະທັມຕອນນີ້ວ່າ    ຜູ້ທີ່ຂີ່ມ້າຜູ້ທີນຶ່ງເຂົ້າໃຈວ່າອາດຈະແມ່ນພຣະຄຣິດຜູ້ທີ່ໄດ້ຮັບຊັຍ. ແນ່ນອນຢູ່ແລ້ວ ພຣະຄຣິດຊົງເຜີຍພຣະລັກສະນະຂອງພຣະອົງໃນບົດທີ 19:11-16   ພຣະອົງຊົງເປັນຈອມທັບຂອງກອງທັບສວັນແລະປະທັບເທິງຫລັງມ້າຂາວ. ຖ້າພວກເຮົາຫາກເຫັນພ້ອມຕາມການຕີຄວາມໝາຍທີ່ກ່າວມາກ່ອນນັ້ນ ຜູ້ທີ່ຂີ່ມ້າຜູ້ທີນຶ່ງແມ່ນພຣະຄຣິດຜູ້ຊົງໄດ້ຮັບຊັຍຊະນະ  ແລະພຣະອົງຊົງປົກຄອງເໜືອອຳນາດທັງປວງຂອງປະຫວັດສາດ. ພຣະອົງໄດ້ອອກໄປກ່ອນຜູ້ທີ່ຂີ່ມ້າຜູ້ອື່ນແລະຄວາມຫາຍະນະກໍຕາມມາ. ຜູ້ທີ່ຂີ່ມ້າທີ່ຕາມມານັ້ນຢູ່ໃຕ້ການຊົງນຳຂອງພຣະອົງ ພວກເຂົາບໍ່ສາມາດຈະທຳອັນໃດເກີນກວ່າທີ່ມອບໝາຍໃຫ້.  ຜູ້ທີ່ຂີ່ມ້າແລະຄວາມຫາຍະນະທີ່ເກີດຂຶ້ນນັ້ນແມ່ນເພື່ອໃຫ້ເປັນໄປຕາມພຣະປະສົງຂອງພຣະເຈົ້າ.

ໃນພຣະທັມຕອນນີ້ຈະຕີຄວາມໝາຍທາງໃດກໍຕາມ ຂໍ້ຄວາມໝາຍສຳຄັນນັ້ນມີຢູ່ວ່າ: ພຣະເຈົ້າໃນພຣະຄຣິດຊົງເລັງເຫັນເຫດການອັນລຳບາກຂອງໄພ່ພົນຂອງພຣະອົງ ແລະພຣະອົງຈະຊົງກະທຳອັນໃດອັນນຶ່ງທີ່ໃຫ້ມີຄວາມໝາຍແລະມີທາງອອກໃນຄວາມລຳບາກຂອງພວກເຂົາ ເຊັ່ນໃນກໍຣະນີນີ້ ພຣະຄຣິດຈະເປັນຜູ້ສັ່ງໃຫ້ຜູ້ທີນຶ່ງຂີ່ມ້າອອກໄປເພື່ອຈະໄດ້ຊັຍຊະນະ ຫລືພຣະອົງເອງຈະປະທັບເທິງຫລັງມາຕົວທີນຶ່ງກໍຕາມ.

ຜູ້ທີສອງຂີ່ມ້າຕົວສີເລືອດສົດ. ຜູ້ທີສອງໄດ້ຮັບດາບໃຫຍ່ແລະໄດ້ຮັບອຳນາດໃຫ້ສົ່ງເສີມມະນຸດຂ້າຟັນກັນແລະທຳຮ້າຍສັນຕິສຸກໄປຈາກໂລກ.  ສຳລັບຜູ້ທີ່ອ່ານຈົດໝາຍຂອງໂຢຮັນຮູ້ແລ້ວວ່າ ຜູ້ທີ່ຂີ່ມາຕົວນີ້ແມ່ນສັນຍາລັກຂອງສົງຄາມ. ຈັກກະພັດໂຣມໃຊ້ຄວາມໂຫດຮ້າຍກົດຂີ່ຈິດໃຈຂອງຄົນອື່ນ ຈຶ່ງເປັນເຫດໃຫ້ມີການຕໍ່ສູ້.   ໂຢຮັນໄດ້ສອນວ່າຜູ້ທີ່ບູຊາອຳນາດແລະຊີງຊັຍຊະນະກໍກາຍເປັນເຫຍື່ອຂອງສົງຄາມ.

ຜູ້ທີສາມຂີ່ມ້າສີດຳເປັນສັນຍາລັກຂອງເຣື່ອງຄວາມປັ່ນປ່ວນຂອງເສຖກິດ ໃນຮູບຂອງຄວາມຂາດແຄນ ຄ່າຄອງຊີບຂຶ້ນສູງແລະສັງຄົມເກີດຄວາມຕຶງຄຽດ.   ປະຊາຊົນໃນສມັຍສິບປີຫລັງຂອງສັຕວັດທີນຶ່ງນັ້ນເຂົ້າໃຈດີເຖິງຄວາມເຈັບປວດຂອງບາດແຜສົງຄາມອັນຕໍ່ເນື່ອງຢູ່ບໍ່ຂາດ.  ຄົນທຸກຍາກໄດ້ຮັບຄວາມລຳບາກກ່ອນໝູ່.  ພວກເຂົາປະເຊີນກັບຣາຄາຂອງສິນຄ້າແລະອາຫານຂຶ້ນສູງ ຄ່າຈ້າງຂອງຄ່າແຮງງານມື້ນຶ່ງ (ນຶ່ງເດນາຣິອົນ) ຈົນບໍ່ສາມາດຈະຊື້ອາຫານໃຫ້ພຽງພໍໃນແຕ່ລະວັນ ເຊັ່ນເຂົ້າບາເລຫລືເຂົ້າຂວ້າງ.  ສຳລັບຄົນຮັ່ງມີນັ້ນກໍບໍ່ກະທົບກະເທືອນປານໃດໃນຕອນເລີ້ມແລກ.  ສິນຄ້າທີ່ມີຣາຄາສູງ ເຊັ່ນນ້ຳມັນແລະເຫລົ້າແວງກໍມີໄວ້ສຳລັບຕລາດຢູ່ໃນຄາວຕ້ອງການ.  ໃນຂນະທີ່ຜູ້ຫິວກໍຫິວຈົນບໍ່ມີກິນແລະຜູ້ມີກິນກໍມີຈົນເຫລືອລົ້ນ ຄວາມປັ່ນປ່ວນກໍຍ່ອມເກີດຂຶ້ນ.

ຜູ້ສຸດທ້າຍຂີ່ມ້າສີຂຽວອ່ອນແລະຜູ້ນັ້ນມີຊື່ວ່າມັດຈຸຣາດ ແລະແດນມໍຣະນາກໍຕິດຕາມມານຳ. ຄວາມຕາຍແລະແດນມໍ

ຣະມາໄດ້ຮັບເອົາເສດຂອງສົງຄາມອັນຍາວນານທີ່ຫລີກລ້ຽງບໍ່ໄດ້: ຕາຍຍ້ອນຄວາມອຶດຢາກ ພຍາດແລະການຂ້າຟັນລັນແທງ. ດ້ວຍພາບພົດອັນສຸດທ້າຍ ໂຢຮັນໄດ້ວາດພາບໃຫ້ເຫັນການທໍາຮ້າຍຕົນເອງຂອງຣາຊອານາຈັກໂຣມ ດ້ວຍວ່າຜູ້ປົກຄອງຂອງໂຣມບັງຄັບໃຫ້ປະຊາຊົນຂອງທຸກຊົນຊາດທີ່ຢູ່ໃຕ້ອໍານາດຂອງພວກເຂົາ ໃຫ້ນະມັສການຈັກກະພັດແທນພຣະເຈົ້າ ພວກເຂົາສ້າງຄວາມປັ່ນປ່ວນ ແລະໃຊ້ອໍານາດບັງຄັບຄຣິສຕະຈັກໃຫ້ເຮັດໄປຕາມແນວທາງຂອງພວກເຂົາ.

2. <u>ແກະຕາທີຫ້າ</u> (6:9-11)

ພຣະເມສາໄດ້ແກະຕາທີຫ້າເພື່ອເປີດເຜີຍໃຫ້ເຫັນວ່າ ຄຣິສຕຽນຖືກຂ້າຍ້ອນວ່າພວກເຂົາບໍ່ຍອມນະມັສການຂາບໄຫວ້ຈັກກະພັດໂຣມ. ຜູ້ທີ່ສັດຊື່ແລະຈົ່ງຮັກພັກດີຕໍ່ພຣະເຢຊູຕາຍຍ້ອນຄວາມເຊື່ອຂອງພວກເຂົາ. ເມື່ອໃດໜໍພຣະເຈົ້າຈຶ່ງຈະສິ້ນພຣະທັຍ(ໃຈ) ພິສູດໃຫ້ເຫັນວ່າພຣະອົງເປັນຫ່ວງ ແລະທໍາການຕໍ່ສູ້ຜູ້ທີ່ຂົ່ມເຫງຄຣິສຕຽນ?

ຄໍາຕອບຂອງໂຢຮັນນັ້ນຄືວ່າ ພຣະເຈົ້າບໍ່ເຄີຍລືມໄພ່ພົນຂອງພຣະອົງເລີຍຮ່ວມທັງຜູ້ທີ່ຖືກຂ້າຍ້ອນຄວາມເຊື່ອອີກດ້ວຍ. ພຣະອົງຊົງນໍາເອົາດວງວິນຍານຂອງພວກເຂົາໄປໄວ້ໃຕ້ແທ່ນບູຊາໃນສວັນ. ວິນຍານເຫລົ່ານັ້ນໄດ້ຮ້ອງຂຶ້ນວ່າ "ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ບໍຣິສຸດແລະທ່ຽງແທ້ ຍັງດົນປານໃດໜໍພຣະອົງຈຶ່ງຈະຊົງພິພາກສາ ຕອບສນອງຄົນທັງຫລາຍທີ່ຢູ່ເທິງແຜ່ນດິນໂລກທີ່ໄດ້ຂ້າພວກຂ້າພະອົງນັ້ນ?" (ພຣະນິມິດ 6:10). ຜູ້ທີ່ຖືກຂ້າມີຄວາມຮູ້ສຶກອັນແຮງກ້າຢາກຮູ້ວ່າພຣະເຈົ້າຈະຖ້າດົນປານໃດຈຶ່ງຈະຕັດສິນໃຫ້ຄວາມເປັນທັມແກ່ພວກເຂົາ. ພຣະອົງຊົງປອບໃຈພວກເຂົາວ່າເວລານັ້ນຍັງບໍ່ທັນມາເຖິງເທື່ອ. ພຣະອົງຊົງປະທານເສື້ອຂາວໃຫ້ພວກເຂົາ ຊຶ່ງເປັນສັນຍາລັກໃຫ້ເຫັນວ່າພຣະອົງຊົງຊໍາຣະພວກເຂົາໃຫ້ບໍຣິສຸດ.

ຈາກພຣະທັມຕອນນີ້ ໂຢຮັນໄດ້ໃຫ້ຄວາມເລົ້າໂລມໃຈຄຣິສຕຽນທີ່ຖືກຂົ່ມເຫງໃນສມັຍກ່ອນແລະສມັຍນີ້ນໍາ. ປະຫວັດສາດອັນເກົ່າແກ່ແລະສມັຍປະຈຸບັນໄດ້ເປີດເຜີຍໃຫ້ຮູ້ວ່າ ຜູ້ທີ່ເຊື່ອຈະສູ້ທົນຕໍ່ຄວາມທຸກຍາກລໍາບາກໄປຈົນເຖິງທີ່ສຸດແລະຍອມຕາຍດ້ວຍຄວາມກ້າຫານ ໃນເມື່ອພວກເຂົາເຊື່ອວ່າພຣະເຈົ້າຊົງຫລຽວເຫັນພວກເຂົາໃນຂນະທີ່ພວກເຂົາໄດ້ຮັບຄວາມລໍາບາກ ພຣະອົງຈະຊົງເບິ່ງແຍງພວກເຂົາຕລອດໄປແລະຊົງໃຫ້ຄວາມເປັນທັມແກ່ພວກເຂົາໃນບັ້ນປາຍ. ຜູ້ປົກຄອງຂອງຊາວໂຣມສະແດງຕົວເປັນເໝືອນກັບວ່າຕົນເປັນຜູ້ຊີ້ຂາດໃນຄວາມເປັນແລະຄວາມຕາຍຂອງມະນຸດ. ນິມິດຂອງໂຢຮັນໄດ້ກ່າວຕອບວ່າ: <u>ບໍ່ແມ່ນຢ່າງນັ້ນດອກ ພຣະເຈົ້າເປັນຜູ້ຊີ້ຂາດ ແລະນີ້ຄືຂ່າວດີສໍາລັບຊາວຄຣິສຕຽນ</u>.

3. <u>ແກະຕາທີຫົກ</u> (6:12-17)

ພັຍທັມຊາດເກີດຂຶ້ນ ນໍາຄວາມຫາຍະນະມາສູ່ແຜ່ນດິນເມື່ອພຣະເມສານ້ອຍແກະຕາທີຫົກອອກ. ໂຢຮັນເຫັນແຜ່ນດິນສະນັ່ນຫວັ່ນໄຫວເກີດຂຶ້ນໃນຣາຊອານາຈັກໂຣມ. ຄຣິສຕຽນທີ່ອາສັຍຢູ່ໃນເຂດເອເຊັຽນ້ອຍກໍຄຸ້ນເຄີຍໃນເຫດການດັ່ງກ່າວ. ທີ່ຜ່ານມາແລະປະຈຸບັນກໍຕາມ ໃນຂົງເຂດນັ້ນປະເຊີນກັບຄວາມເສັຽຫາຍຈາກແຜ່ນດິນໄຫວຢູ່ຕລອດມາ. ຊາວໂຣມບໍ່ເຄີຍລືມເຫດການພູເຂົາໄຟລະເບີດແລະແຜ່ນດິນຫວັ່ນໄຫວອັນໃຫຍ່. ພົມເພ (Pompeii) ຖືກທໍາຮ້າຍຈົມລົງໃຕ້ມະຫາສມຸດໃນປີຄຣິສຕະສັກຣາດ 79. ຕາມການລາຍງານຈາກເຫດການທີ່ໄດ້ບັນທຶກໄວ້ວ່າ ແຜ່ນດິນສັ່ນສະເທືອນຢ່າງແຮງ ພູເຂົາໄຟລະເບີດສົ່ງສຽງດັງແລະບາງສ່ວນເຈື່ອນລົງມາ ແລະຄວັນໄຟມືດມົວປົກຫຸ້ມຈົນບໍ່ເຫັນແສງຕາເວັນ. ຖ້າຫາກວ່າຜູ້ປົກຄອງຂອງໂຣມຍັງຂົ່ມເຫງຄຣິສຕຽນອີກຕໍ່ໄປ ພຣະເຈົ້າກໍຈະໃຊ້ພັຍວິບັດຕ່າງໆທີ່ມີຢູ່ໃນໂລກນີ້ທໍາຮ້າຍຣາຊອານາຈັກໂຣມອີກຕໍ່ໄປ.

ມີຜູ້ໃດແດ່ຈະຢືນຕໍ່ສູ້ກັບພຣະເຈົ້າໃນວັນພິພາກສາອັນໃຫຍ່ຂອງພຣະອົງ? ຕອນທ້າຍຂອງພຣະທັມບົດນີ້ຈະປິດທ້າຍວ່າ <u>ບໍ່ມີໃຜ</u>. ຣາຊອານາຈັກໂຣມຖືກຣຸກຣານ ສົງຄາມ ເສຖກິດ ແລະສັງຄົມປັ່ນປ່ວນ ພຍາດແຊກແຊງ ເກີດຄວາມອຶດຫິວແລະຄວາມຕາຍຄອບງໍາ ປະຊາຊົນໃນຣາຊອານາຈັກເກີດຄວາມສະທ້ານຫວັ່ນໄຫວ. ຕ່າງຄົນແລ່ນໜີໄປລີ້ຊ່ອນຢູ່ໃນ

ຖ້ຳແລະໃນຫວ່າງຫີນຕາມຮ່ອມພູ. ພວກເຂົາເຫັນນ້ຳມືຂອງພຣະເຈົ້າໃນຄວາມຫາຍະນະທີ່ເກີດຂື້ນແລະພວກເຂົາບໍ່ກ້າທີ່ຈະພົບໜ້າຂອງພຣະເຈົ້າ. ພວກເຂົາຄິດວ່າພວກເຂົາເປັນນາຍຂອງສາຣະພັດສິ່ງທີ່ຖືກສ້າງຂື້ນມາ ບັດນີ້ພວກເຂົາຖືກຕັດສິນຈາກພຣະຜູ້ຊົງສ້າງ. ໃນຈິດໃຈຂອງພວກເຂົາແລ້ວພວກເຂົາຮູ້ວ່າພວກເຂົາບໍ່ສາມາດຈະເຮັດອັນໃດໄດ້ເລີຍ.

ສລູບແລ້ວ ໂຢຮັນໄດ້ຂຽນເພື່ອນຳຄວາມຫວັງມາໃຫ້ຄຣິສຕຽນທີ່ຖືກຂົ່ມເຫງພາຍໃຕ້ການປົກຄອງຂອງຈັກກະພັດໂດມິເຊັນ (Domitian). ອັຄສາວົກເຂົ້າໃຈໃນສະພາບການລຳບາກຂອງພວກເຂົາ ແລະລາວຮູ້ວ່າບາງຄົນຢູ່ໃນຂັ້ນສິ້ນຫວັງ. ເບິ່ງເໝືອນກັບວ່າອຳນາດຂອງໂຣມນັ້ນຄົງເຫລືອລົ້ນແລະສືບໆໄປ. ນິມິດຂອງໂຢຮັນສະແດງໃຫ້ເຫັນວ່າພຣະເຈົ້າໄດ້ພົວພັນໃນປະຫວັດສາດເປັນສ່ວນຕົວຈຶ່ງສ້າງຄວາມໝັ້ນໃຈໃຫ້ເພື່ອນຄຣິສຕຽນຂອງລາວ. ການພິພາກສາຂອງພຣະເຈົ້າຈະຕົກໃສ່ຣາຊອານາຈັກໂຣມແລະການປົກຄອງອື່ນໆ ທີ່ຕິດຕາມບາດກ້າວຂອງໂຣມຢ່າງແນ່ນອນ. ການພິພາກສາຂອງພຣະເຈົ້າຈະພົບໄດ້ໃນບໍຣິເວນຂອງຊີວິດຂອງມະນຸດແລະຜ່ານທາງທັມຊາດຂອງມັນເອງ. ຄຣິສຕຽນສາມາດໄວ້ວາງໃຈໃນພຣະເຈົ້າໃນຊີວິດຂອງພວກເຂົາ ເຖິງແມ່ນວ່າສິ່ງແວດລ້ອມຈະເປັນຢ່າງໃດກໍຕາມຈະມີຊີວິດຢູ່ແລະຈະຕາຍກໍຕາມ. ພຣະເຈົ້າທີ່ມີຄວາມສາມາດເບັດອຳນາດຂອງປະຫວັດສາດໃຫ້ເປັນໄປຕາມນ້ຳພຣະທັຍຂອງພຣະອົງຈະຊົງສງວນໄພ່ພົນຂອງພຣະອົງໄວ້ໄດ້.

<u>ຄຳຖາມ</u>

1. ທ່ານເຄີຍຄິດຫລືບໍ່ວ່າພຣະທັມພຣະນິມິດນີ້ເປັນພຣະທັມທີ່ຂຽນໄປໃຫ້ຄຣິສຕຽນທີ່ກຳລັງຖືກຂົ່ມເຫງຢ່າງຮ້າຍແຮງ? ແມ່ນຫຍັງຄືສິ່ງທີ່ຄຣິສຕຽນແລະຄຣິສຕະຈັກຕ້ອງການໃນສະພາບການຢ່າງນີ້?

2. ທ່ານເຄີຍໄດ້ຍິນຄຣິສຕຽນຄົນໃດບໍ່ໃນສະຫະຣັດອາເມຣິການີ້ຖືກຂົ່ມເຫງ? ທ່ານຄິດວ່າໂຢຮັນຈະຕອບລາວວ່າຢ່າງໃດ?

3. ທ່ານຄິດວ່າໂຢຮັນພະຍາຍາມທີ່ຈະປອບໃຈຜູ້ທີ່ອ່ານຈົດໝາຍຂອງລາວ ເພື່ອໃຫ້ພວກເຂົາມີກິຣິຍາທ່າທາງຢ່າງໃດ? ກິຣິຍາທ່າທາງຢ່າງນີ້ຈະເຮັດໃຫ້ຊີວິດຂອງທ່ານແລະຄຣິສຕະຈັກຂອງທ່ານມີການປ່ຽນແປງຢ່າງໃດ?

4. ຈຳເປັນບໍ່ທີ່ທຸກໆຄົນຈະຕ້ອງເຫັນພ້ອມເຈາະຈົງໃສ່ໃນຄວາມເຊື່ອນັ້ນໆ ເພື່ອໃຫ້ປະເທດຊາດຈະເຣີນກ້າວໜ້າ? ຄວາມຜັກດັນໃຫ້ເຫັນພ້ອມດັ່ງກ່າວມານີ້ອາດຈະເຮັດໃຫ້ປະເທດຊາດຖືກຄຸກຄາມບໍ່?

# ບົດຮຽນທີ 5
# ພຣະເຈົ້າຊົງຄຸ້ມຄອງ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 7
ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້: ພຣະນິມິດ 7
ຈຸດສຳຄັນຂອງບົດຮຽນນີ້: ໃຫ້ຮູ້ວ່າພຣະເຈົ້າກໍຈະຄຸ້ມຄອງໄພ່ພົນຂອງພຣະອົງ.
ຄຳຖາມເພື່ອການສຳຣວດ: ເມື່ອສິ່ງບໍ່ດີເກີດຂຶ້ນໃນຊີວິດ ເຮົາຈະເຮັດແນວໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອໃຫ້ເຮົາເຂົ້າໃຈວ່າພຣະເຈົ້າຊົງເປັນໃຫຍ່ກວ່າບັນຫາ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**
- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ໂຢຮັນເຊື່ອວ່າພຣະຜູ້ເປັນເຈົ້າຊົງປົກປ້ອງຄຸ່ມຄອງປະຊາຊົນຂອງພຣະອົງໃນທຸກກໍຣະນີ, ພຣະອົງຊົງຢູ່ກັບປະຊົນຜູ້ທີ່ເຊື່ອໄວ້ວາງໃຈໃນພຣະອົງເພື່ອນຳໜ້າເຂົາໃນການດຳຣົງຊີວິດ, ຊົງເຕືອນເຂົາເມື່ອເຂົາເຮັດຜິດ, ຊົງອວຍພອນເຂົາເມື່ອເຂົາເຮັດການດີ ແລະຊົງປົກປ້ອງຄຸ້ມຄອງຈາກພັຍອັນຕະລາຍທີ່ມາເຖິງ.

1. ຊົງສັ່ງຫ້າມລົມ 7:1-8

ໂຢຮັນໄດ້ເບິ່ງອີກແລະເຫັນເທວະດາທັງສີ່ຕົນຍືນຢູ່ສີ່ທິດຂອງໂລກເພື່ອປົກປ້ອງບໍ່ໃຫ້ພັຍອັນຕະລາຍມາຍັງໄພ່ພົນຂອງພຣະເຈົ້າກ່ອນໜ້າເທວະດາອີກຕົນນຶ່ງຕຽມໝາຍໜ້າຜາກຂອງໄພ່ພົນຂອງພຣະເຈົ້າສາກ່ອນ. ໂປໂລໄດ້ກ່າວເຖິງຄຣິສຕຽນຈະຖືກປະທັບຕາໝາຍເພື່ອເປັນຫລັກຄໍ້າປະກັນຄວາມລອດພົ້ນ "ໃນເມື່ອນັ້ນພວກທ່ານທັງຫລາຍກໍເໝືອນກັນ ເມື່ອໄດ້ຍິນພຣະທັມອັນສັດຈິງແລ້ວ ຄືຂ່າວປະເສີດຄວາມພົ້ນຂອງພວກທ່ານ ແລະວາງໃຈໃນພຣະອົງກໍຈະຊົງຖືກປະທັບຕາຫມາຍໄວ້ດ້ວຍພຣະວິນຍານບໍຣິສຸດທີ່ຊົງສັນຍາໄວ້ນັ້ນ ເປັນເຄື່ອງມັດຈຳຂອງການຮັບມໍຣະດົກຂອງພວກ ເຮົາ" (ເອເຟໂຊ 1: 13-14).

ນິມິດຂອງໂຢຮັນແມ່ນຖືກຕ້ອງກັບພຣະທັມເອຊາຢາ 11:12 ແລະເອເຊກຽນ 7:2 ທີ່ກ່າວວ່າເທວະດາຢືນຢູ່ສີ່ທິດຂອງແຜ່ນດິນໂລກ ຄືທິດເໜືອ, ທິດໃຕ້, ທິດຕາເວັນອອກ ແລະທິດຕາເວັນຕົກ. ໂຢຮັນບັນທຶກນິມິດວ່າ "ຫລັງຈາກນັ້ນຂ້າພະເຈົ້າໄດ້ເຫັນເທວະດາສີ່ຕົນຢືນຢູ່ໃນທິດທັງສີ່ຂອງແຜ່ນດິນໂລກ ຫ້າມລົມໃນແຜ່ນດິນທັງສີ່ໄວ້ບໍ່ໃຫ້ພັດມາໃສ່ບົກ, ໃສ່ທະເລ ຫລືຕົ້ນໄມ້ຕ່າງໆ" (ຂໍ້ 1). ພວກເຖົ້າແກ່ບູຮານເຂົ້າໃຈວ່າການທີ່ເທວະດາຢືນຢູ່ສີ່ທິດຂອງໂລກຫ້າມລົມພັດນັ້ນແມ່ນເພິ່ນຫ້າມພັຍອັນຕະຣາຍບໍ່ໃຫ້ມາຖືກໄພ່ພົນຂອງອົງພຣະຜູ້ເປັນເຈົ້າທົ່ວໂລກ. ຕໍ່ມາມີເທວະດາອີກຕົນນຶ່ງປາກົດຂຶ້ນທິດຕາເວັນອອກນຳເອົາຂ່າວດີຈາກອົງພຣະຜູ້ເປັນເຈົ້າຄືເພິ່ນຈະປະທັບຕາທີ່ໜ້າຜາກບັນດາຂ້ອຍໃຊ້ຂອງພຣະເຈົ້າທັງໝົດເສັຽກ່ອນຈຶ່ງປ່ອຍລົມທີ່ເຖົ້າແກ່ໂບຮານຮ້ອງວ່າພັຍອັນຕະຣາຍເຂົ້າມາຍັງໂລກເພື່ອທຳລາຍທຸກຄົນທີ່ບໍ່ມີ

ຕາປະທັບທີ່ເທິງໜ້າຜາກ. "ຢ່າເຮັດອັນຕະຣາຍແກ່ແຜ່ນດິນ, ແກ່ທະເລ, ຫລືຕົ້ນໄມ້ຈົນກວ່າເຮົາຈະປະທັບຕາໄວ້ທີ່ໜ້າຜາກບັນດາຂ້ອຍຂ້າຂອງພຣະເຈົ້າເສັຽກ່ອນ" (ຂໍ້ 3).

ໃນບັນດາຄົນທີ່ປະທັບຕາຈຳນວນ 144,000ຄົນໃນ 12 ກະກຸນອິສຣາເອນ ຊຶ່ງມີບາງຄະນະເຊື່ອວ່າພຣະເຈົ້າໄດ້ຊົງປະທັບຕາໄວ້ແຕ່ເທົ່ານັ້ນ ຫລືເວົ້າໃຫ້ແຈ້ງແລ້ວເມືອງສວັນຈະມີແຕ່ຈຳ 144,000 ເທົ່ານັ້ນ. ພວກສາສນາສາດເວົ້າອີກວ່າຈຳນວນ 144.000 ແມ່ນໄພ່ພົນພິເສດ 12 ກະກຸນອິສຣາເອນທີ່ພຣະເຈົ້າໄດ້ຊົງເລືອກໄວ້ກ່ອນເພື່ອເປັນໄພ່ພົນຮັບໃຊ້ພິເສດ, ບໍ່ແມ່ນແຕ່ຄົນຈຳນວນນີ້ຈະໄດ້ພົ້ນ ແຕ່ແມ່ນເລີ້ມຕົ້ນດ້ວຍຄົນ 12 ກະກຸນນີ້ສາກ່ອນໃນເວລາທີ່ໂຢຮັນເຫັນນິມິດນັ້ນ ແລະຕໍ່ມາກໍມີຫລາຍຄົນທີ່ເຊື່ອໃນພຣະເຢຊູເພິ່ນກໍໄດ້ຮັບຄວາມລອດເຊັ່ນກັນ ດັ່ງເຮົາຈະເຫັນໃນຂໍ້ຕໍ່ໄປ.

## 2. ມວນຊົນຈາກນາໆປະເທດ 7:9-12

"ຫລັງຈາກນັ້ນຂ້າພະເຈົ້າເບິ່ງ ແລະດັ່ງນີ້ ມີຝູງຄົນຫລວງຫລາຍເຫລືອຄະນານັບມາຈາກທຸກປະເທດ, ທຸກກະກຸນ, ທຸກຊາດ, ແລະທຸກພາສາ ຄົນເຫລົ່ານັ້ນນຸ່ງເຄື່ອງສີຂາວ, ຖືກ້ານຕານຢືນຢູ່ຕໍ່ໜ້າພຣະຣາຊບັນລັງແລະຕໍ່ພຣະພັກພຣະເມສານ້ອຍນັ້ນ ຮ້ອງດ້ວຍສຽງດັງວ່າຄວາມລອດພົ້ນຂຶ້ນຢູ່ກັບພຣະເຈົ້າຂອງພວກເຮົາ ຜູ້ປະທັບເທິງພຣະຣາຊບັນລັງແລະຂຶ້ນຢູ່ກັບພຣະເມສານ້ອຍ ແລະຄົນທັງປວງທີ່ຢືນຢູ່ອ້ອມພຣະຣາຊບັນລັງ: ອ້ອມຜູ້ອາວຸໂສ, ແລະອ້ອມສັດທັງສີ່ນັ້ນກົ້ມລົງຕໍ່ໜ້າພຣະຣາຊບັນລັງນະມັສການພຣະເຈົ້າ" (ຂໍ້ 9-11). ນອກຈາກ 144.000 ແລ້ວຍັງມີມວນຊົນທົ່ວໂລກ ທຸກຊາດທຸກພາສານຸ່ງເຄື່ອງຂາວອັນມີຄວາມໝາຍວ່າເປັນໄພ່ພົນບໍຣິສຸດນັ້ນຂ້າພະເຈົ້າຄິດເຖິງຕອນຄຣິສຕຽນຮັບບັບຕິສມານັ້ນພາກັນນຸ່ງເຄື່ອງຂາວ. ຄົນທີ່ນຸ່ງເຄື່ອງຂາວນີ້ໄດ້ຢືນຢູ່ຕໍ່ໜ້າຣາຊບັນລັງນີ້ນັກສາສນາສາດຕີຄວາມໝາຍວ່າແມ່ນເຂົາເຈົ້າລໍຖ້າລາງວັນຂອງຕົນ.

ຝູງຄົນທັງຫລາຍພາກັນນະມັສການພຣະເຈົ້າໂດຍກ່າວວ່າ "ອາແມນ ຄວາມສັຣເສີນ, ສະຕິປັນຍາ, ຄຳໂມທະນາ, ພຣະກຽດຕິຍົດ, ອຳນາດ, ແລະຣິດເດດ ຈົ່ງມີແດ່ພຣະເຈົ້າຂອງພວກຂ້າພຣະອົງຕລອດໄປເປັນນິດ ອາແມນ" (ຂໍ້ 12). ໃນຈຳນວນທີ່ຮ້ອງສັຣເສີນພຣະເຈົ້ານັ້ນພຣະຄັມພີໄດ້ບອກວ່າແມ່ນຝູງຊົນທີ່ມາຈາກນາໆປະເທດດັ່ງທີ່ພຣະເຈົ້າຊົງສັນຍາໄວ້ກັບອັບຣາຮາມວ່າຈະໃຫ້ເຊື້ອສາຍຂອງເພິ່ນແຜ່ຂຍາຍໄປເໝືອນດັ່ງເມັດຊາຍໃນທະເລຊາຍ (ປະຖົມມະການ 15:5) ແລະເຮົາທັງຫລາຍແມ່ນເຊື້ອສາຍຂອງອັບຣາຮາມທາງຄວາມເຊື່ອຈຶ່ງພາກັນຮ້ອງສັຣເສີນພຣະເຈົ້າຮ່ວມກັນ.

## 3. ຝູງຊົນທີ່ນຸ່ງເຄື່ອງຂາວ 7:13-17

ການສຳຣວດກວດກາຂອງຜູ້ອາວຸໂສຜູ້ນຶ່ງໃນຈຳນວນ 24 ທ່ານສຳຣວດຖາມໂຢຮັນວ່າ "ຄົນທີ່ນຸ່ງເຄື່ອງຂາວເຫລົ່ານັ້ນແມ່ນໃຜ? ແລະມາແຕ່ໃສ?" (ຂໍ້ 13). ນັກສາສນາສາດຕີຄວາມໝາຍວ່າໃນຈຳນວນພວກນຸ່ງເຄື່ອງຂາວນີ້ບໍ່ແມ່ນຄົນ ໃນ 12 ກະກຸນຂອງອິສຣາເອນ ແຕ່ແມ່ນຝູງຊົນທີ່ເຊື່ອໃນພຣະເຢຊູຄຣິດ, ແມ່ນພວກທີ່ຕົກທຸກໄດ້ຍາກຈາກການກົດຂີ່ ຂົ່ມເຫງໃນທຸກປະເທດຊາດໃນໂລກເວລານີ້ ຄົນພວກນີ້ພາກັນອົດທົນຕໍ່ການຂົ່ມເຫງທັງປວງແມ່ນແຕ່ການຖືກຂັງຄຸກການອົດເຂົ້າທີ່ວນໍ້າ, ການຖືກຂ້ຽນຕີແລະການຖືກຂ້າຕາຍຍ້ອນພຣະນາມແຫ່ງພຣະເຢຊູຄຣິດຄົນພວກນີ້ແຫລະທີ່ຈະໄດ້ຢືນຕໍ່ໜ້າພຣະຣາຊບັນລັງຂອງພຣະເຈົ້າເພື່ອຮັບຣາງວັນໃນຄວາມອົດທົນຂອງຕົນເອງ.

ຜູ້ອາວຸໂສໄດ້ຖາມໂຢຮັນບໍ່ແມ່ນເພື່ອໃຫ້ໂຢຮັນຄາຄຳຖາມ ແຕ່ເພິ່ນຖາມໂຢຮັນເພື່ອຢາກໃຫ້ໂລກຮູ້ວ່າຜູ້ໃຜກໍຕາມທີ່ຍອມທົນທຸກເວທະນາເພື່ອພຣະນາມແຫ່ງພຣະເຢຊູຄຣິດຜູ້ນັ້ນກໍຈະໄດ້ພົ້ນ, ຜູ້ອາວຸໂສນັ້ນຈຶ່ງກ່າວວ່າ "ຄົນເຫລົ່ານີ້ແຫລະທີ່ມາຈາກຄວາມທຸກຂະເວທະນາອັນໃຫຍ່ ເຂົາໄດ້ຊຳຣະເສື້ອຜ້າຂອງເຂົາໃຫ້ຂາວສະອາດດ້ວຍພຣະໂລຫິດ

ຂອງ ພຣະເມສານ້ອຍນັ້ນ, ເພາະເຫດນັ້ນເຂົາຈຶ່ງໄດ້ຢູ່ຕໍ່ໜ້າພຣະຣາຊບັນລັງຂອງພຣະເຈົ້າ ແລະປະຕິບັດພຣະອົງໃນພຣະວິ ຫານຂອງພຣະອົງທັງກາງເວັນແລະກາງຄືນ ແລະພຣະອົງຜູ້ຊົງປະທັບເທິງຣາຊບັນລັງນັ້ນຈະຊົງສະຖິດຢູ່ນໍາ ແລະປົກປ້ອງຄຸ້ມຄອງເຂົາ" (ຂໍ້ 15).

ຜູ້ອາວຸໂສໄດ້ບອກໂຢຮັນວ່າຄົນທີ່ນຸ່ງເຄື່ອງຂາວນັ້ນແມ່ນພວກທີ່ທຸກຂະເວທະນາທີ່ຊໍາຣະເສື້ອຜ້າຂອງຕົນໃຫ້ສະອາດດ້ວຍພຣະໂລຫິດຂອງພຣະເຢຊູເປັນສາຣະຄະດີທີ່ຄົນທັມດາສາມັນບໍ່ສາມາດເຂົ້າໃຈ ດ້ວຍວ່າພຣະໂລຫິດຂອງພຣະເຢຊູ ບໍ່ແມ່ນຜົງຊັກຟອກໃຫ້ເສື້ອຜ້າໃຫ້ຂາວສະອາດ ແຕ່ພຣະໂລຫິດຂອງພຣະເຢຊູຄຣິດທີ່ລັ່ງໄຫລອອກມາໃນຂະນະທີ່ເຂົາຂ້ຽນຕີພຣະອົງ ແລະໃນຂະນະທີ່ເຂົາແທງຂ້າງຂອງພຣະອົງນັ້ນເປັນເຄື່ອງຊໍາຣະລ້າງຄວາມຄຶດຊົ່ວມົວໝອງຕລອດເຖິງຄວາມຜິດຄວາມບາບຂອງທຸກຄົນທີ່ວາງໃຈເຊື່ອໃນພຣະອົງ ໃຫ້ຈິດໃຈແລະຄວາມຜິດຄວາມບາບຂອງເຂົາໃຫ້ຂາວສະອາດປາສຈາກຮອຍດ່າງດໍາໃຫ້ໝົດສິ້ນ. ດ້ວຍເຫດນີ້ຈຶ່ງບໍ່ເປັນການຊ້າເກີນໄປທີ່ຜູ້ໃດຜູ້ນຶ່ງຈະກັບໃຈເຊື່ອໃນພຣະເຢຊູຄຣິດໃນວັນນີ້, ໃຜກໍຕາມທີ່ເຊື່ອໄວ້ວາງໃຈໃນພຣະອົງໃນວັນນີ້ຈະເປັນເໝືອນຄົນທີ່ນຸ່ງເຄື່ອງຂາວທີ່ຢືນຢູ່ຕໍ່ໜ້າພຣະຣາຊບັນລັງຂອງພະເຈົ້າ.

ບັນດາຄົນທີ່ນຸ່ງເຄື່ອງຂາວນັ້ນພາກັນຢືນຢູ່ເພື່ອຮັບລາງວັນ, ເພື່ອຍ້ອງຍໍສັຣເສີນພຣະເຈົ້າດ້ວຍການນະມັສການພຣະເຈົ້າໜ້າຕໍ່ໜ້າ, ເຂົາເຈົ້າຈະຮັບໃຊ້ພຣະເຈົ້າໃກ້ຊິດແລະພຣະເຈົ້າຈະສະຖິດເພື່ອເຂົາບົວລະບັດ ແລະພຣະອົງຈະປົກປ້ອງຄຸ້ມຄອງເຂົາເພື່ອບໍ່ໃຫ້ມີການກົດຂີ່ຂົ່ມເຫງ, ພຣະອົງຈະປົກປ້ອງຄຸ້ມຄອງເຂົາບໍ່ໃຫ້ພັຍອັນຕະຣາຍໃດໆມາສູ່ ເຂົາອີກຕໍ່ໄປ. ໃນທີ່ນັ້ນບັນດາຄົນທີ່ນຸ່ງເຄື່ອງຂາວນັ້ນຈະເປັນເໝືອນເທວະດາຄືພວກເຂົາເຈົ້າຈະບໍ່ອຶດເຂົ້າຢາກນໍ້າ ອີກຕໍ່ໄປ, "ຕໍ່ໄປເຂົາຈະບໍ່ອຶດເຂົ້າຢາກນໍ້າອີກຈັກເທື່ອແສງແດດແລະຄວາມຮ້ອນຢ່າງໃດຈະບໍ່ສ່ອງຖືກເຂົາ ເ ພາະພຣະເມສານ້ອຍທີ່ປະທັບຢູ່ຖ້າມກາງພຣະຣາຊບັນລັງຈະເປັນຜູ້ດູແລເຂົາ ແລະຈະຊົງນໍາເຂົາໄປເຖິງນໍ້າພຸອັນປະກອບດ້ວຍຊີວິດ ແລະພຣະເຈົ້າຈະຊົງເຊັດນໍ້າຕາທຸກຢົດຈາກຕາຂອງເຂົາ" (ຂໍ້ 17).

ໃນພຣະທັມເພງສັຣເສີນບົດ 23 ເປັນເພງຮ້ອງສັຣເສີນຂອງກະສັດດາວິດ ໄດ້ແຕ່ງເຣື່ອງຂອງພຣະເຢຊູຄຣິດປຽບເໝືອນຄົນລ້ຽງແກະທີ່ດີ, ສ່ວນດາວິດເອງເພິ່ນປຽບເພິ່ນເປັນແກະຂອງພຣະເຢຊູຄຣິດ ເພິ່ນຈະບໍ່ຢ້ານຫວາດຫວັ່ນຕໍ່ສິ່ງໃດໆ ດ້ວຍວ່າເພິ່ນມີຜູ້ລ້ຽງທີ່ຍອມເສັຽສະຣະເພື່ອລູກແກະຂອງເພິ່ນ. ພຣະເຢຊູຊົງກ່າວວ່າ "ເຮົານີ້ແຫລະເປັນຜູ້ລ້ຽງແກະທີ່ ດີຜູ້ລ້ຽງທີ່ດີຍອມສລະຊີວິດຂອງຕົນເພື່ອຝູງແກະ "(ໂຢຮັນ 10:12).

<u>ຄໍາຖາມ:</u>

1. ພຣະເຈົ້າຈະປົກປ້ອງຄຸ້ມຄອງໄພ່ພົນຂອງພຣະອົງຢ່າງໃດ?

2. ໃຜເປັນໄພ່ພົນຂອງພຣະເຈົ້າ?

3. ເທວະດາທັງສີ່ຂອງພຣະເຈົ້າເຮັດຫຍັງຢູ່ 4 ທິດຂອງໂລກ?

4. ເທວະດາອີກຕົນນຶ່ງມາປະກາດເຣື່ອງອັນໃດ?

5. ປະທັບຕາໝາຍຄວາມວ່າແນວໃດ?

6. ເປັນຫຍັງເທວະດາຈຶ່ງປະທັບຕາ?

7. ຄົນທີ່ນຸ່ງເຄື່ອງຂາວໝາຍຄວາມວ່າແນວໃດ? ເປັນຫຍັງຈຶ່ງຢືນຢູ່ຕໍ່ໜ້າຣາຊບັນລັງ

8. ທີ່ນັ້ນຄົນທີ່ນຸ່ງເຄື່ອງຂາວຈະມີລັກສະນະຢ່າງໃດ?

## ບົດຮຽນທີ 6

## ສຽງແກພິພາກສາ

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ພຣະນິມິດ 8:1--9:21
ຂໍ້ພຣະຄັມທັງໝົດສໍາລັບບົດຮຽນນີ້: ພຣະນິມິດ 8-9
ຈຸດສໍາຄັນຂອງບົດຮຽນນີ້: ການຕັດສິນຂອງພຣະເຈົ້າຊົງທ່ຽງທັມ
ຄໍາຖາມເພື່ອການສໍາຣວດ: ເປັນການດີບໍ່ທີ່ພຣະເຈົ້າຈະປາບຊາຕານ.
ຈຸດປະສົງຂອງບົດຮຽນນີ້: ສຽງແກແຫ່ງການພິພາກສາເປັນສັນຍານ.

ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

### ບົດນໍາ

ພຣະທັມພຣະນິມິດໄດ້ນໍາເອົາຄວາມຍິນດີມາສູ່ຄຣິສຕຽນທຸກຍຸກທຸກສມັຍດ້ວຍວ່າຄຣິສຕຽນແຕ່ລະຍຸກສມັຍ ແຕ່ລະປະເທດພາສາໄດ້ຖືກການກົດຂີ່ຂົ່ມເຫງຕລອດມາ ແຕ່ເມື່ອມາອ່ານເຖິງພຣະທັມພຣະນິມິດແລ້ວເຮັດໃຫ້ຄຣິສຕຽນມີກໍາລັງໃຈຂຶ້ນໃໝ່ ຄືພຣະເຈົ້າໄດ້ຮັບຮອງເອົາຜູ້ທີ່ເຊື່ອໃນພຣະນາມພຣະອົງຈະໄດ້ສເວີຍສຸກຮ່ວມກັບພຣະອົງໃນຄາວສຸດທ້າຍ ແລະພຣະອົງຈະເຊັດນໍ້າຕາທຸດຢົດຂອງຜູ້ທີ່ເຊື່ອ ແລະທໍາລາຍຜູ້ກົດຂີ່ຂົ່ມເຫງຄຣິສຕຽນແລະຜູ້ຕໍ່ຕ້ານພຣະເຈົ້າ.

1. ເປີດຕາປະທັບດວງທີ 7 ພຣະນິມິດ 8:1-6

"ເມື່ອພຣະເມສານ້ອຍຊົງແກະຕາປະທັບດວງທີເຈັດ ຄວາມງຽບກໍເກີດຂຶ້ນໃນສວັນປະມານເຄິ່ງຊົ່ວໂມງ" (ຂໍ້ 1). ເມືອງສວັນໄດ້ມີດວງຽບປາສຈາກສຽງໃດໆ ໃນທັນທີທັນໃດຫລັງຈາກພຣະເມສານ້ອຍຊົງເປີດຕາປະທັບດວງທີເຈັດຄືດວງສຸດທ້າຍ ຊຶ່ງເປັນການບອກວ່າເຖິງເວລາຂອງພຣະເຈົ້າຈະພິພາກສາໂລກແລ້ວການເປີດຕາປະທັບດວງສຸດທ້າຍແມ່ນການປ່າວເຕືອນເທວະດາໃຫ້ຕຽມພ້ອມປະຕິບັດຄໍາສັ່ງຂອງພຣະເຈົ້າໃນຄໍາສັ່ງຕໍ່ໄປ. ເພື່ອຄວາມເຂົ້າໃຈພາບພົດໃນຕອນນີ້ຂ້າພະເຈົ້າຂໍຍົກເອົາຕົວຢ່າງທະຫານດັ່ງນີ້; ຂ້າພະເຈົ້າເຫັນກອງທະຫານທີ່ຢືນເປັນຖັນແຖວ ກັນຢູ່ຕໍ່ມາກໍມີນາຍທະຫານອີກຜູ້ນຶ່ງຮ້ອງດ້ວຍສຽງດັງວ່າ "ທັງໝົດ..ຕຣົງ" ທະຫານທຸກຄົນກໍຢືນຕຣົງແລະມິດງຽບບໍ່ມີສຽງອັນໃດອີກ ແລະທະຫານເຫລົ່ານີ້ຈະບໍ່ເໜັງຕິງຈົນກວ່າຈະມີຄໍາສັ່ງຕໍ່ໄປ.

ເທວະດາທັງເຈັດຊຶ່ງແມ່ນເທວະດາຫົວໜ້າຂອງເທວະດາທັງຫລາຍ ຊຶ່ງມີໜ້າທີ່ຕໍາແໜ່ງຮັບໃຊ້ໃກ້ຣາຊບັນລັງຂອງພຣະເຈົ້າຮັບເອົາແກເຈັດອັນ ຕຽມພ້ອມທີ່ຈະເປົ່າແກ່ເປີດສົງຄາມປາບຊາຕານແລະບໍຣິວານຂອງມັນ. ຕໍ່ມາກໍມີເທວະດາຕົນນຶ່ງຖືໝໍ້ຄໍາໜ່ວຍນຶ່ງ ເພື່ອຈູດເຄື່ອງຫອມຈັດຕຽມຖວາຍຮ່ວມກັບຄໍາໄຫວ້ວອນຂອງໄພ່ພົນຂອງພຣະເຈົ້າທົ່ວໂລກເພື່ອຄໍາໄຫວ້ວອນຮ້ອງທຸກຂອງໄພ່ພົນຂອງພຣະເຈົ້ານັ້ນຈະຂຶ້ນໄປຫາພຣະເຈົ້າແລະວັນນັ້ນພຣະອົງກໍຈະຊົງພຣະພິໂຣດ "ມີເທວະດາອີກຕົນນຶ່ງຖືໝໍ້ຄໍາໜ່ວຍນຶ່ງອອກມາຢືນຢູ່ຕໍ່ໜ້າແທ່ນໄດ້ຮັບ ພຣະຣາຊທານເຄື່ອງຫອມຈໍານວນ

ຫລາຍ ເພື່ອຖວາຍຮ່ວມກັບຄຳໄຫວ້ວອນຂອງໄພ່ພົນຂອງພຣະເຈົ້າເທິງແທ່ນຄຳ ທີ່ຢູ່ຕໍ່ໜ້າພຣະຣາຊບັນລັງນັ້ນ ແລະຄວັນເຄື່ອງຫອມນັ້ນກໍລອຍຂຶ້ນໄປພ້ອມກັບຄຳໄຫວ້ວອນຂອງພວກໄພ່ພົນຂອງພຣະເຈົ້າ" (ຂໍ້ 3-4.) ເຣື່ອງພໍ້ຄຳແລະເຄື່ອງຫອມທີ່ກ່າວມານັ້ນໃນໂບດຄາໂຕລິກໄດ້ປະຕິບັດກັນມາຈົນເຖິງທຸກວັນນີ້ ແລະຄາໂຕລິກບາງກຸ່ມກໍເຊື່ອວ່າພວກເຂົາເຈົ້າແມ່ນຜູ້ຮັບໃຊ້ຢູ່ໃກ້ຣາຊບັນລັງຂອງພຣະເຈົ້າ.

"ແລ້ວເທວະດາຕົນນັ້ນໄດ້ຖືພໍ້ໄປເອົາໄຟຈາກແທ່ນໃຫ້ເຕັມ ໂຍນພໍ້ນັ້ນລົງໃສ່ເທິງແຜ່ນດິນໂລກ ກໍເກີດມີສຽງຟ້າຮ້ອງສຽງຕ່າງໆ, ມີຟ້າແມບແລະແຜ່ນດິນໄຫວ ແລະເທວະດາເຈັດຕົນນັ້ນຕ່າງກໍຕຽມພ້ອມທີ່ຈະເປົ່າ" (ຂໍ້ 5-6). ນັກສາສນາສາດຕີຄວາມໝາຍວ່າພຣະເຈົ້າໄດ້ຍິນສຽງຄຳໄຫວ້ວອນຮ້ອງທຸກຂອງໄພ່ພົນຂອງພຣະອົງ ແລະຊົງພຣະພິໂຣດທີ່ໂລກຂົ່ມເຫງໄພ່ພົນຂອງພຣະອົງ.

## ໒. <u>ສຽງແກສີ່ອັນແຣກ ພຣະນິມິດ 8:7-1໒</u>

"ເມື່ອເທວະດາຕົນແຣກເປົ່າແກຂຶ້ນ ໝາກເຫັບແລະໄຟປົນເລືອດຖືກຖິ້ມລົງມາຍັງແຜ່ນດິນ ແຜ່ນດິນໂລກຖືກໃໝ້ເສັຽນຶ່ງສ່ວນສາມ, ແລະຫຍ້າຂຽວສົດຖືກໃໝ້ເສັຽທັງໝົດ" (ຂໍ້ 7). ໝາກເຫັບປົນກັບເລືອດເປັນເຫດການທີ່ບໍ່ເຄີຽເກີດຂຶ້ນໃນໂລກມາກ່ອນເລີຽ, ເຫດການນີ້ເປັນພຽງເຫດການເລີ້ມຕົ້ນການລົງໂທດເທົ່ານັ້ນ.

"ເມື່ອເທວະດາຕົນທີສອງເປົ່າແກຂຶ້ນ ກໍມີສຽງນຶ່ງເໝືອນພູໜ່ວຍໃຫຍ່ທີ່ໄຟກຳລັງໃໝ້ຢູ່ຖືກຖິ້ມລົງໃນທະເລ ທະເລນັ້ນໄດ້ກາຍເປັນເລືອດເສັຽນຶ່ງສ່ວນສາມ ສາຣະພັດໃນທະເລທີ່ມີຊີວິດຢູ່ກໍຕາຍເສັຽນຶ່ງສ່ວນສາມ ແລະບັນດາເຮືອສະເພົາກໍຖືກທຳລາຍເສັຽນຶ່ງສ່ວນສາມ" (ຂໍ້ 8). ເທວະດາຕົນທີສອງໄດ້ເປົ່າແກຂອງເພິ່ນຫລັງຈາກເທວະດາຕົນທີນຶ່ງເປົ່າແລ້ວ ຄັ້ງນີ້ທະເລແລະເຮືອໄດ້ຖືກທຳລາຍນຶ່ງສ່ວນສາມເທົ່ານັ້ນດ້ວຍວ່າພຣະພິໂຣດຂອງພຣະເຈົ້າຍັງບໍ່ທັນເຖິງຂັ້ນສຸດຍອດ.

ເມື່ອເທວະດາຕົນທີສາມເປົ່າແກຂຶ້ນ ກໍມີດາວໃຫຍ່ດວງນຶ່ງລຸກເປັນໄຟເໝືອນກະບອງຕົກຈາກທ້ອງຟ້າ ດາວນັ້ນຕົກໃສ່ແມ່ນ້ຳນຶ່ງສ່ວນສາມ ແລະຕົກໃສ່ນ້ຳພຸທັງຫລາຍ ດາວດວງນີ້ມີຊື່ວ່າອັບຊິນໂຕ ຣົດຂອງນ້ຳຈຶ່ງກາຍເປັນຣົດຂົມນຶ່ງສ່ວນສາມ ແລະຄົນຈຳນວນຫລາຍໄດ້ຕາຍເພາະນ້ຳມີຣົດຂົມ" (ຂໍ້ 10). ດາວອັບຊິນໂຕເປັນດາວທີ່ມີຣົດຂົມທີ່ສຸດຕົກລົງມາສະແດງເຖິງຄວາມຂົມຂື່ນພຣະພິໂຣດຂອງພຣະເຈົ້າທີ່ມີຕໍ່ໂລກນຶ່ງສ່ວນສາມເທົ່ານັ້ນດ້ວຍວ່າພຣະພິໂຣດຂອງພຣະເຈົ້າຍັງບໍ່ທັນເຖິງຂັ້ນສຸດຍອດ.

"ເມື່ອເທວະດາຕົນທີສີ່ເປົ່າແກຂຶ້ນ ດວງອາທິດກໍຖືກທຳລາຍເສັຽນຶ່ງສ່ວນສາມ ດວງຈັນແລະດວງດາວທັງຫລາຍກໍເໝືອນກັນຈຶ່ງມືດໄປນຶ່ງສ່ວນສາມ ກາງເວັນບໍ່ມີສວ່າງນຶ່ງສ່ວນສາມ ແລະກາງຄືນກໍເໝືອນກັນ" (ຂໍ້ 1໒). ສາສນາສາດສັນນິຖານວ່າ 1. ຂ່າວປະເສີດໄດ້ລົງມາເຜີຍແຜ່ໃນໂລກ ແຕ່ຄົນໃນໂລກພາກັນເຢັນກະດ້າງໃນການຮັບຟັງ ເຖິງແມ່ນເຊື່ອແລ້ວຍັງບໍ່ປະຕິບັດຕາມສົມຄວນ. ໒. ພຣະເຈົ້າໄດ້ຊົງຕັກເຕືອນໂລກໂດຍແຕ່ງຕັ້ງໃຫ້ມີຜູ້ຮັບໃຊ້ທຸກບ່ອນທຸກທີ່ເພື່ອກ່າວເຕືອນ. 3. ພຣະເຈົ້າຊົງພຣະພິໂຣດເຮັດໃຫ້ຊີວິດເຂົາຂົມຂື່ນໂດຍບໍ່ໃຫ້ດວງອາທິດແລະດາວທັງຫລາຍສົ່ງແສງນຶ່ງສ່ວນສາມເພື່ອເປັນການເຕືອນຄັ້ງສຸດທ້າຍ. 4. ຕັກເຕືອນຄົນເຮັດການຊົ່ວຮ້າຍຕ່າງໆ ໃນພຣະວິຫານຂອງພຣະອົງໃນໂລກຈະໄດ້ຮັບໂທດ.

## 3. <u>ສຽງແກທີ 5 ພຣະນິມິດ 9: 1-6</u>

"ເມື່ອເທວະດາຕົນທີຫ້າເປົ່າແກຂຶ້ນ ຂ້າພະເຈົ້າກໍເຫັນດາວດວງນຶ່ງຕົກລົງຈາກຟ້າລົງມາຍັງແຜ່ນດິນໂລກ" (ຂໍ້ 1).

ໂປຣັນເຫັນເຫດການຮ້າຍອີກອັນນຶ່ງເກີດຂຶ້ນຄືດາວຕົກຈາກຟ້າ ແລະໄດ້ຮັບຂໍກະແຈຂອງເຫວເລິກ ດວງດາວນັ້ນໄຂປ່ອງເຫວເລິກອອກ ແລ້ວມີຄວັນດໍາອອກມາຈົນດວງອາທິດແລະອາກາດມືດໄປໝົດ ຝູງຕັກແຕນມານໄດ້ອອກມາທໍາລາຍຄົນທີ່ບໍ່ມີຕາປະທັບທີ່ໜ້າຜາກ ແຕ່ບໍ່ໃຫ້ເຂົາເຖິງແກ່ຄວາມຕາຍ ແຕ່ໃຫ້ເຂົາຮັບຄວາມທໍຣະມານ ພວກເຂົາຢາກຕາຍແຕ່ກໍບໍ່ສາມາດຕາຍຈາກຄວາມທໍຣະມານໄດ້. ສາສນາສາດເຂົ້າໃຈວ່າແມ່ນເທວະດາຊົ່ວທີ່ຖືກຊັດຖິ້ມມາແຕ່ສວັນເປັນຫົວໜ້າຊາຕານຊອກທໍາຫາຍໃນໂລກນີ້ ເວລານີ້ພຣະເຈົ້າປ່ອຍໃຫ້ພວກມັນກັດຄົນທີ່ບໍ່ເຊື່ອຟັງ ແຕ່ບໍ່ໃຫ້ກັດຈົນຕາຍເພື່ອເຂົາຈະໄດ້ຮັບຄວາມທໍຣະມານ ເພື່ອໃຊ້ໜີ້ທີ່ເຂົາຂົ່ມເຫງໄພ່ພົນຂອງພຣະເຈົ້າ.

4. <u>ສຽງແກທີ 6 ພຣະນິມິດ 9:13-15</u>

"ເມື່ອເທວະດາຕົນທີຫົກເປົ່າແກຂຶ້ນ ຂ້າພະເຈົ້າໄດ້ຍິນສຽງອອກມາຈາກຮູບເຂົາທີ່ແຈທັງສີ່ຂອງແທ່ນຄໍາ ຊຶ່ງຢູ່ຕໍ່ພຣະພັກພຣະເຈົ້ານັ້ນ ສັ່ງເທວະດາຕົນທີຫົກຖືແກນັ້ນວ່າ ຈົ່ງແກ້ປ່ອຍເທວະດາທັງສີ່ ຊຶ່ງຖືກມັດໄວ້ໃນແມ່ນໍ້າຢູຟາເຕນັ້ນເສັຽ" (ຂໍ້ 13-14). ໃນພຣະທັມອົພຍົບ 27:2 ຮ້ອງແກທັງສີ່ວ່າແກທັງສີ່ຂອງແທ່ນບູຊາຂອງພຣະເຈົ້າ. ເທວະດາຕົນທີຫົກສັ່ງປ່ອຍເທວະດາທັງສີ່ທີ່ຖືກຂັງໃນເມນໍ້າຢູຟາເຕ ເທວະດາທັງສີ່ນີ້ເປັນເທວະດາບໍ່ດີທີ່ຖືກໂທດຈາກສວັນ. ເທວະດາທັງສີ່ໝົດຣິດອໍານາດຈົນບໍ່ສາມາດປ່ອຍຕົນເອງໄດ້ ແລະບໍ່ສາມາດເຮັດຊົ່ວໃນໂລກອີກ. ເທວະດາທັງສີ່ໄດ້ຖືກສັ່ງປ່ອຍເພື່ອໃຫ້ໄປຂ້າມະນຸດນຶ່ງສ່ວນສາມ (ຂໍ້ 15).

ເທວະດາຊົ່ວທັງສີ່ນັ້ນໄດ້ນໍາກອງທະຫານເປັນຈໍານວນສອງຮ້ອຍລ້ານຕົນເພື່ອອອກໄປຂ້າຄົນ "ມີພົນທະຫານມ້າສອງຮ້ອຍລ້ານຄົນ ຕາມຈໍານວນທີ່ຂ້າພະເຈົ້າໄດ້ຍິນ, ມີຝູງມ້າແລະຜູ້ຂີ່ມ້ານັ້ນມີເຄື່ອງປ້ອງກັນເອິກເປັນສີໄຟ, ສີນໍ້າເງິນ, ແລະສີມາດ ຫົວມ້າເຫລົ່ານັ້ນເໝືອນຫົວສິງ ມີໄຟແລະຄວັນກັບມາດພຸ່ງອອກມາຈາກປາກມັນ ມະນຸດຖືກຂ້າຕາຍ ນຶ່ງສ່ວນສາມດ້ວຍພັຍອັນຕະລາຍຢ່າງນີ້ຄື ໄຟ, ຄວັນແລະມາດພຸ່ງອອກມາຈາກປາກຂອງມັນ" (ຂໍ້ 16-18). ພຣະ ເຈົ້າຊົງກໍາໜົດໃຫ້ພວກມັນທໍາລາຍແຕ່ເທົ່ານີ້ ດ້ວຍວ່າພຣະພິໂຣດຂອງພຣະເຈົ້າຍັງບໍ່ທັນເຖິງຂັ້ນສຸດຍອດ. ສ່ວນພວກທີ່ເຫລືອຢູ່ນັ້ນກໍບໍ່ມີໃຜກັບໃຈຈາກການຊົ່ວຮ້າຍເລີຍ (ຂໍ້ 20-21).

<u>ຄໍາຖາມ</u>

1. ເມື່ອພຣະເມສານ້ອຍເປີດຕາປະທັບດວງທີ່ອອກມີຫຍັງເກີດຂຶ້ນ?

2. ຕໍ່ມາມີເທວະດາຕົນນຶ່ງຖືໝໍ້ຄໍາໄວ້ເຮັດຫຍັງ?

3. ເມື່ອເທວະດາແຣກເປົ່າແກຂຶ້ນ ແລ້ວມີຫຍັງເກີດຂຶ້ນ?

4. ເມື່ອເທວະດາຕົນທີສອງເປົ່າແກຂຶ້ນ ແລ້ວມີຫຍັງເກີດຂຶ້ນ?

5. ເມື່ອເທວະດາຕົນທີສາມເປົ່າແກຂຶ້ນ ແລ້ວມີຫຍັງເກີດຂຶ້ນ?

6. ເມື່ອເທວະດາຕົນທີສີ່ເປົ່າແກຂຶ້ນ ແລ້ວມີຫຍັງເກີດຂຶ້ນ?

7. ເມື່ອເທວະດາຕົນທີຫ້າເປົ່າແກ ແລ້ວມີຫຍັງເກີດຂຶ້ນ?

8. ເມື່ອເທວະດາຕົນທີຫົກເປົ່າແກຂຶ້ນ ແລ້ວມີຫຍັງເກີດຂຶ້ນ?

9. ເປັນຫຍັງພຣະເຈົ້າຈຶ່ງປ່ອຍເທວະດາຊົ່ວທີ່ຖືກຂັງນັ້ນອອກມາ?

10. ເທວະດາຊົ່ວນັ້ນອອກມາແລ້ວໄປເຮັດຫຍັງແດ່?

## ບົດຮຽນທີ 7
## ເປັນພະຍານດ້ວຍຄວາມສັດຊື່

---

ຂໍ້ພຣະຄັມພີສໍາລັບບົດຮຽນນີ້: ພຣະນິມິດ 10:1-7;11:1-15
ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ: ພຣະນິມິດ 10--11
ຈຸດສໍາຄັນຂອງບົດຮຽນນີ້: ແມ່ນວ່າຈະຖືກການຕໍ່ຕ້ານ, ໄພ່ພົນຂອງພຣະເຈົ້າຈະຕ້ອງເປັນພະຍານເຣື່ອງຄວາມເຊື່ອຂອງພວກເຂົາຕໍ່ໄປ.
ຄໍາຖາມເພື່ອການສໍາຣວດ: ໄພ່ພົນຂອງພຣະເຈົ້າຈະເຮັດແນວໃດເມື່ອປະເຊີນກັບການຕໍ່ສູ້ ເພາະຄວາມເຊື່ອ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະເຫັນການກ່ຽວພັນຂອງການເປັນພະຍານແບບສັດຊື່ ຊຶ່ງໄດ້ບັລຍາຍໄວ້ໃນຕອນນີ້.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ປະກາດຂ່າວປະເສີດກັບທຸກໆຄົນ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະເຢຊູໂດຍການຊ່ວຍເຫລືອຄວາມຂາດເຂີນດ້ານວັດຖຸ, ຈິດວິນຍານ, ແລະຄວາມຮູ້ສຶກ.

### ຄໍານໍາ

ພຣະເຈົ້າຊົງປະສົງໃຫ້ໄພ່ພົນຂອງພຣະອົງສືບຕໍ່ການເປັນພະຍານເຣື່ອງຄວາມເຊື່ອແມ່ນວ່າຈະຖືກການຕໍ່ຕ້ານ. ພວກເຂົາອາດຈະພົບກັບຄວາມລໍາບາກ, ແຕ່ພຣະເຈົ້າຈະຊົງພິສູດໃຫ້ໂລກເຫັນຄໍາພະຍານຂອງພວກເຂົາໃນຄາວສຸດທ້າຍ.

ໂຢຮັນໄດ້ເວົ້າເຖິງຄວາມສໍາຄັນຂອງການອະທິຖານ (ພນມ 8:1-5). ບັດນີ້ ເຂົາຈະເວົ້າເຣື່ອງການເປັນພະຍານຂອງຄຣິສຕຽນວ່າຄໍາເວົ້າແລະການປະພຶດຂອງພວກເຮົາສະແດງເຖິງພຣະເຈົ້າສໍາລັບຄົນອື່ນໆ. ໂຢຮັນໄດ້ເນັ້ນວ່າຄຣິສຕຽນ ຈະຕ້ອງເປັນພະຍານເຣື່ອງພຣະເຈົ້າໃນໂລກທີ່ກໍາລັງເມີນເສີຍຢູ່ ຫລືບາງຄັ້ງກໍພຍາຍາມທໍາລາຍການເປັນພະຍານນັ້ນ. ໂຢຮັນກ່າວວ່າ ຊີວິດຄຣິສຕຽນຈະຕ້ອງເປັນພະຍານທີ່ສັດຊື່ແລະເກີດຜົນບໍ່ວ່າຈະຢູ່ໃນສະຖານະການໃດໆ. ນີ້ຄືໜ້າທີ່ ທີ່ພຣະເຈົ້າໄດ້ຊົງປະທານໃຫ້ຄຣິສຕຽນທຸກໆຄົນ.

1. ເວລາໄດ້ມາເຖິງແລ້ວ (10:1-7)

ເທວະດາຕົນນຶ່ງໄດ້ລົງມາຈາກສວັນແລະຮ້ອງຂຶ້ນວ່າ "ສຽງຟ້າຮ້ອງທັງເຈັດ ດັງຂຶ້ນແລ້ວ" (10: 4). ໂຢຮັນຈຶ່ງຕຽມທີ່ຈະຂຽນ; ແຕ່ສຽງຈາກສວັນສັ່ງເຂົາໃຫ້ຢຸດ. ເວລາສໍາລັບການລໍຄອຍແລະການເຕືອນໄດ້ຜ່ານພົ້ນໄປແລ້ວ. ແກອັນທີເຈັດກໍາລັງຖືກເປົ່າ ແລະການພິພາກສາຂອງພຣະເຈົ້າກໍາລັງຈະມາເຖິງກຸງໂຣມ. ຄຣິສຕຽນຈະຕ້ອງເຮັດຫຍັງແດ່ໃນເວລາອັນສັ້ນໆທີ່ຍັງເຫລືອຢູ່ ຫລືຫລັງຈາກທີ່ສຽງແກໄດ້ດັງແລ້ວ? ພຣະນິມິດ 10: 8-11 ໄດ້ໃຫ້ຄໍາຕອບ. ເທວະດາໄດ້ເອົາ "ໜັງສືມ້ວນນ້ອຍ" ໃຫ້ໂຢຮັນ ແລະສຽງຈາກສວັນກໍບອກໂຢຮັນໃຫ້ກິນໜັງສື ມ້ວນນັ້ນ. ເມື່ອເຂົາໄດ້ກິນແລ້ວ

ໂປຣັນກໍຮູ້ວ່າພັງສີມີຣິດທວານແຕ່ມັນຂົມຢູ່ໃນທ້ອງ. ຄ້າຍໆກັບຜູ້ປະກາດພຣະທັມ ເອເສກຽນ (ເອເສກຽນ2:8-3:3), ໂປຣັນໄດ້ກິນກິນພຣະຄໍາຂອງພຣະເຈົ້າສໍາລັບຄົນໃນສມັຍຂອງເຂົາ, ແລະເຂົາກຮູ້ວ່າມີຫຍັງແດ່ທີ່ເຂົາຈະກ່າວກັບຄຣິສຕະຈັກ.

2. <u>ພັນທະກິດຂອງຄຣິສຕະຈັກ (11:1-15)</u>
ໂປຣັນໄດ້ບອກຜູ້ອ່ານວ່າ ພຣະເຈົ້າຊົງປະສົງໃຫ້ພວກເຂົາເປັນພະຍານໃຫ້ກັບຜູ້ທີ່ຂົ່ມເຫງພວກເຂົາ.ນິມິດຂອງໂປຣັນມີ ຫລາຍໆພາກເພື່ອການເປັນພະຍານນັ້ນ.

<u>ນຶ່ງ</u>, ໂປຣັນໄດ້ຮັບໄມ້ແທກ, ແລະກໍຖືກສັ່ງໃຫ້ໄປວັດແທກບໍຣິເວນຂ້າງໃນຂອງພຣະວິຫານ. ພຣະວິຫານໄດ້ຖືກທໍາລາຍໂດຍພວກໂຣມປະມານຊາວປີກ່ອນທີ່ໂປຣັນຈະຂຽນພຣະທັມພຣະນິມິດ, ແລະເຂົາກໍບໍ່ສາມາດຈົດຈໍາຢ່າງແຈ່ມແຈ້ງເຣື່ອງພຣະວິຫານນັ້ນ. ຄໍານິມິດຂອງໂປຣັນເກີດມາຈາກປະເພນີຂອງຊາວຄຣິສຕຽນຊຶ່ງໃຊ້ຄໍາວ່າ "ພຣະວິຫານ" ເມື່ອເວົ້າເຖິງຄຣິສຕະຈັກ (1 ກຣທ 3:16; 2 ກຣທ 6: 16; ອຟຊ 2:21).

ໂປຣັນໄດ້ວັດແທກຄຣິສຕະຈັກເພື່ອຕຽມທີ່ຈະສ້ອມແປງມັນ, ແລະເພື່ອຈະໃຫ້ຄຣິສຕະຈັກໄດ້ຄືນສູ່ສະພາບທີ່ພຣະເຈົ້າຊົງມີເປົ້າໝາຍໄວ້. ໃນບົດຮຽນທີ່ຜ່ານມາ ໂປຣັນໄດ້ບອກວ່າຄຣິສຕະຈັກຄືກຸ່ມຊົນທີ່ມອບຕົວເພື່ອການນະມັສການພຣະເຈົ້າ, ອ້ອນວອນອະທິຖານຫາພຣະເຈົ້າ, ແລະຍອມທຸກລໍາບາກເພາະຄວາມສັດຊື່ນັ້ນ. ການຕັ້ງໝັ້ນຂອງຄຣິສຕະຈັກຈະເປັນພະຍານໃຫ້ກັບໂລກກ່ອນທີ່ສຽງແກຄັ້ງສຸດທ້າຍຈະດັງຂຶ້ນ.

ຄຣິສຕະຈັກຈະເປັນພຍານໃນຕອນທີ່ຖືກກົດຂີ່ຂົ່ມເຫງທີ່ສຸດ. ກຸງໂຣມຈະຖືກອະນຸຍາດໃຫ້ຕໍ່ຕ້ານຄຣິສຕະຈັກເປັນເວລາສີ່ສິບສອງເດືອນ. ການອ້າງອີງເວລາສິບສອງເດືອນເລີ່ມມາຈາກປະເພນີຂອງຊາວຢິວ ຊຶ່ງກ່າວເຖິງຄວາມພຍາຍາມຂອງກະສັດອັນຕິໂອກັດທີສີ່ ທີ່ຈະທໍາລາຍຊົນຊາດຢິວ ແຕ່ປີ 167 ເຖິງ 164 ກ່ອນຄຣິສຕະສັກຣາດ. ກະສັດອົງນີ້ໄດ້ປະຫານຄົນຢິວຢ່າງຫລວງຫລາຍ ແລະເພື່ອສະແດງເຖິງຄວາມຍິ່ງໃຫຍ່ຂອງເຂົາ ເຂົາໄດ້ນໍາໝູມາຖວາຍທີ່ພຣະວິຫານ ໃນກຸງເຢຣູຊາເລັມ. ກະສັດອັນຕິໂອກັດສັ່ງຫ້າມບໍ່ໃຫ້ມີການເຊື່ອຖືສາສນາຢູດາຍ. ພິທີຕັດແລະວັນສະບາໂຕຖືວ່າຜິດກົດໝາຍ, ແລະການມີປຶ້ມ "ໂທຣາ" ໃນຄວາມຄອບຄອງກໍຖືວ່າເປັນການຣະເມີດກົດໝາຍອາດຍາ. ໂດຍການນໍາພາຂອງຄອບຄົວແມກກາບຽນ, ຊາວຢິວກໍພາກັນຕໍ່ຕ້ານກະສັດອັນຕິໂອກັດ. ພວກເຂົາພາກັນສືບຕໍ່ການເປັນພະຍານເຣື່ອງພຣະເຈົ້າ ໂດຍການຮັກສາຂນົບທໍານຽມແລະພິທີຕ່າງໆທີ່ກ່ຽວກັບຄວາມເຊື່ອຂອງພວກເຂົາ. ປະຊາຊົນຢ່າງຫລວງ ຫລາຍຖືກປະຫານ ແລະໃນທີ່ສຸດກໍໄດ້ຮັບຄວາມສໍາເຣັດ. ຊາວຢິວໄດ້ຍຶດຄອງກຸງເຢຣູຊາເລັມ ແລະໄດ້ທໍາການຊໍາຣະ ລ້າງພຣະວິຫານ. ໂປຣັນໄດ້ກ່າວເຖິງປະວັດສາດໃນຕອນນີ້ເພື່ອຊັກຊວນຄຣິສຕຽນໃຫ້ເອົາຕົວຢ່າງເຣື່ອງການເປັນ ພະຍານຈາກບັນພະບຸຣຸດຂອງພວກເຂົາ.

ສມັຍຂອງໂປຣັນເບິ່ງຄືວ່າຢູ່ໄກຈາກສມັຍຂອງພວກເຮົາ. ພວກເຮົາຄິດບໍ່ເຖິງເຣື່ອງການກົດຂີ່ຂົ່ມເຫງແລະພັຍອັນຕະລາຍ. ຫລາຍເທື່ອພວກເຮົາຄິດວ່າການເປັນພະຍານເປັນເຣື່ອງທີ່ເຮົາເລືອກໄດ້, ຫລືເປັນເຣື່ອງທີ່ເຮົາຄວນຈະເຮັດ ຖ້າມີເວລາ. ໂປຣັນຮູ້ເຣື່ອງນີ້ດີ. ຄວາມຈິງແລ້ວ ຄຣິສຕຽນໃນສມັຍນີ້ກໍຖືກການກົດຂີ່ຂົ່ມເຫງຢ່າງຮ້າຍແຮງເພາະການເປັນພະຍານເຣື່ອງພຣະເຈົ້າ. ຄຣິສຕຽນທີ່ປະເທດລາວຫລາຍຄົນຖືກທຸບຕີ, ຖືກກັກຂັງ, ແລະຖືກເນຣະເທດອອກຈາກບ້ານເກີດເມືອງນອນ ເພາະການປະກາດຂ່າວປະເສີດ ແລະການດໍາເນີນຊີວິດເພື່ອເປັນພະຍານເຣື່ອງພຣະເຢຊູຄຣິດ. ຄຣິສຕຽນພວກນີ້ຄືຕົວຢ່າງເຣື່ອງຄວາມອົດທົນໃນການເປັນພະຍານທີ່ ໂປຣັນກໍາລັງເວົ້າເຖິງໃນບົດຮຽນນີ້.

<u>ສອງ</u>, ໂປຣັນໄດ້ເຫັນຄົນສອງຄົນທີ່ຕໍ່ສູ້ຈັກພັດດ້ວຍຄໍາພະຍານຂອງພວກເຂົາ. ພວກເຂົາໄດ້ທໍາງານໃນຊ່ວງເວລາສີ່

ສິບສອງເດືອນຂອງການກົດຂີ່ຂົ່ມເຫງ. ໂຢຮັນໄດ້ອ້າງອີງໃສ່ພາບພົດໃນພຣະສັນຍາເດີມເພື່ອອະທິບາຍພຍານສອງຄົນນີ້: ຕົ້ນໝາກກອກເທດສອງຕົ້ນ (ເສກາລີຢາ 4:1-14); ອຳນາດປິດທ້ອງຟ້າບໍ່ໃຫ້ຝົນຕົກ (1 ກະສັດ 17:1); ຣິດອຳນາດ ເພື່ອເຮັດນ້ຳໃຫ້ກາຍເປັນເລືອດ (ອົພຍົບ 7:17-19). ໂຢຮັນບໍ່ໄດ້ບອກວ່າພະຍານສອງຄົນນັ້ນແມ່ນໃຜ, ແຕ່ໃນປະເພນີ ຄຣິສຕຽນແມ່ນເຊື່ອວ່າບຸກຄົນສອງຄົນນັ້ນຄື ເອລີຢາ ແລະໂມເຊ. ຜູ້ປະກາດພຣະທັມເອລີຢານຳພຣະທັມໄປໃຊ້ໃນສັງ ຄົມຂອງເພິ່ນ; ທ່ານຕໍ່ຕ້ານຄວາມບໍ່ຍຸດຕິທັມ ແລະຂານໄຫວ້ພຣະທຽມ. ໂມເຊນຳພຣະບັດຍັດຂອງພຣະເຈົ້າມາໃຫ້ມະ ນຸດຊາດ; ທ່ານໄດ້ຕັ້ງຣະບຽບເພື່ອວັດແທກການນະມັສການແລະ ການຢູ່ຮ່ວມກັນ. ບໍ່ວ່າພະຍານສອງຄົນນັ້ນຈະແມ່ນໃຜແທ້, ພວກເຂົາກ້າເວົ້າຄວາມຈິງກັບອຳນາດການປົກຄອງ; ພວກເຂົາໄດ້ທ້າທາຍວິທີການຂອງກຸງໂຣມ.

ຄຣິສຕະຈັກຈະຕ້ອງເຮັດຫຍັງໃນເວລາທີ່ຖືກຂົ່ມເຫງຢ່າງຮ້າຍແຮງ? ໂຢຮັນໄດ້ບອກວ່າ, ຈົ່ງເອົາຕົວຢ່າງຈາກພະຍານສອງຄົນນີ້. ເປັນພະຍານເຣື່ອງພຣະເຈົ້າທີ່ພວກເຮົາຮູ້ໃນພຣະຄຣິດ. ນະມັສການພຣະເຈົ້າ. ເວົ້າເຣື່ອງພຣະເຈົ້າ. ເຮັດການດີໃນພຣະນາມພຣະເຈົ້າ. ໂຢຮັນເຊື່ອ ວ່າການເຮັດສິ່ງເຫລົ່ານີ້ຈະມີຣິດເດດຫລາຍ ເມື່ອຕິດຕາມດ້ວຍການນະມັສການ ແລະການອະທິຖານເປັນປະຈຳໃນເວລາຖືກຄວາມຍາກລຳບາກ.

ການເປັນພະຍານຫລາຍເທື່ອກໍມີຣາຄາສູງ. ໂຢຮັນໄດ້ເຫັນສັດຮ້າຍຂຶ້ນມາຈາກທະເລເລິກ. ຕາມຄວາມເຂົ້າໃຈຂອງຂ້າພະເຈົ້າ ສັດຮ້າຍຄືອຳນາດຂອງກຸງໂຣມທີ່ຕອບໂຕ້ຄຳພະຍານຂອງຄຣິສຕະຈັກ. ສັດຮ້າຍໄດ້ຂ້າພະຍານທັງສອງຄົນແລ້ວປະສົບຂອງພວກເຂົາຢູ່ກາງຖນົນເປັນເວລາສາມມື້ເຄິ່ງ ເພື່ອເປັນການປະນາມເຂົາ. ປະເພນີຂອງຊາວຢິວເຊື່ອວ່າຫຼັງຈາກສາມວັນຈິດວິນຍານໄດ້ອອກຈາກຮ່າງກາຍ ແລະຄວາມຫວັງທີ່ຈະເຫັນຊີວິດນັ້ນກັບຄືນມາກໍບໍ່ມີເລີຍ.

ຄົນທັງຫລາຍໃນເຄືອຈັກພົບພາກັນຊົມຊື່ນຍິນດີເມື່ອເຫັນຜູ້ກໍ່ບັນຫາໄດ້ຕາຍໄປ. ພວກເຮົາກໍຄົງຈະຄິດເຊັ່ນດຽວກັນເພາະບໍ່ມີໃຜທີ່ຢາກຟັງຄຳເຕືອນເຣື່ອງພຣະເຈົ້າຜູ້ຊົງຕໍ່ສູ້ກັບຄວາມນຶກຄິດ, ຄວາມຕ້ອງການ, ແລະອຸປນິສັຍຂອງພວກເຮົາ. ແຕ່ການສເລີມສລອງນັ້ນກາຍເປັນເວລາສັ້ນ. ພຣະເຈົ້າຊົງບັນດານໃຫ້ຜູ້ປະກາດພຣະທັມທັງສອງຄືນມີຊີວິດ ແລະພຣະອົງຊົງຮັບພວກເຂົາຂຶ້ນໄປເທິງສວັນ. ຫລັງຈາກນັ້ນກໍເກີດແຜ່ນດິນໄຫວຢ່າງໃຫຍ່; ນະຄອນກໍເພພັງແລະມີຄົນຕາຍເຈັດພັນຄົນ.

ສິ່ງອັສຈັນກໍໄດ້ເກີດຂຶ້ນ. ຄວາມດື້ດ້ານແລະການຕໍ່ສູ້ພຣະເຈົ້າໄດ້ຫາຍໄປ, ແລະຝູງຊົນໄດ້ພາກັນຖວາຍພຣະກຽດແດ່ພຣະຜູ້ເປັນເຈົ້າ. ພຣະຫັດອັນຊົງຣິດຂອງພຣະເຈົ້າ ແລະການເປັນພະຍານຢ່າງສັດຊື່ເປັນເຫດໃຫ້ສິ່ງເຫລົ່ານີ້ເກີດຂຶ້ນ.

ແກທີເຈັດໄດ້ດັງຂຶ້ນ, ແຕ່ບໍ່ມີພັຍພິບັດຫຍັງ ນອກຈາກສຽງສັຣເສີນພຣະເຈົ້າແລະພຣະຄຣິດຂອງພວກທູດສວັນແລະພວກຜູ້ອະວຸໂສ. ພວກເຂົາໄດ້ກ່າວວ່າພຣະຜູ້ເປັນເຈົ້າໄດ້ຊົງສເວີຍຣາດ; ພຣະອົງໄດ້ທຳລາຍອຳນາດໂຣມ ແລະການຂາບພຣະທຽມຂອງພວກມັນ ແລະພຣະເຈົ້າໄດ້ຊົງປົດປ່ອຍໄພ່ພົນຂອງພຣະອົງຈາກການຂົ່ມເຫງ. ພວກເຂົາຈະໄດ້ຮັບລາງວັນຂອງພວກຕົນເພາະພຣະເຈົ້າໄດ້ຊັຍຊະນະແລ້ວ.

<u>ຄຳຖາມ:</u>

1. ທ່ານມີຄວາມຮູ້ສຶກວ່າ ທ່ານຈຳເປັນຕ້ອງໄດ້ເກັບຄວາມສັມພັນຂອງທ່ານແລະພຣະເຢຊູໄວ້ເປັນຄວາມລັບບໍ່? ຖ້າເປັນຢ່າງນັ້ນໃຫ້ອະທິບາຍສະຖານະການ, ສິ່ງທີ່ທ່ານໄດ້ເຮັດ, ແລະເປັນຫຍັງທ່ານຈຶ່ງເຮັດຢ່າງນັ້ນ?

2. ທ່ານຄິດວ່າຄວາມສັດຊື່ຂອງທ່ານເຣື່ອງການນະມັສການພຣະເຈົ້າອີງທ່ຽງແທ້ແມ່ນການເປັນພະຍານໃຫ້ກັບຊາວໂລກບໍ່? ຖ້າເປັນ, ທ່ານຄິດວ່າການນະມັສການນັ້ນກຳລັງເວົ້າຫຍັງກັບພວກເຂົາ?

3. ທ່ານເຄີຍຮູ້ຜູ້ໃດຜູ້ນຶ່ງທີ່ໄດ້ຮັບຄວາມຍາກລຳບາກຢ່າງຮ້າຍແຮງເພາະເຂົາເປັນຄຣິສຕຽນຜູ້ສັດຊື່ບໍ່? ເຣື່ອງຂອງເຂົາປ່ຽນແປງຊີວິດຂອງທ່ານແນວໃດ?

4. ຖ້າທ່ານແນະນຳຄຣິສຕຽນໃໝ່ເຣື່ອງວິທີທີ່ຈະຈະເຣີນກ້າວໜ້າໃນອະນາຄົດ, ທ່ານຈະແນະນຳເຂົາແນວໃດ? ທ່ານຄິດວ່າຄຳແນະນຳຂອງໂປໂຣັນສຳລັບຄຣິສຕຽນໃໝ່ ຈະແຕກຕ່າງກັບຄຳແນະນຳຂອງທ່ານແນວໃດ?

# ບົດຮຽນທີ 8
# ຕໍ່ສູ້ກັບອຳນາດມານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 12:1-6, 13-18; 13:1-4, 11-18
ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະນິມິດ 12---13
ຈຸດສຳຄັນຂອງບົດຮຽນນີ້: ໃນຂະນະທີ່ໄພ່ພົນຂອງພຣະເຈົ້າປະເຊີນໜ້າກັບການຕໍ່ຕ້ານ ແລະການທ້າທາຍຈາກອຳນາດມານ, ພວກເຮົາຕ້ອງດຳເນີນຊີວິດດ້ວຍຄວາມອົດທົນແລະຄວາມເຊື່ອ, ໝັ້ນໃຈໃນຊັຍຊະນະຂອງພຣະເຈົ້າ.
ຄຳຖາມເພື່ອການສຳຣວດ: ມີອຳນາດມານປະເພດໃດແດ່ທີ່ກຳລັງຕໍ່ສູ້ວຽກງານຂອງພຣະເຈົ້າໃນສມັຍນີ້?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍພຶດຕິການຂອງອຳນາດມານໃນພຣະທັມຕອນນີ້ແລະພິສູດເບິ່ງສິ່ງທີ່ເກີດຂຶ້ນໃນສມັຍຂອງໂຢຮັນ ແລະສມັຍຂອງພວກເຮົາ.

| |
|---|
| ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້: |
| • ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້. |
| • ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ. |

## ຄຳນຳ

ການຕໍ່ສູ້ກັບມານຕ້ອງມີການດີ້ນຮົນ ແລະບາງຄັ້ງຍັງມີການເຈັບປວດ. ການດີ້ນຮົນແລະຄວາມຍາກລຳບາກໃນທາງຂອງພຣະຄຣິດກໍຄືການມີຊັຍຊະນະໄປໃນຕົວ ເພາະພຣະເຢຊູຊົງເປັນຜູ້ຊະນະ.

ຄວາມມືດແມ່ນພາກສ່ວນຂອງໂລກນີ້, ແລະພວກເຮົາຈະຕ້ອງຕໍ່ສູ້ກັບມານ. ໂຢຮັນແລະຜູ້ຄົນທີ່ທ່ານໄດ້ຂຽນຈົດໝາຍໄປເຖິງ ໄດ້ປະເຊີນກັບຄວາມກົດດັນເພື່ອໃຫ້ເຮັດຕາມການເມືອງ, ການເສຖກິດ, ແລະສາສນາທີ່ຢູ່ອ້ອມຮອບພວກເຂົາ. ຜູ້ທີ່ບໍ່ເຮັດຕາມສິ່ງເຫລົ່ານັ້ນໃນຈັກພັດໂຣມກໍຖືກຂົ່ມເຫງທາງດ້ານຮ່າງກາຍແລະບາງຄັ້ງກໍເຖິງຄວາມຕາຍ. ຄຣິສຕຽນບາງພວກ ຄິດວ່າພວກຕົນສາມາດທີ່ຈະເຮັດຕາມອຳນາດການປົກຄອງແລະໃນຂະນະດຽວກັນກໍເປັນຜູ້ເຊື່ອທີ່ສັດຊື່. ເພື່ອຄົນພວກນີ້, ໂຢຮັນຕັ້ງໃຈທີ່ຈະອະທິບາຍໃຫ້ພວກເຂົາໄດ້ເຫັນທາດແທ້ຂອງອຳນາດມານ. ສຳລັບຜູ້ສັດຊື່ທີ່ຖືກຂົ່ມເຫງ, ພຣະທັມພຣະນິມິດເປັນພຣະທັມສຳລັບໜູນໃຈ. ຣິດເດດແລະຊັຍຊະນະຂອງພຣະເຈົ້າແລະຂອງພຣະເມສານ້ອຍປາກົດໃຫ້ເຫັນຢ່າງແຈ່ມແຈ້ງຢູ່ໃນພຣະທັມນີ້.

ໃນຂະນະທີ່ໂຢຮັນກຳລັງຂຽນຈົດໝາຍນີ້ໄປເຖິງຄຣິສຕະຈັກທັງຫລາຍທີ່ຖືກການກົດດັນ ແລະຈະຖືກກົດດັນຢ່າງຮ້າຍແຮງຂຶ້ນໃນບໍ່ຊ້າ, ທ່ານກໍໄດ້ເວົ້າເຖິງເຣື່ອງການປົດປ່ອຍຄຣິສຕະຈັກໃຫ້ອອກຈາກພວກສັດຕຣູທັງຫລາຍດ້ວຍ. ໃນການຂຽນຂອງໂຢຮັນ, ທ່ານໄດ້ໃຊ້ຮູບພາບອັນໜ້າຢ້ານກົວເພື່ອອະທິບາຍສັດຕຣູຂອງພຣະຄຣິດ ແລະຄຣິສຕະຈັກຂອງພຣະອົງ; ໃນຂະນະດຽວກັນໂຢຮັນກໍໄດ້ໃຊ້ຮູບພາບອັນໜ້າຢ້ານເພື່ອອະທິບາຍການປົດປ່ອຍທີ່ຈະມາເຖິງ.

### 1. ຄວາມຜິດພາດຂອງພຍານາກ (12:1-6)

ໂຢຮັນໄດ້ອະທິບາຍໝາຍສຳຄັນໃນສວັນ (12:1). ຄຳວ່າ "ສວັນ" ໃນທີ່ນີ້ ບອກໃຫ້ຮູ້ວ່ານິມິດນີ້ແມ່ນມາຈາກພຣະຜູ້

ເປັນເຈົ້າ. ໝາຍນີ້ຄືຜູ້ຍິງ. ພຣະຄັມພີມັກໃຊ້ຮູບພາບເພດຍິງເມື່ອເວົ້າເຖິງໄພ່ພົນຂອງພຣະເຈົ້າ, ທັງທາງດີແລະທາງຮ້າຍ (ອຊຢ 54:1; 62:5; 66:7-10). ໃນພຣະທັມຂໍ້ 12:1 ນີ້ ແມ່ນການໃຊ້ໄປໃນທາງດີ. "ດາວສິບສອງດວງ" ໃນ 12:1 ແມ່ນໄພ່ພົນຂອງພຣະເຈົ້າ. ພວກເຮົາເຫັນຕົວຢ່າງໃນ ປະຖົມການ 37:9 ເວລາໂຢເຊັບເລົ່າຄວາມຝັນຂອງເຂົາຊຶ່ງເຂົາໄດ້ເວົ້າວ່າດວງຕາເວັນ, ດວງຈັນ, ແລະດາວສິບເອັດດວງໄດ້ກົ້ມກາບເຂົາ. ຢາໂຄບຜູ້ເປັນພໍ່ ໄດ້ຕີຄວາມໝາຍຂອງຄວາມຝັນນັ້ນວ່າ ເຂົາເອງ, ແມ່ຂອງໂຢເຊັບ, ແລະອ້າຍນ້ອງທັງໝົດຂອງໂຢເຊັບຈະໄດ້ກົ້ມກາບລົງຕໍ່ໜ້າໂຢເຊັບເມື່ອເຂົາໄດ້ຂຶ້ນຄອງຣາດ; ໃນຕອນນັ້ນຢາໂຄບເຫັນວ່າມັນເປັນພຽງເຣື່ອງຊວນຫົວ (ປຖກ 37:11). ພາຍຫລັງມາພວກເຮົາຮູ້ວ່າດາວສິບສອງດວງແມ່ນອ້າຍນ້ອງຂອງໂຢເຊັບສິບເອັດຄົນ ແລະດາວຍັງໝາຍເຖິງຕະກຸນຂອງອິສຣາເອັນ. ເບື້ອງຫລັງເຫລົ່ານີ້ໄດ້ຊ່ວຍໂຢຮັນໃນການບັລຍາຍນິມິດໝາຍຂອງເຂົາກ່ຽວກັບຜູ້ຍິງ. ເພື່ອຄວາມເຂົ້າໃຈງ່າຍ, ໃຫ້ຄິດວ່າຜູ້ຍິງໃນພຣະນິມິດ 12:1 ແມ່ນໄພ່ພົນຂອງພຣະເຈົ້າ.

ໝາຍທີສອງຄື "ພຍານາກໃຫຍ່ສີແດງ" ຊຶ່ງແມ່ນພຍາມານ (12:3). ພຍານາກຕົວນີ້ມີເຈັດຫົວແລະສິບເຂົາ. ເຈັດໝາຍເຖິງຄວາມຄົບສົມບູນ; ສິບໝາຍເຖິງມະນຸດ ແລະເຂົາໝາຍເຖິງຣິດອຳນາດ. ສັດຕົວນີ້ມີຣິດອຳນາດຊຶ່ງເປັນຂອງມະນຸດ ແລະມັນບໍ່ມີອຳນາດຄົບຖ້ວນເໝືອນດັ່ງພຣະເມສານ້ອຍຜູ້ມີເຈັດເຂົາ (12:5). ຄົນຢິວເຄີຍຮູ້ຈັກເຣື່ອງພຍານາກ (ພສສ 74:13-15). ຄົນກຣີກກໍຮູ້ເຣື່ອງນີ້ເຊັ່ນກັນ ເພາະໃນນິທານຂອງຄົນກຣີກ, ເຮີຄິວລີສໄດ້ຕໍ່ສູ້ກັບພຍານາກ; ພຍານາກຫລືງູໃຫຍ່ໝາຍເຖິງອຳນາດມານ. ໂຢຮັນໄດ້ໃຊ້ຮູບພາບເຫລົ່ານີ້ໃນຈຸດປະສົງຂອງທ່ານ.

ພຍານາກໃນພຣະນິມິດ 12:4 ເປັນສັດທີ່ໜ້າຢ້ານເພາະມັນ "ໄດ້ຟາດດວງດາວໃນທ້ອງຟ້ານຶ່ງສ່ວນສາມລົງໃສ່ແຜ່ນດິນໂລກ." ດວງດາວໝາຍເຖິງພວກເທວະດາ ຫລືບາງຄັ້ງກໍໝາຍເຖິງອິສຣາເອັນ (ດນອ 12:3). ຣິດອຳນາດຂອງພຍານາກໂຕນີ້ກໍມີຂອບເຂດ ເພາະມັນສາມາດຟາດດວງດາວລົງໄດ້ແຕ່ພຽງນຶ່ງສ່ວນສາມ, ແລະໃນທີ່ສຸດມັນກໍໄດ້ກາຍເປັນຜູ້ພ່າຍແພ້ ແລະໄດ້ຖືກຊັດຖິ້ມລົງ (12:9).

ພຍານາກພຍາຍາມທຳລາຍແຜນຂອງພຣະເຈົ້າໂດຍຈະກິນລູກຂອງຜູ້ຍິງ. ຜູ້ຍິງໝາຍເຖິງອິສຣາເອັນ ຫລືໄພ່ພົນຂອງພຣະເຈົ້າ, ແລະລູກຂອງຜູ້ຍິງໝາຍເຖິງພຣະເຢຊູ. ລູກຜູ້ນີ້ຈະ "ປົກຄອງປະຊາຊາດທັງປວງ" ແລະລາວໄດ້ຖືກຍາດເອົາໄປແລະ "ໄດ້ຊົງຖືກຍົກຂຶ້ນເມືອເຖິງພຣະເຈົ້າແລະເຖິງພຣະບັນລັງຂອງພຣະອົງ" (12:5), ສິ່ງເຫລົ່ານີ້ໝາຍເຖິງການຄືນພຣະຊົນຈາກຄວາມຕາຍຂອງພຣະເຢຊູ. ໃນພາບນີ້, ໂຢຮັນໄດ້ເວົ້າເຖິງຄວາມຜິດຫວັງຂອງພຍານາກທີ່ຈະມີອຳນາດເໜືອລູກຊາຍຂອງຜູ້ຍິງ. ການພ່າຍແພ້ຂອງຊາຕານໄດ້ມາເຖິງເມື່ອພຣະເຢຊູໄດ້ສິ້ນພຣະຊົນ ແລະໄດ້ ຄືນພຣະຊົນຈາກຄວາມຕາຍ. ພຍານາກບໍ່ສາມາດທີ່ຈະຊະນະພຣະເຢຊູ; ພຣະອົງໄດ້ຮັບຕຳແໜ່ງຜູ້ປົກຄອງກັບພຣະເຈົ້າໃນພຣະຣາຊບັນລັງຂອງພຣະອົງ.

ຜູ້ຍິງໄດ້ຮັບການປົດປ່ອຍເມື່ອພຣະເຈົ້າໄດ້ຊົງຕຽມບ່ອນໄວ້ໃຫ້ນາງຢູ່ໃນປ່າ. ປ່າໃນ 12:6 ໄດ້ເຕືອນຊົນຊາດອິສຣາເອນ ເຣື່ອງການປົດປ່ອຍຈາກການເປັນທາດທີ່ປະເທດເອຢິບ. ປ່າເປັນບ່ອນທຸກຍາກລຳບາກສຳລັບໄພ່ພົນຂອງພຣະເຈົ້າໃນພຣະສັນຍາເດີມ, ແຕ່ພຣະເຈົ້າໄດ້ຊົງຈັດຫາທຸກຢ່າງສຳລັບຄຣິສຕະຈັກທີ່ກຳລັງຢູ່ໃນປ່າໃນຂະນະທີ່ເຂົາກຳລັງກ້າວໄປສູ່ແຜ່ນດິນແຫ່ງພຣະສັນຍາ. ຄຣິສຕະຈັກໄດ້ "ຮັບການລ້ຽງດູ" ໃນທີ່ນັ້ນ "ເປັນເວລາພັນສອງຮ້ອຍຫົກສິບວັນ" (12:6). ຊ່ວງເວລານີ້ໝາຍເຖິງຊ່ວງເວລາຂອງຄວາມທຸກລຳບາກຄັ້ງໃຫຍ່ທີ່ຈະເກີດຂຶ້ນ.

ໃນເວລາລຳບາກ, ພຣະເຈົ້າຈະຊົງລ້ຽງດູໄພ່ພົນຂອງພຣະອົງ. ພຣະອົງເຄີຍໄດ້ກະທຳກັບຊົນຊາດອິສຣາເອນໃນປ່າກັນດານສັນໃດ, ພຣະອົງກໍຈະຊົງກະທຳເຊັ່ນນັ້ນກັບຄຣິສຕະຈັກໃນສມັຍຂອງໂຢຮັນສັນນັ້ນ. ສິ່ງເຫລົ່ານີ້ກໍຈະເປັນຄວາມຈິງສຳລັບຄຣິສຕະຈັກໃນທຸກໆສມັຍເຊັ່ນກັນ.

2. ການປົດປ່ອຍອີກຄັ້ງນຶ່ງ (12:13-18)

ພຍານາກພຍາຍາມໄລ່ຕາມຜູ້ຍິງ ຊຶ່ງແມ່ນໄພ່ພົນຂອງພຣະເຈົ້າ, ແຕ່ຜູ້ຍິງໄດ້ເອົາຕົວລອດເພາະພຣະເຈົ້າໄດ້ປະທານ "ປີກນົກອິນຊີໃຫຍ່ສອງປີກໃຫ້ແກ່ຍິງນັ້ນ" (12:14). ປີກແລະປີກຂອງນົກອິນຊີເປັນຮູບພາບຂອງການປົກປັກຮັກສາແລະກຳລັງຂອງພຣະເຈົ້າ (ພສສ 17:8, 36:7; ຢຣມ 49:22; ອຊຢ 40:31). ເພາະປີກນັ້ນ, ນາງໄດ້ໄປເຖິງບ່ອນທີ່ນາງ "ຈະໄດ້ຮັບການລ້ຽງດູໃນຊົ່ວເວລານຶ່ງ, ສອງເວລາ, ກັບເຄິ່ງເວລາ" (12:14). ນີ້ຄືເວລາສາມປີເຄິ່ງທີ່ໝາຍເຖິງຊ່ວງຂອງການຂົ່ມເຫງຊຶ່ງໄພ່ພົນຂອງພຣະເຈົ້າຕ້ອງການການປົກປັກຮັກສາແລະການດູແລ. ການໄລ່ຕາມຜູ້ຍິງຂອງພຍານາກກໍມີຂອບເຂດ ແລະຫລັງຈາກນັ້ນງູກໍ "ພັດ" ນາງດ້ວຍນ້ຳຖ້ວມ (ພສສ 32:6, 69:15). ນ້ຳຖ້ວມໝາຍເຖິງການລົງໂທດຫລືການທຸກລຳບາກ. ໃນກໍຣະນີນີ້ແມ່ນເວົ້າເຖິງການທຸກລຳບາກຂອງໄພ່ພົນຂອງພຣະເຈົ້າ.

ເມື່ອນັ້ນ, ແຜ່ນດິນກໍໄດ້ສູງຂຶ້ນແລະກືນກິນນ້ຳເພື່ອຊ່ວຍຜູ້ຍິງ. ແຕ່ພຍານາກກໍບໍ່ໄດ້ລົດລະເພາະຈຸດປະສົງຂອງມັນຄືການເຮັດສົງຄາມກັບລູກຂອງຜູ້ຍິງ (12:17). ຄຣິສຕະຈັກໄດ້ພົບກັບຄວາມລຳບາກແລະການຂົ່ມເຫັງຈາກພຍານາກ. ສົງຄາມຣະຫວ່າງໄພ່ພົນຂອງພຣະເຈົ້າແລະພຍານາກຈະມີຢູ່ຕໍ່ໄປເໝືອນທີ່ພຣະທັມປະຖົມການ 3:15 ໄດ້ກ່າວໄວ້. ໃນພຣະນິມິດ 12:13-16, ຜູ້ຂຽນໄດ້ຊີ້ໃຫ້ເຫັນວ່າພຣະເຈົ້າຈະຊົງໃຫ້ທາງອອກໃນທຸກເວລາທີ່ຖືກຈົ່ມຕີ.

ຄຣິສຕະຈັກໃນສມັຍນີ້, ຜູ້ທີ່ຖືຮັກສາ "ຂໍ້ບັນຍັດຂອງພຣະເຈົ້າ" ແລະຍຶດຖື "ຄຳພຍານຝ່າຍພຣະເຢຊູ" ກໍຮູ້ການຕາມລ້າຂອງພຍາມານແລະການປົດປ່ອຍຂອງພຣະເຈົ້າເຊັ່ນກັນ. ພຍາມານກຳລັງຕັ້ງຫລັກຢູ່ທີ່ "ຫາດຊາຍທະເລ" (12:18).

3. ສັດຮ້າຍຢູ່ກັບພວກເຮົາ (13:1-4)

ສັດຮ້າຍຂຶ້ນມາຈາກທະເລ ເປັນຮູບພາບທີ່ໜ້າຢ້ານໃນຄວາມຄິດຂອງພວກເຮົາ. ພາບນີ້ໝາຍເຖິງອີກອຳນາດນຶ່ງທີ່ຕໍ່ຕ້ານຄຣິສຕະຈັກ. ແຕ່ສຳລັບໂຢຮັນ ຮູບພາບນີ້ໝາຍເຖິງອຳນາດຂອງໂຣມແລະການຂາບໄຫວ້ຈອມຈັກພັດ; ທະເລໝາຍເຖິງມະນຸດທັງຫລາຍທີ່ຍັງສັບສົນຢູ່. ສັດຮ້າຍໂຕນີ້ມີສິບຫົວຊຶ່ງໝາຍເຖິງລັກສນະຂອງມະນຸດທີ່ມີສະຕິປັນຍາແລະຊີວິດອັນມີຂອບເຂດເມື່ອປຽບທຽບໃສ່ພຣະຜູ້ເປັນເຈົ້າແລະໄພ່ພົນຂອງພຣະອົງ. "ຄຳໝິ່ນປມາດ" (13:1) ອາດຈະໝາຍເຖິງຈັກພັດຂອງໂຣມບາງຄົນທີ່ບັງຄັບໃຫ້ຄົນທັງຫລາຍຂາບໄຫວ້ພວກຕົນວ່າເປັນພຣະເຈົ້າ.

ຫົວນຶ່ງຂອງສັດມີບາດແຜເໝືອນກັບວ່າ "ຖືກຟັນ" ແລະ "ໄດ້ຖືກປົວໃຫ້ດີແລ້ວ" (13:3). ຫລາຍຄົນຄິດວ່າອັນນີ້ແມ່ນຈັກພັດເນໂຣ ຜູ້ທີ່ໄດ້ປາບປາມຄຣິສຕຽນຢ່າງຮ້າຍແຮງທີ່ກຸງໂຣມຣະຫວ່າງປີ ຄສ 64-68 ແລະຍັງມີຊີວິດຢູ່ ຫລືຈະຖືກເຮັດໃຫ້ກັບມາມີຊີວິດອີກເມື່ອຄອງຣາດແບບຮຸນແຮງ. ສຳລັບຄຣິສຕະຈັກໃນສມັຍນັ້ນ, ເນໂຣແມ່ນຜູ້ທີ່ໂຫດຮ້າຍທີ່ສຸດ. ພຣະນິມິດ 13:5-10 ກ່າວເຖິງສິ່ງຮ້າຍແຮງຕ່າງໆທີ່ສັດຮ້າຍໄດ້ເຮັດ. ເຈັດຫົວໃນ 13:1 ໝາຍເຖິງພວກຈັກພັດທັງຫລາຍຊຶ່ງມີ ເນໂຣເປັນຜູ້ນຶ່ງໃນຈຳນວນນັ້ນ.

ສັດຮ້າຍໃຊ້ອຳນາດຂອງຊາຕານ. ປະຊາຊົນພາກັນບູຊາມັນ (13:4). ສັດຮ້າຍນີ້ປາກົດວ່າມີອຳນາດຫລາຍແລະເບິ່ງຄືວ່າຄົງບໍ່ມີໃຜທີ່ຈະເອົາຊະນະມັນໄດ້. ຄວາມຈິງແລ້ວໃນບົດຮຽນຕໍ່ໄປພວກເຮົາຮູ້ວ່າສັດຮ້າຍນີ້ໄດ້ຖືກພ່າຍແພ້ແລ້ວແລະກໍຈະພ່າຍແພ້ອີກໃນອະນາຄົດ.

ເຖິງວ່າໂຢຮັນຈະເວົ້າເຖິງອຳນາດຂອງໂຣມໃນສມັຍຂອງທ່ານ, ສິ່ງທີ່ທ່ານໄດ້ເວົ້າອາດຈະເປັນຈິງໄດ້ໃນທຸກເວລາເຊັ່ນພວກເຮົາໄດ້ເຫັນ ຮິດເລີ້ແລະສຕາລິນ ຜູ້ພຍາຍາມບັງຄັບໃຫ້ປະຊາຊົນນັບຖືພວກເຂົາເໝືອນພຣະເຈົ້າ. ຄວາມຈິງທີ່ໂຢຮັນໄດ້ເຫັນໃນປະວັດສາດຂອງທ່ານ ກໍຍັງເປັນຄວາມຈິງສຳລັບຄຣິສຕະຈັກທີ່ກຳລັງຕໍ່ສູ້ກັບສັດຮ້າຍຂອງພວກ

ມານ. ສັດຮ້າຍອາດມາໄດ້ໃນຫລາຍຮູບແບບ ເຊັ່ນການອິດສາຜິວພັນ ຫລືການກວດລ້າງເຊື້ອຊາດ. ສັດຮ້າຍອາດຈະປາກົດຕົວໃນສະຖາບັນຕ່າງໆ ແລະໃນຜູ້ນຳຜູ້ໄດ້ກາຍເປັນເຄື່ອງມືຂອງພຍາມານ ພວກເຮົາສາມາດທີ່ຈະແຍກພວກສັດອອກໄດ້ຢ່າງງ່າຍໆ ເວລາເຮົາປຽບທຽບພວກເຂົາໃສ່ພຣະຄຣິດຜູ້ເປັນພຣະເຈົ້າແລະພຣະຜູ້ໂຜດຂອງພວກເຮົາ. ອຳນາດມານສາມາດທຳລາຍສັງຄົມ ແລະມັນສາມາດທີ່ຈະທຳລາຍພວກເຮົາຖ້າເຮົາບໍ່ລະວັງ.

4. <u>ສັດຮ້າຍອີກນຶ່ງໂຕມາຊ່ວຍສັດໂຕທຳອິດ (13:11-18)</u>

ໂຢຮັນໄດ້ເຫັນສັດຮ້າຍອີກໂຕນຶ່ງຂຶ້ນມາຈາກດິນ. ສັດໂຕນີ້ມີສອງເຂົາເໝືອນແກະນ້ອຍ (13:11). ສັດໂຕນີ້ມີອຳນາດແຕ່ບໍ່ເທົ່າທຽມກັບອຳນາດຂອງພຣະຄຣິດ. ມັນໃຊ້ອຳນາດເຮັດໃຫ້ຄົນບູຊາສັດຮ້າຍໂຕເດີມທີ່ອອກມາຈາກທະເລ. ໃນສມັຍຂອງໂຢຮັນ ສັດຮ້າຍທີ່ເໝືອນກັບແກະນ້ອຍໝາຍເຖິງການບູຊາພວກຈັກພັດ. ພວກເຂົາໃຊ້ທຸກວິທີທາງເພື່ອບັງຄັບໃຫ້ທຸກຄົນຈົ່ງຮັກພັກດີຕໍ່ຈັກພັດ. ເຄື່ອງໝາຍທີ່ "ມືຂວາຫລືທີ່ໜ້າຜາກ" ບອກໃຫ້ຮູ້ເຖິງການເປັນເຈົ້າຂອງ (13: 17). ສັດຮ້າຍສາມາດໃຊ້ເຄື່ອງໝາຍນີ້ເປັນເຄື່ອງມືເພື່ອຄວບຄຸມເຣື່ອງເສຖກິດ, ການເມືອງ, ແລະການທະຫານ.

ເລກ 666 ແມ່ນເລກຂອງສັດຮ້າຍ (13:18). ກະສັດ, ສັນຕະປາປາ, ປະທານາທິບໍດີ, ແລະນາຍທະຫານໃນອະດີດເຄີຍຖືກກ່າວຫາວ່າເປັນສັດຮ້າຍ. ມີທິສດີນຶ່ງທີ່ໃຫ້ຄຸນຄ່າຕົວເລກກັບອັກສອນພາສາອັງກິດເຊັ່ນ A ເທົ່າກັບ 100, B ເທົ່າກັບ 101, C ເທົ່າກັບ 102, ແລະຕໍ່ໆໄປ. ຫລັງຈາກນັ້ນກໍບວກຈຳນວນທັງໝົດເພື່ອຈະໄດ້ຄຸນຄ່າສຸດທ້າຍ ເຊັ່ນຊື່ "Hilter" ຈະມີຄຸນຄ່າ 666. ຊື່ "ເນໂຣ ກາຍຊາ" ເມື່ອແປຈາກພາສາກຣີກມາເປັນພາສາເຮັບເຣີ ແລ້ວໃສ່ຄຸນຄ່າລົງໄປກໍຈະອອກມາເປັນ 666. ການໃຫ້ຊື່ກັບຜູ້ໃດຜູ້ນຶ່ງວ່າ 666 ແມ່ນການບອກວ່າຄົນຜູ້ນັ້ນແມ່ນພຍາມານໂຕຮ້າຍ.

ພຶດຕິການຂອງສັດຮ້າຍຈະມີຢູ່ທຸກສມັຍ. ໃນສມັຍນີ້ພວກເຮົາກໍໄດ້ເຫັນການຮ່ວມມືກັນລະຫວ່າງຣັດແລະສາສນາ. ເວລາໃດມີການສັມພັນປະເພດນີ້, ພວກເຮົາຈະເຫັນການກົດຂີ່ຂົ່ມເຫງເກີດຂຶ້ນ. ຄຣິສຕຽນບໍ່ຄວນເປັນນຶ່ງກັບອຳນາດຣັດເພາະງານຂອງຣັດແລະງານຂອງຄຣິສຕະຈັກບໍ່ເໝືອນກັນ . ຣັດບໍ່ສາມາດທີ່ຈະເຮັດຕາມຄຳເອີ້ນຂອງພຣະເຢຊູ ເພາະການຊົງເອີ້ນຂອງພຣະເຢຊູແມ່ນເພື່ອຄຣິສຕະຈັກ.

<u>ຄຳຖາມ:</u>

1. ທ່ານເຫັນ "ສັດ" ໂຕໃດແດ່ ຢູ່ໃນໂລກທຸກວັນນີ້?

2. ມີປະຫວັດສາດຕອນໃດແດ່ທີ່ທ່ານສາມາດເພີ່ມເຕີມໃສ່ບົດຮຽນນີ້ ໂດຍສເພາະແມ່ນເຣື່ອງອຳນາດມານໃນສັງຄົມ?

3. ຄຣິສຕຽນຄວນກຽດຊັງຄົນທີ່ເປັນມານບໍ່? ຄຣິສຕຽນຈະເຮັດແນວອື່ນໄດ້ຢ່າງໃດ?

4. ທ່ານຈະອະທິບາຍຊັຍຊະນະ ແລະຣິດອຳນາດຂອງພຣະຄຣິດຜູ້ຊົງຄອງໂລກໃນປັດຈຸບັນວິທີໃດ?

## ບົດຮຽນທີ 9

## ຊົງພິພາກສາອຳນາດມານ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 14:1-13

ຂໍ້ພຣະຄັມພີສຳລັບເບື້ອງຫຼັງ: ພຣະນິມິດ 14

ຈຸດສຳຄັນຂອງບົດຮຽນນີ້: ໄພ່ພົນຂອງພຣະເຈົ້າສາມາດໝັ້ນໃຈໄດ້ວ່າພຣະເຈົ້າຈະຊົງພິພາກສາຜູ້ທີ່ຕໍ່ຕ້ານພວກເຂົາ.

ຄຳຖາມເພື່ອການສຳຣວດ: ການຕິດຕາມພຣະເຈົ້າຈະມີຫຍັງດີແດ່?

ຈຸດປະສົງຂອງບົດຮຽນນີ້: ເພື່ອພິຈາຣະນາເບິ່ງຄຳສອນໃນພຣະທັມຕອນນີ້ກ່ຽວກັບການພິພາກສາຂອງພຣະເຈົ້າ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

### ຄຳນຳ

ອຳນາດມານ, ເຖິງວ່າຈະສາມາດສ້າງຄວາມທຸກຍາກລຳບາກໄດ້, ບໍ່ມີທາງທີ່ຈະຊະນະ. ພວກເຮົາຕ້ອງຢຳເກງພຣະເຈົ້າເພາະພຣະອົງຊົງຄວບຄຸມທຸກຢ່າງ. ພຣະອົງຊົງມີຣິດອຳນາດ, ມີຄວາມອົດທົນ, ມີສິດພິພາກສາ ແລະມີບຸຄລິກພາບແລະພັນທະກິດຫລາຍໆຢ່າງທີ່ໜ້າຢຳເກງ. ການຢຳເກງພຣະເຈົ້າໝາຍເຖິງການຍອບຮັບວ່າພຣະອົງຊົງເປັນກະສັດແລະການຍອມທີ່ຈະດຳເນີນຊີວິດໃນທາງຂອງພຣະອົງ.

ບາງຄົນຢຳເກງພຣະເຈົ້າເພາະຢ້ານຖືກລົງໂທດ. ຄົນພວກນີ້ຄິດວ່າພັນທະກິດຂອງພຣະເຈົ້າຄືການຮັກສາກົດໝາຍ. ຄົນທີ່ເຂົ້າໃຈແບບນີ້ຄິດວ່າຕົວເອງຈະບໍ່ຖືກພິພາກສາຖ້າໄດ້ເຮັດດີພໍໃນຊີວິດ. ບາງຄັ້ງຈະຕ້ອງດຳເນີນຊີວິດດ້ວຍຄວາມຢ້ານກົວເພາະບໍ່ແນ່ໃຈວ່າຕົວເອງໄດ້ເຮັດທຸກຢ່າງຖືກນ້ຳພຣະທັຍພຣະເຈົ້າຫລືບໍ່. ການພິພາກສານັ້ນມີຈິງ ແລະພວກເຮົາຈະຕ້ອງເຂົ້າໃຈວ່າພຣະເຈົ້າຈະພິພາກສາຄວາມຊົ່ວຢ່າງແນ່ນອນ. ຜູ້ທີ່ຕໍ່ສູ້ພຣະເຈົ້າຄວນຈະມີຄວາມຢ້ານກົວ, ຢ້ານກົວເພື່ອຕົວເຂົາເອງ.

ການພິພາກສາຈະມາເຖິງທຸກໆຄົນ, ແຕ່ພຣະເຈົ້າຊົງມີພຣະປະສົງທີ່ຈະໂຜດພວກເຮົາຈາກການພິພາກສາ ເພາະຄວາມຊົ່ວຊ້າ (ຄວາມຜິດບາບ)ທີ່ເກີດກັບພວກເຮົາ. ພຣະເຈົ້າຊົງຕຽມພ້ອມທີ່ຈະອະພັຍຜູ້ທີ່ຍອມຖິ້ມໃຈເກົ່າເອົາໃຈໃໝ່; ພຣະອົງຊົງພຣະປະສົງຈະໃຫ້ພວກເຮົາໄດ້ຮັບຊີວິດໃໝ່. ບົດຮຽນນີ້ຖາມພວກເຮົາວ່າ, "ການຕິດຕາມພຣະເຈົ້າຈະມີຫຍັງດີແດ່?" ຄວາມແຕກຕ່າງກໍຄື ຄວາມຕາຍ ແລະຊີວິດ. ພຣະທັມຕອນນີ້ຈະໃຫ້ຄວາມແຈ່ມແຈ້ງໃນການເລືອກນີ້.

1. ພວກເຮົາຂຶ້ນກັບໃຜ? (14:1)

ນິມິດໝາຍທຳອິດໃນພຣະນິມິດບົດທີສິບສີ່ແມ່ນເຣື່ອງພຣະເມສານ້ອຍແລະໄພ່ພົນຂອງພຣະອົງ. ສຳລັບຈຳນວນແສນສີ່ໝື່ນສີ່ພັນນີ້, ພວກເຮົາຮູ້ວ່າເລກສິບສອງໝາຍເຖິງໄພ່ພົນຂອງພຣະເຈົ້າແລະເລກສິບເປັນເລກສຳລັບມະນຸດ.ຈຳນວນ 1000 ມາຈາກສິບສາມເທື່ອຄູນກັນ; ຈຳນວນ 144 ມາຈາກສິບສອງຄູນສິບສອງ. ຈຳນວນ 144,000 ແມ່ນຈຳນວນໄພ່ພົນ ຂອງພຣະເຈົ້າໂດຍສເພາະ. ຈຳນວນ 144,000 ໃນ 14:1 ແມ່ນຄົນພວກດຽວກັນທີ່ເວົ້າເຖິງໃນ 5:9-10; 7:1-9. ພຣະເມສານ້ອຍໃນ 14:1 ແມ່ນພຣະຄຣິດ (ພຣະເມຊີອາ) ແລະແມ່ນຜູ້ທີ່ເວົ້າເຖິງຢູ່ 5:5-6.

ຄົນພວກນີ້ມີຊື່ຂອງພຣະເມສານ້ອຍແລະຊື່ຂອງພຣະເຈົ້າຢູ່ທີ່ໜ້າຜາກຂອງພວກເຂົາ. ການມີຊື່ "ຂຽນ" ໄວ້ທີ່ໜ້າຜາກເປັນພຽງສັນຍາລັກຊຶ່ງໝາຍເຖິງວ່າໄພ່ພົນຂອງພຣະເຈົ້າໄດ້ຖືກຮັກສາໄວ້ ແລະພວກເຂົາກໍເປັນຂອງພຣະອົງໃນພຣະເຢຊູຄຣິດ, ກົງກັນຂ້າມກັບຄົນອີກພວກນຶ່ງທີ່ໄດ້ຮັບເຄື່ອງໝາຍແລະຕົວເລກຊຶ່ງເປັນຊື່ຂອງສັດຮ້າຍ (ພນມ 13:16). ຄຳຖາມສຳລັບພວກເຮົາທັງຫລາຍກໍຄື: ພວກເຮົາຈະຢູ່ໃນກຸ່ມໃດ, ກຸ່ມຂອງສັດຮ້າຍຫລືກຸ່ມຂອງພຣະເຈົ້າ? ການເລືອກພຣະເຈົ້າແມ່ນການເລືອກເອົາຊີວິດ; "ສັດຮ້າຍ" ມີຈຸດປະສົງຢ່າງດຽວຄືການເອົາຊີວິດ, ເຖິງວ່າມັນຈະສັນຍາຢ່າງອື່ນ.

ການເຕົ້າໂຮມຂອງ 144,000 ຄົນຢູ່ທີ່ "ພູຊີໂອນ"ມີຄວາມໝາຍສຳຄັນ (14:1). ພູຊີໂອນເປັນຈຸດສູງທີ່ສຸດໃນເຂດເຢຣູຊາເລັມ ແລະໃນທີ່ນີ້ກໍໝາຍເຖິງຖານະຂອງພວກຄົນເຫລົ່ານັ້ນໃນພຣະເຈົ້າ. ໂຢຮັນໄດ້ໃຫ້ຄວາມແຕກຕ່າງກັນຢ່າງແຈ່ມແຈ້ງຣະຫວ່າງພຣະເມສານ້ອຍແລະສັດຮ້າຍ. ສັດຮ້າຍໂຕທີນຶ່ງໃນບົດທີສິບສາມຂຶ້ນມາຈາກທະເລ, ແລະສັດຮ້າຍໂຕທີສອງຂຶ້ນມາຈາກດິນ. ພຣະເມສານ້ອຍແລະຄົນ 144,000 ຢືນຢູ່ໃນທີ່ພັກຂອງພຣະເຈົ້າ.

ໃນພຣະນິມິດ 5:5-8, ໂຢຮັນໄດ້ເອີ້ນພຣະຄຣິດວ່າ "ສິງ" ແລະບາງຄັ້ງກໍໄດ້ເອີ້ນວ່າ "ພຣະເມສານ້ອຍ." ສິງເປັນປະມຸກຂອງພວກສັດແລະສິງໝາຍເຖິງອຳນາດ. ພຣະເມສານ້ອຍເປັນເຄື່ອງຖວາຍບູຊາ. ພຣະຄຣິດສແດງຣິດອຳນາດຂອງພຣະອົງໂດຍການສະລະຊີວິດເພື່ອຄົນອື່ນທີ່ໄມ້ກາງແຂນ. ການສະລະຊີວິດຂອງຕົວເອງເປັນຣິດອຳນາດອັນຍິ່ງໃຫຍ່.

2. <u>ພວກເຮົາມີເພງທີ່ຈະຮ້ອງບໍ່? (14:2-5)</u>
ຝູງຄົນ 144,000 ຄົນໄດ້ພາກັນຮ້ອງເພງຢູ່ຕໍ່ໜ້າພຣະຣາຊບັນລັງແລະຕໍ່ໜ້າສັດທັງສີ່ (14:3). ຄົນອື່ນບໍ່ສາມາດຮ້ອງເພງນີ້ໄດ້ນອກຈາກພວກທີ່ໄດ້ຖືກຊົງໄຖ່ໄວ້ແລ້ວ. ພວກເຂົາຮ້ອງເພງສັຣເສີນການຊົງໄຖ່ຈາກພວກສັດຮ້າຍແລະຈາກການທຸກທໍຣະມານຊຶ່ງໄດ້ຜ່ານໄປ. ຄົນເຫລົ່ານີ້ເປັນພວກພົມມະຈາຣີ ເພາະພວກເຂົາບໍ່ໄດ້ເຮັດຄວາມຊົ່ວກັບຜູ້ຍິງ (14:4). ຜູ້ຄົນເຫລົ່ານີ້ບໍ່ໄດ້ມອບຕົວໃຫ້ກັບອຳນາດຮ້າຍຊຶ່ງຈະນຳໄປສູ່ການໄຫວ້ພະທຽມ, ແລະບັດນີ້ພວກເຂົາບໍ່ໄດ້ມີຈຸດດ່າງພ້ອຍອີກແລ້ວ (14:5).

ພວກເຂົາເປັນ "ຜົນແຣກຖວາຍແດ່ພຣະເຈົ້າແລະແດ່ພຣະເມສານ້ອຍ" (14: 4). ໃນການຖວາຍບູຊາ, ຜົນແຣກເປັນຂອງພຣະເຈົ້າ. ການຖວາຍຜົນແຣກສແດງເຖິງການຮູ້ບຸນຄຸນແລະການຍອມຮັບວ່າພຣະເຈົ້າຄືແຫລ່ງຂອງພຣະພອນທັງຫລາຍ. ໂຢຮັນໃຊ້ພາບພົດນີ້ເພື່ອອ້າງເຖິງທຸກຄົນທີ່ເປັນຂອງພຣະເຈົ້າໃນອະດີດແລະໃນປັດຈຸບັນ. ຜູ້ທີ່ຖວາຍຕົວເອງໃຫ້ກັບພຣະເຈົ້າຄືຜົນແຣກຂອງພຣະເຈົ້າ. ພວກເຂົາເປັນຂອງພຣະເຈົ້າ; ພວກເຂົາ (ພວກເຮົາ) ເປັນເຄື່ອງຖວາຍສຳລັບພຣະເຈົ້າ; ພຣະອົງຊົງຮັບພວກເຮົາແລະຊົງຖືວ່າພວກເຮົາມີຄຸນຄ່າ.

3. <u>ເທວະດາທັງສາມ, ການປະກາດສາມຢ່າງ (14:6-11)</u>
ໂຢຮັນໄດ້ເຫັນເທວະດາບິນຢູ່ໃນທ້ອງຟ້າ (14:6), ແລະພວກເຂົາມີຂ່າວປະເສີດອັນຕລອດໄປເປັນນິດທີ່ຈະປະກາດແກ່

ຊາວໂລກທຸກປະເທດ, ທຸກຕະກຸນ, ທຸກພາສາ, ແລະທຸກຊາດ (14:6). ເທວະດາຕົນທີນຶ່ງຮ້ອງໃຫ້ທຸກຄົນນະມັສການພຣະເຈົ້າ ເພາະພຣະອົງຊົງເປັນຜູ້ສ້າງຟ້າສວັນ, ແຜ່ນດິນໂລກ, ນໍ້າທະເລ, ແລະນໍ້າພຸທັງຫລາຍ (14:7).

ເທວະດາຕົນທີສອງໄດ້ປະກາດຊັຍຊະນະຂອງພຣະເຈົ້າ: "ບາບີໂລນມະຫານະຄອນນັ້ນຫລົ້ມຈົມແລ້ວ, ຫລົ້ມຈົມແລ້ວ" ສໍາລັບຄົນຢິວ, ບາບີໂລນໝາຍເຖິງອໍານາດຊົ່ວຮ້າຍ "ທີ່ເຮັດໃຫ້ປະຊາຊາດທັງຫລາຍດື່ມເຫລົ້າແວງ... ຕາມຄວາມປາຖນາທາງກາມ" (14:8). ປະມານປີ 601 ກ່ອນ ຄ. ສ, ບາບີໂລນໄດ້ຄວບຄຸມຂົງເຂດຢູດາແລະເຢຣູຊາເລັມ; ບາບີໂລນໄດ້ທໍາລາຍກຸງເຢຣູຊາເລັມໃນປີ 587 ກ່ອນ ຄ. ສ, ແລະໄດ້ນໍາຊາວອິສຣາເອັນໄປເປັນຊະເລີຍ. ຊາວຢິວໄດ້ພາກັນເລົ່າຈົນຈື່ຈໍາປະຫວັດນີ້ຕລອດມາແລະບາບີໂລນເປັນເຄື່ອງໝາຍຂອງຄວາມຊົ່ວຮ້າຍ.

ສຽງຂອງເທວະດາຕົນທີສາມໄດ້ເວົ້າກັບພວກທີ່ຂາບໄຫວ້ສັດຮ້າຍ (14:9-11). ພວກນີ້ເປັນຂອງສັດຮ້າຍແລະບໍ່ໄດ້ຂຶ້ນກັບພຣະເຈົ້າ. ພວກເຂົາມີເຄື່ອງໝາຍໄວ້ທີ່ໜ້າຜາກຫລືທີ່ມື. ພວກເຂົາ "ຈະດື່ມເຫລົ້າແວງແຫ່ງພຣະພິໂຣດຂອງພຣະເຈົ້າ (14:10); ການທໍຣະມານຂອງເຂົາຈະມີຢູ່ຕລອດໄປເປັນນິດ ແລະຈະບໍ່ມີເວລາ "ພັກຜ່ອນ" (14:11).

ໃນພຣະທັມພຣະນິມິດ, ບາບີໂລນໝາຍເຖິງກຸງໂຣມ (ເບິ່ງ 1 ເປໂຕ 5:13). ສິ່ງຊົ່ວຮ້າຍທີ່ໂຣມໄດ້ເຮັດບໍ່ໄດ້ແຕກຕ່າງຫຍັງກັບທີ່ບາບີໂລນເຄີຍເຮັດໄວ້. ອໍານາດຊົ່ວຮ້າຍຂອງໂຣມໄດ້ພາຄົນເຮັດໃນສິ່ງຊົ່ວນົວໝອງຊຶ່ງຜິດຕໍ່ພຣະເຈົ້າ ເຊັ່ນການບັງຄັບໃຫ້ຂາບໄຫວ້ພວກຈັກພັດ. ອໍານາດໂຣມກໍາລັງພ່າຍແພ້ເພາະພຣະເຈົ້າແລະພຣະເມສານ້ອຍ (14:8). ຊັຍຊະນະຂອງ "ສິງແຫ່ງຕະກູນຢູດາ" (ພນມ 5:5) ຫລືພຣະເມສານ້ອຍຕໍ່ອໍານາດຊົ່ວຮ້າຍ ຄືຊັຍຊະນະຂອງຄຣິສຕະຈັກໃນທຸກໆສມັຍ.

ຄຣິສຕະຈັກໃນສັຕວັດທີນຶ່ງຍັງອ່ອນແຮງຢູ່ ແຕ່ໄດ້ຖືກການຂົ່ມເຫງຈາກໂຣມຊຶ່ງເປັນມະຫາອໍານາດໃນສມັຍນັ້ນ. ພວກ ເຮົາໄດ້ເຫັນຈາກຕົວຢ່າງໃນປີ ຄ. ສ 66 ໃນເວລາທີ່ຊາວຢິວໄດ້ພາກັນຕໍ່ຕ້ານກຸງໂຣມ. ການຕໍ່ສູ້ໄດ້ຍືນຢູ່ຈົນເຖິງປີ ຄ.ສ 70, ໃນຕອນແລກຮູ້ສຶກວ່າຊາວຢິວໄດ້ຊັຍຊະນະຊົ່ວຄາວ ເພາະການເຜີຕົວຂອງກຸງໂຣມ. ນັກກູ້ຊາດຊາວຢິວໄດ້ຊັຍຊະ ນະໃນບາງເຂດຂອງຄາລີເລແລະຢູດາ. ແຕ່ທ້າຍສຸດອໍານາດໂຣມກໍໄດ້ຍຶດອໍານາດຄືນໃນທຸກເຂດພ້ອມໄດ້ທໍາລາຍ ພຣະວິຫານຂອງພຣະເຈົ້າທີ່ເຢຣູຊາເລັມ.

4. <u>ສຽງໝູນໃຈ (14:12-13)</u>

ຄຣິສຕະຈັກໃນສັຕວັດທີນຶ່ງໄດ້ຍິນແລະຮັບຂ່າວເຣື່ອງຊັຍຊະນະຂອງພຣະເຢຊູຄຣິດຕໍ່ອໍານາດມານ. ເຖິງວ່າສະຖານະການຍັງຮ້າຍແຮງຢູ່ກໍຕາມ, ຊັຍຊະນະຂອງພຣະເມສານ້ອຍໄດ້ກາຍເປັນຄວາມຈິງແລ້ວ ແລະຊັຍຊະນະນັ້ນຈະຄົງຢູ່ຕໍ່ໄປ. ຄຣິສຕຽນທັງຫຼາຍຮູ້ວ່າພຣະເຈົ້າໃນພຣະຄຣິດກໍາລັງພິພາກສາອໍານາດມານແລະຄວາມພ່າຍແພ້ຂອງມານເປັນເຣື່ອງທີ່ແນ່ນອນ. ຄຣິສຕະຈັກຂອງພຣະເຈົ້າໄດ້ຂຍາຍຕົວຢ່າງກວ້າງຂວາງໃນສັຕວັດທີສອງ ແລະໄດ້ສ້າງຄວາມຢ້ານກົວໃຫ້ກັບອໍານາດການປົກຄອງຂອງໂຣມ. ຄຣິສຕະຈັກໄດ້ໝັ້ນໃຈວ່າພຣະເຢຊູຄືພຣະເຈົ້າແລະພຣະເຈົ້າຂອງພວກເຂົາໄດ້ຊັຍຊະນະແລ້ວ ແລະຈະມີຊັຍຊະນະໃນອະນາຄົດຕໍ່ໄປ. ພຍາມານ, ເຖິງຈະມີອໍານາດ, ກໍເປັນອໍານາດທີ່ບໍ່ສາມາດຈະດເອົາຊະນະຕໍ່ພຣະເຈົ້າໄດ້.

ເຖິງວ່າອໍານາດຂອງບາບີໂລນທີ່ປາກົດໃຫ້ເຫັນໃນພຣະທັມພຣະນິມິດນັ້ນ ໄດ້ຖືກພ່າຍແພ້ໄປແລ້ວກໍຕາມ; ອໍານາດມານ ຍັງກັກຂັງແລະເຂັ່ນຂ້າໄພ່ພົນຂອງພຣະເຈົ້າຕໍ່ໄປ; ແຕ່ອໍານາດຂອງມານຮ້າຍນີ້ ບໍ່ສາມາດຈະຄວບຄຸມຄົນພວກນີ້ໄດ້. ພຣະຄຣິດໄດ້ທໍາລາຍອໍານາດສໍາຄັນຂອງມານແລ້ວຄື "ຄວາມຕາຍ." ຄຣິສຕຽນສາມາດຕໍ່ສູ້ອໍານາດມານໄດ້ດ້ວຍພຣະນາມຂອງພຣະເຢຊູຄຣິດ ເພາະພວກເຂົາໄດ້ມີສ່ວນໃນຊັຍຊະນະຂອງພຣະອົງ.

ຄຣິສຕຽນມີເຫດຜົນທີ່ຈະຕ້ອງ "ໃຊ້ຄວາມພຽນອົດທົນ" (14:12). ຄຣິສຕຽນໄດ້ຮັບພຣະສັນຍາທີ່ບໍ່ມີວັນປ່ຽນແປງ: "ເຂົາຈະໄດ້ພັກຜ່ອນຈາກການເມື່ອຍຍາກຂອງຕົນ" (14:13), ຊຶ່ງເປັນເຣື່ອງກົງກັນຂ້າມກັບຜູ້ທີ່ຕິດຕາມສັດຮ້າຍ ເພາະພວກເຂົາ "ຈະບໍ່ມີເວລາພັກຜ່ອນທັງກາງເວັນແລະກາງຄືນ" (14:11).

ການຕິດຕາມພຣະເຈົ້າຈະມີຫຍັງດີແດ່? ຕິດຕາມພຣະເຈົ້າພວກເຮົາໄດ້ເຫັນອຳນາດໃນການຊີງໄຊຂອງພຣະເມສານ້ອຍ, ໄດ້ເຫັນວ່າອຳນາດມານແມ່ນອຳນາດທີ່ພ່າຍແພ້ແລ້ວ, ໄດ້ຮັບຄວາມໝັ້ນໃຈເພາະໄດ້ເຫັນຊັຍຊະນະຂອງພຣະເຈົ້າຕໍ່ອຳນາດມານ, ແລະໄດ້ຮັບການທ້າທາຍໃຫ້ເບິ່ງຄວາມໝັ້ນຄົງທີ່ພວກເຮົາມີໃນຖານະຂອງຜູ້ຕິດຕາມພຣະເຈົ້າ.

<u>ຄຳຖາມ:</u>

1. ທ່ານຄິດວ່າຄວາມຮັກຂອງພຣະເຈົ້າຈະມີຄວາມສັມພັນແນວໃດ ກັບການພິພາກສາຂອງພຣະອົງ?

2. ການຕິດຕາມພຣະເຈົ້າຈະມີຫຍັງດີແດ່ສຳລັບຕົວທ່ານ?

3. ທ່ານຈະໄດ້ຣິດອຳນາດຂອງພຣະເຈົ້າວິທີໃດ?

4. ມີຫຍັງແດ່ໃນປັດຈຸບັນນີ້ທີ່ເຮັດໃຫ້ພວກເຮົາບໍ່ສາມາດເຫັນຣິດອຳນາດ ແລະເຫັນຊັຍຊະນະຂອງພຣະເຈົ້າໄດ້ຢ່າງແຈ່ມແຈ້ງ?

5. ພວກເຮົາຈຳເປັນຈະຕ້ອງໄດ້ຮັບຄຳອະທິບາຍໃໝ່ ສຳລັບຄຳວ່າ "ຣິດອຳນາດ" ແລະ "ຊັຍຊະນະ" ຫລືບໍ່?

# ບົດຮຽນທີ 10
# ພຣະພິໂຣດ

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 15:1-8; 16-21
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະນິມິດ 15--16
ຈຸດສຳຄັນຂອງບົດຮຽນນີ້: ຄວາມທຸກໂສກຈະກາຍເປັນຄວາມຊຶມຊື່ນຍິນດີ.
ຄຳຖາມເພື່ອການສຳຣວດ: ເຮົາໄດ້ຕັ້ງໝັ້ນຄົງໃນຄວາມເຊື່ອຢ່າງແທ້ຈິງ
ຈຸດປະສົງຂອງບົດຮຽນນີ້: ວິບັດເປັນເຄື່ອງບອກເຕືອນວ່າພະຣເຢຊູຈະສເດັດມາ.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

65 ປີມາແລ້ວ (ໃນສມັຍກາຍຊາເປັນຜູ້ປົກຄອງ) ທີ່ພຣະເຢຊູໄດ້ຟື້ນຄືນພຣະຊົນແລະກັບຂຶ້ນໄປສວັນທັງເປັນ ມີຫລາຍຄົນໄດ້ເຫັນເຫດການນັ້ນຈຶ່ງເລົ່າ ຈົນເຖິງໃຫ້ພວກລູກຫລານ ແລະພວກລູກຫລານພາກັນເຊື່ອໃນອົງພຣະເຢຊູຄຣິດຫລາຍຂຶ້ນ ພວກເຂົາເຈົ້າໄດ້ຮຽນຮູ້ວ່າພຣະເຢຊູຈະສເດັດກັບມາອີກໃນບໍ່ຊ້ານີ້ ການສເດັດກັບມາຂອງພຣະອົງຈະເປັນຄືການສເດັດຂຶ້ນໄປຍັງສວັນເມື່ອ 65 ປີກ່ອນນີ້ ພຣະອົງມາເພື່ອຈະມາຕັດສິນລົງໂທດຜູ້ບໍ່ເຊື່ອ ແລະພຣະອົງຈະໂຜດຜູ້ທີ່ເຊື່ອໃນພຣະອົງທີ່ຮັບຄວາມ ທຸກຍາກລຳບາກໃນເວລານີ້ໃຫ້ພົ້ນ.

ໃນຂະນະທີ່ໄພ່ພົນຂອງພຣະອົງຜູ້ລໍຖ້າການສເດັດກັບມາຂອງພຣະອົງນັ້ນ ມີຊາຍຄົນນຶ່ງຊື່ ກາຍຊາເປັນຜູ້ປົກຄອງຊາດໂຣມັນທີ່ປົກຄອງຊາວອິສຣາເອນໃນເວລານັ້ນ, ລາວໄດ້ຕັ້ງຕົນເອງເປັນໃຫຍ່ໃຫ້ຄົນທັງຫລາຍປະຕິບັດກັບລາວເໝືອນລາວເປັນພຣະເຈົ້າ ລາວບັງຄັບໃຫ້ຊາດຢິວຂາບໄຫວ້ນະມັສການພະຂອງໂຣມັນ ແລະ ນະມັສການລາວເອງຫາກໃຜບໍ່ປະຕິບັດຕາມຄຳສັ່ງຈະຕ້ອງຖືກໄລ່ອອກຈາກການງານ, ໄລ່ອອກຈາກບ້ານເມືອງແລະຫລາຍຄົນກໍຕ້ອງຖືກຂ້າຖິ້ມ. ດ້ວຍເຫດນີ້ພຣະເຈົ້າຈຶ່ງໃຫ້ນິມິດກັບໂຢຮັນວ່າພຣະພິໂຣດຂອງພຣະເຈົ້າຈະຕົກມາເທິງເຂົາ, ໂຢຮັນ ເວົ້າໃນພະນິມິດ 1:1 ວ່ານີ້ເປັນ "ການສແດງຂອງພຣະເຢຊູ" ຄຳວ່າພຣະນິມິດມາຈາກຄຳເດີມພາສາກຣີກວ່າApokalypsis ແປວ່າເປີດຜ້າກັ້ງ. ໃຫ້ເຮົາວາດພາບເບິ່ງການເປີດຜ້າກັ້ງແລະປິດຜ້າກັ້ງເຮົາຈະເຫັນຕ່າງກັນ. ພຣະນິມິດທີ່ໂຢຮັນເຫັນນີ້ເປັນເໝືອນພຣະເຢຊູຊົງເປີດຜ້າກັ້ງໃຫ້ໂຢຮັນເຫັນດ້ານໃນ.

1. ທະເລວິບັດ 15:1-4

ໃນບົດ 6 ກ່າວເຖິງຕາປະທັບທັງເຈັດ, ໃນບົດ 8-9 ກ່າວເຖິງ ແກທັງເຈັດ ແລະໃນບັດທີ 15 ກ່າວເຖິງເທວະດາຖືພັຍອັນຕະລາຍເຈັດຢ່າງຊຶ່ງບອກແຈ້ງວ່າຈະເປັນພັຍອັນຕະລາຍຄັ້ງສຸດທ້າຍດ້ວຍວ່າພຣະພິໂຣດ (ໃຈຮ້າຍ) ກໍຄົບຖ້ວນ

ດ້ວຍພັຍອັນຕະລາຍເຫລົ່ານີ້ (ຂໍ້ 1). ເຮົາຈະເຫັນນໍ້າເປົເຈັດເຖິງສາມຄັ້ງໃຫຍ່ຄື; ຄັ້ງແຮກເວົ້າເຖິງຕາປະທັບທັງເຈັດ ແລະຕໍ່ມາເວົ້າເຖິງ ແກທັງເຈັດຊຶ່ງເປັນການຂຍາຍຄວາມບອກເຖິງພຣະພິໂຣດຂອງພຣະເຈົ້າເຖິງຂັ້ນສຸດແລ້ວ ຈຶ່ງໄດ້ປະທັບຕາອອກຄຳສັ່ງ, ສ່ວນແກທັງເຈັດນັ້ນແມ່ນເປົ່າໃນການຕຽມພ້ອມຈະປະຕິບັດງານຕາມຕາປະທັບ. ຄັ້ງທີສາມໂຢຮັນບອກວ່າ ເທວະດາເຈັດຕົນຖືພັຍອັນຕະລາຍເຈັດຢ່າງ (ຂໍ້ 1) ແມ່ນເທວະດາຕຽມພ້ອມຈະປະຕິບັດພຣະບັນຊາທີ່ຖືກປະທັບຕາແລ້ວນັ້ນ, ສຽງແກທັງເຈັດນັ້ນໄດ້ບົ່ງບອກການຕຽມພ້ອມຂອງເທວະດາທັງເຈັດ. ນິມິດຂອງໂຢຮັນຕອນນີ້ໄດ້ບົ່ງບອກວ່າວິບັດຄັ້ງນີ້ເປັນຄັ້ງສຸດທ້າຍ ຊຶ່ງຈະຊົງຕັດສິນລົງໂທດແລະໂຜດໄພ່ພົນຂອງພຣະອົງ ໃນລະຍະເວລາດຽວກັນ, ບຸກຄົນທີ່ປະຕິເສດພຣະອົງ ແລະບຸກຄົນທີ່ກົດຂີ່ຂົ່ມເຫງໄພ່ພົນຂອງພຣະອົງຈະຖືກລົງໂທດ ໃນຂະນະທີ່ໄພ່ພົນຂອງພຣະອົງຖືກໂຜດໃຫ້ພົ້ນ. ໃນຂໍ້ 1-3 ໄດ້ບອກເຖິງການຕຽມພ້ອມຂອງເທວະດາ ທີ່ພ້ອມຈະທຳລາຍບຸກຄົນດື້ດ້ານບໍ່ເຊື່ອຟັງ ແລະພ້ອມທີ່ຈະທຳລາຍບຸກຄົນທີ່ກົດຂີ່ຂົ່ມເຫັງຄຣິສຕຽນ.

ໂຢຮັນກ່າວອີກວ່າ "ຂ້າພະເຈົ້າໄດ້ເຫັນເໝືອນທະເລແກ້ວປົນກັບໄຟ ແລະໄດ້ເຫັນບັນດາຄົນທີ່ຊະນະສັດຮ້າຍແລະຮູບຂອງມັນກັບເລກໝາຍຊື່ຂອງມັນຢືນຢູ່ແຄມທະເລແກ້ວນັ້ນ ເຂົາຖືພິນທີ່ພຣະເຈົ້າຊົງປະທານ ເຂົາຮ້ອງເພງຂອງໂມເຊຂ້ອຍໃຊ້ຂອງພຣະເຈົ້າແລະເພງພຣະເມສານ້ອຍ" (ຂໍ້ 2 ແລະ 3ກ). ນັກສານາສາດຫລາຍຄົນຕີຄວາມໝາຍວ່າ ຄົນທີ່ຊະນະສັດຮ້າຍແລະຮູບຂອງມັນນັ້ນແມ່ນບຸກຄົນທີ່ເຊື່ອໃນພຣະເຢຊູທີ່ມີຊັຍຊະນະຕໍ່ຊາຕານ ພວກເຂົາເຈົ້າຖືກຊຳຣະດ້ວຍພຣະໂລຫິດອັນປະເສີດຂອງພຣະເຢຊູ ຢືນຢູ່ທີ່ແຄມທະເລແກ້ວນັ້ນນັກສາສນາສາດເຂົ້າໃຈວ່າພຣະໂລຫິດຂອງພຣະເຢຊູກວ້າງໃຫຍ່ໄພສານເປັນເໝືອນທະເລແກ້ວທີ່ສາມາດຊຳຣະລ້າງຄວາມຜິດບາບຂອງຄົນທັງໂລກໄດ້. ສ່ວນທະເລປົນກັບໄຟນັ້ນເພິ່ນຕີຄວາມໝາຍວ່າ ທະເລແກ້ວແຫ່ງພຣະວິນຍານບໍຣິສຸດຈະຊຳລະລ້າງວິຫານຂອງພຣະອົງໃຫ້ບໍຣິສຸດ.

ຄົນທີ່ໄດ້ຮັບຄວາມພົ້ນນັ້ນພາກັນຮ້ອງເພງຂອງໂມເຊ ໃນພຣະທຳອົບພະຍົບ 15. ແລະເພງຂອງພຣະເມສານ້ອຍ, ຄຳວ່າເມສານ້ອຍແປວ່າ ລູກນ້ອຍຂອງພຣະເຈົ້າເປັນຄ້າຍຄືລູກແກະນ້ອຍທີ່ຖວາຍບູຊາໃນສມັຍເດີມ. ພຣະເມສານ້ອຍໃນພຣະຄັມພີໃຫມ່ນັ້ນໝາຍເຖິງພຣະບຸດນ້ອຍຂອງພຣະເຈົ້າທີ່ຖືກປະຫານເພື່ອໄຖ່ໂທດຄວາມຜິດບາບຂອງຄົນຈຳນວນຫລາຍ. ພວກຊະນະສັດຮ້າຍນັ້ນໄດ້ພາກັນຮ້ອງເພງພຣະເມສານ້ອຍໃນພຣະທຳພຣະນິມິດ 5:9, 14:12

ນິມິດຂອງໂຢຮັນຄ້າຍຄືກັບຕອນເອຢິບໄລ່ຂ້າອິສຣາເອນທີ່ທະເລໄມ້ອໍ້, ໃນຕອນທີ່ກອງທັບຂອງເອຢິບບຸກເຂົ້າມາໃກ້ພຣະເຈົ້າກໍຊົງເຮັດໃຫ້ທະເລເປັນດິນແຫ້ງແຍກອອກຈາກກັນເພື່ອໃຫ້ອິສຣາເອນຂ້າມທະເລໄປ ຝ່າຍກອງທັບເອຢິບກໍໄລ່ຕິດຕາມໄປຖ້າມກາງດິນແຫ້ງນັ້ນ, ພຣະເຈົ້າກໍຊົງບັນດານໃຫ້ລໍ້ລົດຂອງເຂົາຝືດເພື່ອອິສຣາເອນຈະໄດ້ພົ້ນໄປກ່ອນ. ຕໍ່ມາພຣະເຈົ້າຊົງໃຫ້ທະເລນັ້ນຄືນສູ່ສະພາບເດີມ ກອງທັບຂອງເອຢິບກໍຖືກທຳລາຍດ້ວຍທະເລນັ້ນ. ຮູບພາບຂອງທະເລວິວັດແລະການຊົງໄຖ່ໄພ່ພົນຂອງພຣະເຈົ້າໃຫ້ພົ້ນກໍເປັນດັ່ງນັ້ນແຫລະ. ໃນສມັຍອິສເອນເປັນຂ້າທາດນັ້ນກະສັດຟາຣະໂອມີອຳນາດຍິ່ງໃຫຍ່ກວ່າໃຜໆ, ໃນສມັຍພະຄັມາພີໃໝ່ກາຍຊາເປັນຜູ້ມີອຳນາດ ແຕ່ອຳນາດທັງສອງຄົນຮວມກັນແລ້ວຍັງບໍ່ທໍ່ປາຍກ້ອຍຂອງພຣະເຈົ້າຊໍ້າ. ດ້ວຍເຫດນີ້ອິສຣາເອນຈຶ່ງຮ້ອງເພງດັ່ງກ່າວມາຂ້າງເທິງນັ້ນ.

## 2. <u>ວິບັດເລີ້ມຈາກພວກເຮົາ 15:5-8</u>

ໂຢຮັນຫລຽວເບິ່ງອີກເທື່ອນຶ່ງ, ເທື່ອນີ້ເພິ່ນເຫັນພຣະວິຫານໃນສວັນດັ່ງນີ້; "ຫັງຈາກນັ້ນຂ້າພະເຈົ້າໄດ້ເຫັນພຣະວິຫານໃນສວັນ ຄືສຳນັກຜ້າແຫ່ງຄຳພຍານໄຂອອກ. ເທວະດາເຈັດຕົນທີ່ຖືພັຍອັນຕະລາຍທັງເຈັດໄດ້ອອກມາຈາກພຣະວິຫານນັ້ນ" (ຂໍ້ 5). ນັກສາສນາສາດຕີຄວາມໝາຍໃນສິ່ງທີ່ໂຢຮັນເຫັນນັ້ນວ່າ ຜ້າກັ້ງໃນພຣະວິຫານໄຂອອກນັ້ນແປວ່າຂ່າວປະເສີດເຣື່ອງຂອງພຣະເຢຊູຄຣິດນັ້ນແຈ້ງອອກຫລືຖືກເປີດເຜີຽໂດຍບໍ່ມີສິ່ງໃດເປັນຄຳປິສນາອີກ, ສ່ວນເທວະ

ດາ ຖືພັຍອັນຕະລາຍທັງເຈັດນັ້ນແມ່ນພັຍອັນຕະລາຍເຈັດຢ່າງສຳລັບຄົນຈອງຫອງຕໍ່ສູ້ພຣະຄຣິດ.

ໃນຂໍ້ 8 ກ່າວວ່າພຣະວິຫານກໍເຕັມໄປດ້ວຍຄວັນທີ່ມາຈາກຣັສມີຂອງພຣະເຈົ້າ. "ແລ້ວພຣະວິຫານກໍເຕັມໄປດ້ວຍຄວັນທີ່ມາຈາກພຣະຣັສມີຂອງພຣະເຈົ້າ ແລະຈາກຣິດທານຸພາບຂອງພຣະອົງ ບໍ່ມີຜູ້ໃດສາມາດເຂົ້າໄປໃນພຣະວິຫານນັ້ນໄດ້ ຈົນກວ່າພັຍອັນຕະລາຍທັງເຈັດຂອງເທວະດາເຈັດຕົນນັ້ນຈະໄດ້ສິ້ນສຸດລົງ" (ຂໍ້ 8). ເພື່ອຄວາມເຂົ້າໃຈໃນເຣື່ອງນີ້ຂ້າພະເຈົ້າຂໍແນະນຳໃຫ້ອ່ານພຣະທັມອົບພະຍົບ "ເມກກໍໄດ້ປົກຄຸມຫໍເຕັນສັກສິດ ແລະມີພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຢູ່ໃນທີ່ນັ້ນ ໂມເຊເຂົ້າໄປໃນຫໍເຕັນສັກສິດບໍ່ໄດ້ເພາະວ່າມີເມກປົກຄຸມຢູ່ ແລະພຣະຣັສມີຄວາມຍິ່ງໃຫຍ່ຂອງພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ. (ອົບພະຍົບ 40:34-35). ຈົ່ງອ່ານອີກໃນປະຫວັດກະສັດທີນຶ່ງ "ເມື່ອພວກປະໂຣຫິດອອກມາຈາກບ່ອນສັກສິດ ກ້ອນເມກໄດ້ປົກຄຸມຫຸ້ມພວກປະໂລຫິດບໍ່ອາດກັບຄືນໄປປະຕິບັດວຽກງານໄດ້ເພາະວ່າຣັສມີຂອງພຣະຜູ້ເປັນເຈົ້າໄດ້ເຕັມໄປໃນພຣະວິຫານນັ້ນ" (ປະຫວັດກະສັດທີນຶ່ງ 8:10-11). ມາເຖິງຕອນນີ້ເຮົາພໍຈະສລູບໄດ້ວ່າພຣະເຈົ້າຊົງສະຖິດໃນພຣະວິຫານຂອງພຣະອົງເພື່ອປົກປັກຮັກສາປ້ອງກັນບໍ່ໃຫ້ຜູ້ໃດທຳຮ້າຍພຣະວິຫານຕລອດທັງຜູ້ຮັບໃຊ້ພຣະອົງ. "ພຣະຜູ້ເປັນເຈົ້າສົ່ງເມກມາໃນຕອນກາງເວັນ ແລະສົ່ງຄວັນກັບແປວໄຟມາໃນຕອນກາງຄືນ. ສະຫງ່າຣາສີຂອງພຣະອົງຈະປົກປ້ອງຄຸ້ມຄອງນະຄອນ" (ເອຊາຢາ 4: 5-6).

## 3. <u>ແມ່ນ້ຳໃຫຍ່ແຫ້ງ 16:12-16</u>

"ເທວະດາຕົນທີຫົກໄດ້ຖອກຂັນຂອງຕົນລົງໃສ່ແມ່ນ້ຳໃຫຍ່ ຄືແມ່ນ້ຳຢູຟາເຕແມ່ນ້ຳນັ້ນຈຶ່ງແຫ້ງໄປ" (ຂໍ້ 12). ແມ່ນ້ຳຢູຟາເຕເປັນແມ່ນ້ຳທີ່ມີຄວາມຍາວເຖິງ 1780 ໄມ ຫລື 2890 ກິໂລແມດ, ຊຶ່ງໄຫລຜ່ານຣະວ່າງກຸງໂຣມ ແລະຟາເຊັຍ ທີ່ມີສາຍານາມວ່າກະສັດຝ່າຍຕາເວັນອອກ. ແມ່ນ້ຳດັ່ງກ່າວພຣະຄັມພີປະຖົມມະການບອກວ່າພຣະເຈົ້າສ້າງ (ປຖກ2:14). ໂຢຮັນເຫັນນິມິດວ່າເທວະດາໄດ້ຖອກນ້ຳໃນຂັນຂອງເພິ່ນລົງໃນແມ່ນ້ຳຍາວນີ້ ແລະແມ່ນ້ຳນັ້ນກໍແຫ້ງໄປໃນຊົ່ວພິບຕາ ເພື່ອຈັດແຈງຫົນທາງສຳລັບກະສັດທັງຫລາຍທີ່ເດີນທາງມາຈາກຕາເວັນອອກ. ເຣື່ອງຂອງເທວະດາຖອກຂັນຂອງຕົນລົງສູ່ແມ່ນ້ຳຢູຟາເຕແລ້ວແຫ້ງໄປນັ້ນ ເປັນເຣື່ອງທີ່ນັກສາສນາສາດບໍ່ສາມາດຕີຄວາມໝາຍໄດ້ຢ່າງຄັກແນ່ ແຕ່ເພິ່ນບອກວ່າແມ່ນ້ຳອັນດຽວກັນນີ້ໄດ້ແຫ້ງເພື່ອໃຫ້ອິສຣາເອນຜ່ານໄປໃນເວລາທີ່ເຂົາເຈົ້າຖືກກອງທັບເອຢິບຕາມລ່າ.

ຂ້າພະເຈົ້າແປກໃຈໃນເຣື່ອງຂອງເທວະດາອົງທີຫົກຖອກນ້ຳໃນຂັນຂອງເພິ່ນລົງນ້ຳຢູຟາເຕ, ຫາກເວົ້າຕາມຄວາມເປັນຈິງແລ້ວ ຫາກເຮົາເອົານ້ຳຖອກລົງໃນນ້ຳບ່ອນໃນບ່ອນນຶ່ງ ປະຣິມານຂອງນ້ຳຈະເພີ້ມຕາມຈຳນວນທີ່ຖອກລົງ ແຕ່ໃນພຣະຄັມພີຕອນນີ້ບອກເຮົາວ່າຫລັງຈາກເທວະດາຖອກນ້ຳລົງແລ້ວແມ່ນ້ຳນັ້ນກໍແຫ້ງ. ຂ້າພະເຈົ້າອ່ານຄອມເມັນແທຣີສະບັບນຶ່ງອະທິບາຍໜ້ອຍນຶ່ງວ່າ ແມ່ນ້ຳແຫ້ງນັ້ນແມ່ນການຈັດຕຽມພວກກະສັດມາຈາກທິດຕາເວັນອອກແລະຜູ້ທີ່ຮ້ອງຕົນເອງວ່າເປັນຄຣິສຕຽນໃຫ້ມາຍັງພຣະວິຫານຂອງພຣະເຢຊູຄຣິດ ແລະວັນນັ້ນຈະເປັນວັນ ເປີດເຜີຍເຣື່ອງທີ່ຖືກບັງລັບໄວ້. ສາສນາສາດຜູ້ອື່ນບອກວ່າວັນນັ້ນຍັງເປັນວັນເຕົ້າໂຮມພວກຕໍ່ສູ້ພຣະເຢຊູ ມາປະທະກັນຣະຫວ່າງສິນທັມແລະອະທັມ, ເພິ່ນໄດ້ອ້າງເຖິງຂໍ້ 13-14 ຄືພວກສັດຮ້າຍສາມໂຕນັ້ນແມ່ນພຍານາກ, ສັດຮ້າຍແລະຜູ້ປະກາດພຣະທັມປອມ. ພວກຜີຮ້າຍມັນຈະອອກໄປຫາພວກກະສັດທົ່ວພິພົບເພື່ອເຕົ້າໂຮມກັນເຮັດສົງຄາມຕໍ່ສູ້ພຣະເຢຊູ ສົງຄາມນີ້ມີຊື່ວ່າ ອາມາເຄໂດນ (ຂໍ້ 16). ດ້ວຍເຫດນີ້ພຣະເຢຊູຈຶ່ງກ່າວວ່າ "ເຮົາຈະມາເໝືອນຂະໂມຍ ຄວາມສຸກຈະມີແກ່ຜູ້ທີ່ເຝົ້າລະວັງ ແລະຜູ້ທີ່ຮັກສາເສື້ອຜ້າຂອງຕົນບໍ່ໃຫ້ເປືອຍກາຍ ຢ້ານວ່າຄົນທັງຫລາຍຈະເຫັນ ຄວາມລະອາຍຂອງຄົນ" (ຂໍ້ 15).

## 4. <u>ສຽງຈາກຣາຊບັນລັງ 16: 17-21</u>

ໂຢຮັນໄດ້ເຫັນເທວະດາອີງທີເຈັດວ່າ "ເທວະດາຕົນທີເຈັດຖອກຂັນຂອງຕົນລົງໃສ່ອາກາດແລະມີພຣະສຸຣະສຽງດັງອອກມາຈາກຣາຊບັນລັງໃນພຣະວິຫານນັ້ນວ່າ ""ສຳເຣັດແລ້ວ"". ໃນພຣະທັມເອເຟໂຊກ່າວເຖິງເຣື່ອງຂອງເຈົ້ານາຍແຫ່ງອາກາດວ່າ "ເມື່ອກ່ອນເຈົ້າເຄີຽດຳເນີນຢູ່ໃນການບາບນັ້ນ ຕາມວິທີຂອງໂລກ ຕາມເຈົ້ານາຍແຫ່ງອາກາດຄືວິນຍານທີ່ຄອບຄອງຄົນທັງຫລາຍທີ່ບໍ່ເຊື່ອຟັງ (ເອເຟໂຊ 2:2). ຄຳວ່າເຈົ້ານາຍແຫ່ງອາກາດແມ່ນວິນຍານຊົ່ວຮ້າຍຝ່າຍຊາຕານຄອບຄອງຈິດໃຈມະນຸດໃຫ້ແຂງກະດ້າງບໍ່ເຊື່ອຟັງພຣະເຈົ້າ. ໃນພຣະທັມພຣະນິມິດທີ່ໂຢຮັນບັນທຶກໄວ້ນີ້ໄດ້ບອກວ່າເທວະດາອົງສຸດທ້າຍໄດ້ຖອກຂັນພຣະພິໂຣດໃສ່ໃນອາກາດ ແປວ່າຖອກໃສ່ວິນຍານຊົ່ວຮ້າຍຝ່າຍຊາຕານຊຶ່ງເປັນການທຳລາຍອຳນາດຊາຕານທີ່ຄອບຄອງຈິດໃຈມະນຸດ, ພວກມັນຈະຖືກມັດແລະຂັງໄວ້ໃນນະຣົກ. ດ້ວຍເຫດນີ້ພຣະເຈົ້າຈຶ່ງກ່າວວ່າ "ສຳເຣັດແລ້ວ".

ໃນເວລານັ້ນຈະເກີດມີສຽງອັນໜ້າຢ້ານເກີດຂຶ້ນ; "ເກີດມີຟ້າແມບ, ມີສຽງດັງຕ່າງໆ, ມີສຽງຮ້ອງ, ແລະເກີດແຜ່ນດິນໄຫວອັນໃຫຍ່ ຊຶ່ງຕັ້ງແຕ່ມະນຸດເກີດມາໃນໂລກ ບໍ່ເຄີຍມີແຜ່ນດິນໄຫວອັນໃຫຍ່ແລະຮ້າຍປານນີ້ຈັກເທື່ອ ນະຄອນນັ້ນຈະແຍກເປັນສາມສ່ວນແລະຫົວເມືອງຂອງນາໆປະເທດກໍຫລົ້ມຈົມ ພຣະເຈົ້າບໍ່ໄດ້ລືມມະຫານະຄອນບາບີໂລນແຕ່ໃຫ້ນະຄອນນັ້ນດື່ມຈອກເຫລົ້າແວງແຫ່ງພຣະພິໂຣດຂອງພຣະອົງ" (ຂໍ້ 18-19). ສາສນາສາດຕີຄວາມໝາຍວ່າ ຟ້າແມບນັ້ນແມ່ນຣິດອຳນາດຂອງພຣະເຈົ້າ, ມີສຽງຕ່າງໆແລະການຮ້ອງໄຫ້ນັ້ນແມ່ນສຽງຂອງຜູ້ເຊື່ອຮ້ອງຍົກຍ້ອງສັຣເສີນພຣະເຈົ້າ ຜູ້ທີ່ບໍ່ເຊື່ອນັ້ນຈະພາກັນຮ້ອງຂໍຄວາມເມຕາສົງສານບອກວ່າຈະຍອມກັບໃຈໃນເວລານັ້ນ, ແຜ່ນດິນໄຫວອັນໃຫຍ່ແມ່ນພຣະເຈົ້າຊົງແຍກຝູງແກະອອກຈາກຝູງແບ້. ນະຄອນຈະຖືກແຍກເປັນສາມສ່ວນແມ່ນນະຄອນຫລວງບາບີໂລນທີ່ເປັນນະຄອນມີທຸກຢ່າງເຊັ່ນ; ພວກຂາບໄຫວພະທຽມ, ພວກຕໍ່ສູ້ພຣະເຈົ້າ ແລະພວກທີ່ເຊື່ອພຣະເຈົ້າ.

ເຮົາທັງຫລາຍໄດ້ຮູ້ແລະໄດ້ເຫັນຂ່າວເຣື່ອງແຜ່ນດິນໄຫວຊູນາມິ ຊຶ່ງເປັນແຜ່ນດິນໄຫວຄັ້ງຍິ່ງໃຫຍ່ທີ່ທຳລາຍຊີວິດມະນຸດເກືອບສອງແສນຄົນໃນເກົ້າປະເທດ, ເຫດການທີ່ເກີດຂຶ້ນຄັ້ງນີ້ເປັນໜ້າຢ້ານຫລາຍທີ່ສຸດ ແຕ່ຖ້າເຮົາຈະປຽບທຽບໃສ່ເຫດການທີ່ຈະເກີດຂຶ້ນຕາມນິມິດຂອງໂຢຮັນແລ້ວ ມັນທຽບກັນບໍ່ໄດ້. ນອກຈາກສິ່ງທີ່ກ່າວມາແລ້ວໃນຕອນທ້າຍຂອງບົດ 16 ບອກອີກວ່າ "ເກາະທຸກເກາະກໍເຄື່ອນໜີໄປແລະຈະຊອກຫາພູທັງຫລາຍກໍບໍ່ພົບ ມີໝາກເຫັບໃຫຍ່ກ້ອນລະຫ້າສິບກິໂລກຣາມຕົກລົງມາຈາກຟ້າຖືກຄົນທັງປວງ ເຂົາຈຶ່ງປ້ອຍດ່າພຣະເຈົ້າເພາະພັຍອັນຕະລາຍທີ່ເກີດມາຈາກໝາກເຫັບນັ້ນ ດ້ວຍວ່າພັຍອັນຕະລາຍນັ້ນຮ້າຍແຮງເຫລືອເກີນ" (ຂໍ້ 20-21). ພູເຂົາຕັ້ງຫລາຍລ້ານໃນໂລກນີ້ຈະຫາບໍ່ພົບສແດງວ່າພູທັງໝົດຫາຍໄປ ຫລືຈົມລົງໄປໃນທະເລຈົນເຮົາຊອກເບິ່ງພູກໍບໍ່ເຫັນ, ໝາກເຫັບທີ່ເຮົາເຄີຽໄດ້ເຫັນຂ່າວຈາກທີວີໜ່ວຍໃຫຍ່ຂນາດບານເບສບອນເຮົາກໍຢ້ານແລ້ວ ແຕ່ສ່ວນໝາກເຫັບທີ່ໂຢຮັນກ່າວເຖິງນີ້ໜັກຫ້າສິບກິໂລມັນຈະໃຫຍ່ປານໃດ ແລະແມ່ນໃຜຈະລອດໄດ້ຫາກຖືກໝາກເຫັບນີ້ຕົກໃສ່ຫົວ.

<u>ຄຳຖາມ</u>:

1. ທ່ານເຄີຽມີຊີວິດຈົນຕາແຈເຫມືອນຕອນອິສຣາເອນຖືກຕາມລ້າແລ້ວມີແມ່ນ້ຳຕັນໜ້າ ແລ້ວພຣະເຈົ້າເປີດທາງໃຫ້ນ້ຳແຫ້ງບໍ່? (ໃນໂລກນີ້ອາຈບໍ່ມີທາງສຳລັບເຮົາ ແຕ່ພຣະເຈົ້າຊົງເປີດຫົນທາງເຮົາສເມີ).

2. ເມື່ອພຣະເຈົ້າຊົງໂຜດທ່ານໃຫ້ພົ້ນຄັ້ງນັ້ນແລ້ວທ່ານຄຶດວ່າພຣະເຈົ້າຈະຊ່ອຍທ່ານອີກຢູ່ບໍ່?

3. ວິບັດທີ່ໂຢຮັນເຫັນນັ້ນຈະຕົກຖືກພວກເຮົາຢູ່ບໍ່? ເປັນຫຍັງຈຶ່ງບໍ່ຖືກ?

4. ນິມິດຂອງໂຢຮັນສອນຫຍັງທ່ານແດ່?

# ບົດຮຽນທີ 11
# ນະຄອນບາບີໂລນຫລົ້ມຈົມ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 17:16; 18:1-8
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະນິມິດ 17-19:5
ຈຸດສຳຄັນຂອງບົດຮຽນນີ້: ໃຊ້ເງິນແລະໃຊ້ອຳນາດຜິດເປັນຫົນທາງໄປສູ່ການພິພາກສາ
ຄຳຖາມເພື່ອການສຳຣວດ: ເຮົາໃຊ້ເງິນຄຳແລະໃຊ້ອຳນາດຢ່າງໃດຈຶ່ງຮູ້ວ່າຜິດ.
ຈຸດປະສົງຂອງບົດຮຽນນີ້: ກຸງບາບີໂລນທີ່ຮັ່ງມີຍັງຖືກທຳລາຍ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ເພື່ອປະຕິບັດຕາມພຣະບັດຍັດໂດຍເຮັດຕາມແບບຢ່າງຂອງພຣະເຢຊູ.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.

## ບົດນຳ

ໜັງຂອງໂຮລີວູດເຂົາເຈົ້າຕົກແຕ່ງຕົວໃຫ້ຜູ້ຮ້າຍເປັນໜ້າຢ້ານໂດຍສເພາະແມ່ນແຕ່ງເປັນຊາຕານໃນຈິນຕະນາການຂອງເຂົາເຈົ້າ, ຄຳຖາມມີຢູ່ວ່າເປັນຫຍັງເຂົາເຈົ້າຈຶ່ງຊອກຄິດປະດິດແຕ່ງຕົວແນວນັ້ນ? ຂ້າພະເຈົ້າເຂົ້າໃຈວ່າເຂົາເຈົ້າເຮັດແນວນັ້ນກໍເພື່ອຜູ້ເບິ່ງຈະເຫັນຮູບພາບຂອງຊາຕານແລະພວກຜູ້ຮ້າຍ. ນັ້ນເປັນພຽງຈິນຕະນາການຂອງນັກສ້າງໜັງຊື່ໆ ບາງທີພວກຊາຕານແລະພວກຜູ້ຮ້າຍທີ່ແທ້ຈິງອາຈມີໜ້າຕາຈົບງາມກໍເປັນໄດ້. ຊາຕານໃຫຍ່ທີ່ເຮົາຈະເວົ້າກັນນີ້ເປັນຊາຕານຍິງທີ່ສວຍງາມຈົນພວກເຈົ້າຊີວິດທັງຫລາຍຫລົງມັກນາງ.

## 1. ອຳນາດອັນສຍອງຂວັນ 17:1-6

"ເທວະດາຕົນນຶ່ງໃນເຈັດຕົນຖືຂັນທັງເຈັດໜ່ວຍນັ້ນ ໄດ້ມາຫາຂ້າພະເຈົ້າແລະເວົ້າວ່າ ເຊີນມາທາງນີ້ ເຮົາຈະໃຫ້ທ່ານເຫັນການຊົງພິພາກສາລົງໂທດຍິງໂສເພນີຄົນສຳຄັນທີ່ນັ່ງຢູ່ເທິງແມ່ນ້ຳອັນຫລວງຫລາຍ ຄືຍິງນັ້ນທີ່ບັນດາກະສັດທົ່ວໂລກໄດ້ຫລົ້ນຜິດຊາຍຍິງກັບນາງ ແລະຊາວໂລກທັງຫລາຍໄດ້ມຶນເມົາດ້ວຍເຫລົ້າແວງແຫ່ງການຜິດຊາຍຍິງຂອງມັນນັ້ນ" (ຂໍ້ 1-2). ເທວະດາຕົນທີເຈັດໄດ້ເຊີນໃຫ້ໂຢຮັນເຫັນການລົງໂທດຍິງໂສເພນີຜູ້ນຶ່ງ, ຍິງຜູ້ນີ້ມີອຳນາດຄວາມງາມຈົນກະສັດທັງຫລາຍຫລົງໄຫລໃນຄວາມງາມຂອງນາງ. ພວກກະສັດທັງຫລາຍມີອຳນາດກໍຈິງແຕ່ອຳນາດຂອງພວກກະສັດນັ້ນຍັງອ່ອນໄຫວໃຫ້ກັບຍິງໂສເພນີຜູ້ນີ້ຈົນຍອມຮ່ວມເຮັດບາບກັບນາງ (17:18). ຍິງໂສເພນີຜູ້ນີ້ມີຊື່ວ່າເຢຊາເບັນ (ບົດ 2:20). ນາງຂຽນຊື່ຕົນເອງໃສ່ເຄື່ອງແຕ່ງຕົວທີ່ໜ້າຜາກຂອງນາງວ່າ ເຢຊາເບັນ ແຫ່ງນະຄອນຫລວງບາບີໂລນ.

ນາງນັ່ງຢູ່ເທິງແມ່ນ້ຳອັນຫລວງຫລາຍມີຄວາມໝາຍວ່າ ມີອຳນາດເໜືອກວ່າເຈົ້າຊີວິດແລະຊົນຊາດຕ່າງໆ "ແມ່ນ້ຳທັງຫລາຍທີ່ທ່ານໄດ້ເຫັນຍິງໂສເພນີນັ່ງຢູ່ນັ້ນ ໄດ້ແກ່ຊົນຊາດ, ມວນຊົນ, ປະຊາຊາດ, ແລະພາສາຕ່າງໆ" (ຂໍ້ 14). ຖ້ອຍຄຳທີ່ບັນທຶກໃນພຣະທັມພຣະນິມິດນີ້ແມ່ນບັນທຶກແບບສາຣະຄະດີຂອງຊາວກຣີກ ເວົ້າເຖິງສາຣະຄະດີແລ້ວແຕ່ລະຊາດກໍມີສາຣະຄະດີຂອງໃຜລາວ ບຸກຄົນທີ່ເກີດໃນປະເທດນັ້ນຍ່ອມຈະເຂົ້າໃຈສາຣະຄະດີໃນປະເທດທີ່ຕົນເກີດ ສ່ວນຄົນທີ່ເກີດທີ່ປະເທດອື່ນຈຳເປັນຈະຕ້ອງຮຽນຮູ້ເພື່ອຈະຮູ້ຈັກສາຣະຄະດີຕ່າງຊາດ. ດ້ວຍເຫດນີ້ເຮົາຈຶ່ງອາສັຍຜູ້ເພິ່ນໄດ້ຮຽນສາຣະຄະດີຊາວກຣີກມາຕີຄວາມໝາຍໃຫ້ເຮົາຟັງ. ເພິ່ນຕີຄວາມໝາຍວ່າຍິງໂສເພນີເຢຊາເບັນນີ້ປຽບເໝືອນຈັກະພັດໂຣມທີ່ມີອຳນາດຄອບຄຸມຫລາຍປະເທດ, ໃຫ້ເຮົາສັງເກດເບິ່ງຈັກກະພັດໂຣມເພິ່ນໄດ້ປຽບທຽບໃສ່ຍິງໂສເພນີທີ່ມີຊື່ສຽງດ້ານຄວາມງາມຈົນກະສັດທັງໂລກຫລົງໄຫລໃນຄວາມງາມຂອງນາງ, ນາງສາມາດເອົາຊະນະໃຈບັນດາກະສັດດ້ວຍຄວາມງາມຂອງຕົນ ແລະພວກເຈົ້ານາຍອື່ນກໍຕົກເປັນເຫຍື່ອຄວາມງາມຂອງນາງດ້ວຍ. "ຊາວໂລກທັງຫລາຍໄດ້ມຶວເມົາດ້ວຍເຫລົ້າແວງແຫ່ງການຜິດຊາຍຍິງຂອງມັນນັ້ນ" (ຂໍ້ 2). ສາຣະຄະດີຂຽນວ່າຍິງໂສເພນີຜູ້ນີ້ນັ່ງຢູ່ເທິງນ້ຳທັງຫລາຍແປວ່າປະເທດຕ່າງໆພ້ອມທັງຊາວໂລກທັງຫລາຍທີ່ຕົກເປັນເຫຍື່ອຂອງນາງ ເພາະວ່າພວກເຂົາໄດ້ເຮັດບາບຮ່ວມກັບນາງ "ນາງນັ່ງຢູ່ ເທິງແມ່ນ້ຳອັນຫລວງຫລາຍ" (ຂໍ້ 1).

ໂຢຮັນຂຽນບອກວ່າເທວະດາພາເພິ່ນເຂົ້າໄປໃນປ່າເພື່ອສຳແດງໃຫ້ເພິ່ນເຫັນສິ່ງທີ່ຈະເກີດຂຶ້ນໃນຂ້າງໜ້າ, ເພິ່ນເຫັນຍິງ ໂສເພນີຜູ້ນີ້ນັ່ງຢູ່ເທິງຫລັງສັດຮ້າຍສີແດງເຂັ້ມ ຊຶ່ງຂຽນຄຳເວົ້າໝິ່ນປມາດເຕັມໄປທັງຕົວຂອງສັດ ສັດຕົວນີ້ມີເຈັດຫົວແລະມີສິບເຂົາ, ຍິງໂສເພນີໄດ້ຖືຈອກທີ່ເຕັມໄປດ້ວຍຄວາມກຽດຊັງ ໜ້າຂີ້ດຽດ ທີ່ໜ້າຜາກຂອງນາງມີຄຳຂຽນວ່າ ເຢຊາເບັນແຫ່ງບາບີໂລນ (ຂໍ້ 3-5) :ປັນການບົ່ງບອກວ່ານາງເປັນໂສເພນີມາຈາກນະຄອນຫລວງບາບີໂລນ.

ນັກສາສນາສາດຜູ້ນຶ່ງໄດ້ສັນນະສູດການທີ່ເທວະດານຳໂຢຮັນໄປໃນປ່ານັ້ນບໍ່ແມ່ນໄປທາງຮ່າງກາຍ ແຕ່ແມ່ນນຳໄປທາງນິມິດໂດຍພຣະວິນຍານ (ຂໍ້ 3) ແບບດຽວກັນກັບເທວະດານຳຜູ້ທຳນວາຍເອເຊກຽນໄປສວັນ ໃນພຣະທັມເອເຊກຽນ 8:3. ສັດຮ້າຍທີ່ມີສີແດງເຂັ້ມນັ້ນໝາຍຄວາມວ່າອຳນາດອັນຍິ່ງໃຫຍ່ຂອງມັນອີງຕາມພຣະນິມິດ13:1. ສັດຮ້າຍຕົວນີ້ແມ່ນຕົວມັງກອນເຈັດຫົວສິບເຂົານັ້ນເອງ. ນັກສາສນາສາດເວົ້າຕໍ່ໄປອີກວ່າອາດຈະບໍ່ແມ່ນຕົວສັດຫລືຕົວມັງກອນເຈັດຫົວສິບເຂົາດອກ ໃນສາຣະຄະດີຕອນນີ້ອາຈມີຄວາມໝາຍວ່າບັນດາພວກເຈົ້ານາຍທີ່ມີອຳນາດໃຊ້ອຳນາດຂອງຕົນບີບບັງຄັບໄພ່ພົນຂອງພຣະເຈົ້າ ໂດຍຖືກການຕົວະຍົວະຂອງຍິງໂສເພນີ ດ້ວຍເຫດນີ້ສັດຮ້າຍນັ້ນກໍພ້ອມທີ່ຈະກັດກິນເລືອດເນື້ອຂອງຜູ້ບໍຣິສຸດເຊັ່ນໄພ່ພົນຂອງອົງພຣະຜູ້ເປັນເຈົ້າທຸກເວລາ.

## ໒. <u>ເທວະດາປະກາດວ່າບາບີໂລນຫລົ້ມ 18:1-3</u>

ບາບີໂບນປົກຂອງອິສຣາເອນໂດຍການບີບບັງຄັບກ່ອນໜ້າພຣະເຢຊູຄຣິດລົງມາບັງເກີດປະມານ 600ປີ, ປະເທດຊາວບ້ານເມືອງຕລອດເຖິງປະຊາຊົນທົ່ວອິສຣະເອນໄດ້ຮັບຄວາມທຸກທໍຣະມານທາງດ້ານເສຖກິດ, ດ້ານການ ເມືອງ, ດ້ານການນັບຖືສາສນາ. ບາບີໂລນໄດ້ທຳລາຍພຣະວິຫານໃນກຸງເຢຣູຊາເລັມໃນປີກ່ອນຄຣິຕສັກຣາດ 587. ເຂົາໄດ້ນຳເອົາພຣະທຽມມາໃຫ້ຄົນຂາບໄຫວ້, ເຂົາເປີດບ່ອນການຄ້າໂສເພນີ ແລະການຊົ່ວຮ້າຍຕ່າງໆໃນເຂດແດນການປົກຄອງຂອງເຂົາ. ສິ່ງເຫລົ່ານີ້ລ້ວນແຕ່ເປັນການລົບລູ່ ແລະຕໍ່ສູ້ພຣະເຈົ້າທັງນັ້ນ.

ໂຢຮັນໄດ້ຫລຽວເຫັນເທວະດາອີກຕົນນຶ່ງລົງມາຈາກສວັນ ແລະຮ້ອງສຽງປະກາດດ້ວຍສຽງດັງວ່າ "ບາບີໂລນມະຫານະຄອນຫລົ້ມຈົມແລ້ວ" (ຂໍ້ ໒). ຂ້າພະເຈົ້າຄຶດເຖິງສຽງຂອງຂະບວນການໆປະທ້ວງທີ່ລາວໃນປີ 1975 ເປັນການປະທ້ວງສຍອງຂວັນທີ່ບໍ່ເຄີຍມີມາກ່ອນໃນປະຫວັດສາດຂອງລາວ, ຜູ້ຄົນພາກັນຕົກສະທ້ານຢ້ານກົວຕໍ່ເຫດການນັ້ນໂດຍ

ສເພາະຢ່າງຍິ່ງແມ່ນຜູ້ຖືກປະຫ້ວງຢ້ານຫລາຍຈົນຢູ່ລາວບໍ່ໄດ້. ເທວະດາທີ່ຮ້ອງສິ່ງສຽງວ່າບາບີໂລນຫລົ້ມຈົມ ຂ້າພະເຈົ້າວາດພາບເຫັນວ່າສຽງຂອງເທວະດາອາຈດັງໄປກວ່າສຽງຟ້າຮ້ອງທີ່ເຮົາເຄີຍໄດ້ຍິນ, ສໍາລັບຂ້າພະເຈົ້າແລ້ວສຽງຟ້າຮ້ອງເປັນຕາຢ້ານຫລາຍທີ່ສຸດ ໂດຍສເພາະແລ້ວແມ່ນຕອນຟ້າຮ້ອງຢູ່ໃກ້ເຮົາເອງ. ເວລານີ້ເທວະດາກໍາລັງຮ້ອງມາແຕ່ເທິງສວັນຊັ້ນຟ້າວ່າ "ບາບີໂລນມະຫານະຄອນຫລົ້ມຈົມແລ້ວ" ສົມມຸດວ່າທ່ານເປັນຊາວນະຄອນບາບີໂລນທ່ານຈະເຮັດແນວໃດ? ຫລືເອົາຊື່ຂອງທ່ານໄປແທນບາບີໂລນແລ້ວເຕີມທັງທ້າຍວ່າຫລົ້ມຈົມທ່ານຈະມີຄວາມຮູ້ສຶກ ຢ່າງໃດ? ຫວັງວ່າເທວະດາຄົງຈະບໍ່ຮ້ອງອອກຊື່ເຮົາແນວນັ້ນ ນອກຈາກວ່າເຮົາເຮັດຢ່າງຊາວບາບີໂລນ.

3. <u>ສຽງປະກາດເພື່ອຄົນຂອງພຣະເຈົ້າ 18:4-8</u>

ຫລັງຈາກສຽງແຮງກ້າຂອງເທວະດາແລ້ວ ໂຢຮັນໄດ້ຍິນພຣະສຸຣະສຽງປະກາດຈາກສວັນວ່າ "ໄພ່ພົນຂອງເຮົາເອີຍ, ຈົ່ງອອກມາຈາກນະຄອນນັ້ນເສັຽເພື່ອເຈົ້າຈະບໍ່ໄດ້ເຂົ້າສ່ວນໃນການຜິດບາບຂອງມັນ ເພື່ອເຈົ້າຈະບໍ່ຖືກພັຍອັນຕະລາຍທີ່ຈະເກີດຂຶ້ນແກ່ມັນນັ້ນ ເພາະວ່າບາບຂອງນະຄອນນັ້ນສູງກວ່າຟ້າແລ້ວ" (ຂໍ້ 4-5). ພຣະຜູ້ເປັນເຈົ້າຊົງເອີ້ນເຮົາທັງຫຼາຍຜູ້ເປັນໄພ່ພົນຂອງພຣະອົງໃຫ້ອອກຈາກນະຄອນບາບີໂລນກ່ອນພຣະອົງຈະທໍາລາຍນະຄອນນັ້ນ. ພຣະຜູ້ເປັນເຈົ້າໄດ້ຊົງປ່າວປະກາດເອີ້ນໃຫ້ໄພ່ພົນຂອງພຣະອົງອອກຈາກບາບີໂລນ ຕາມທີ່ພຣະເຢຊູຊົງກ່າວວ່າ " ເມື່ອນັ້ນພຣະອົງຈະຊົງປະທັບເທິງພຣະທີ່ນັ່ງອັນຮຸ່ງເຮືອງຂອງພຣະອົງ ບັນດາປະຊາຊາດຕ່າງໆຈະຖືກຊົງໂຮມກັນຕໍ່ພຣະພັກພຣະອົງ ແລະພຣະອົງຈະຊົງແຍກເຂົາອອກຈາກກັນ ເໝືອນຜູ້ລ້ຽງສັດແຍກຝູງແກະອອກຈາກຝູງແບ້" (ມ.ທ 24:31-32).

ໃນພຣະທັມຕອນນີ້ເຮົາເຫັນເຈັດປະການດັ່ງນີ້; 1. ໄພ່ພົນຂອງພຣະເຈົ້າຍັງຢູ່ໃນບາບີໂລນຄືໄພ່ພົນທີ່ຊົງເລືອກຈະຖືກເອີ້ນອອກມາດ້ວຍວ່າເວລານັ້ນໄພ່ພົນຂອງພຣະອົງຍັງຢູ່ປະປົນກັບຄົນບາບທົ່ວໄປ). 2. ໄພ່ພົນນີ້ຈະຖືກປ່າວເຕືອນເອີ້ນດ້ວຍສຽງປະສິດຕິພາບໃຫ້ອອກຈາກບາບີໂລນ (ອອກຈາກຄວາມບາບ). ພຣະເຢຊູຊົງກ່າວວ່າ "ແກະຂອງເຮົາກໍຟັງສຽງຂອງເຮົາ" (ໂຢຮັນ 10:27). 3. ບຸກຄົນທີ່ມີພາກສ່ວນໃນການບາບຈະໄດ້ຮັບການລົງໂທດ (ຄົນທີ່ບໍ່ສາມາດຕັດສິນໃຈອອກຈາກບາບີໂລນ). 4. ເມື່ອຄວາມບາບຂອງນະຄອນບາບີໂລນສູງພຽງຟ້າ ພຣະພິໂຣດຂອງພຣະເຈົ້າກໍຈະເລີ້ມຈາກຟ້າລົງສູ່ດິນ. 5. ພຣະເຈົ້າຈະຊົງພຣະພິໂຣດຕອບແທນບາບີໂລນສອງຕໍ່ (ຂໍ້ 6). 6. ບາບີໂລນອວດຕົວຈອງຫອງແລະສນຸກສນານຫລາຍເທົ່າໃດເຂົາກໍຈະໄດ້ຮັບຄວາມທຸກໂສກຫລາຍເທົ່ານັ້ນ. 7. ນະຄອນບາບີໂລນຈະຫລົ້ມຈົມດ້ວຍຄວາມຊົ່ວຊ້າຂອງເຂົາ.

<u>ຄໍາຖາມ</u>

1. ຫາກທ່ານວາດພາບໜ້າຕາແລະລັກສະນະຂອງຜູ້ຮ້າຍທ່ານຈະວາດແນວໃດ?

2. ເທວະດາເຊີນໂຢຮັນໄປເບິ່ງຫຍັງ?

3. ເປັນຫຍັງເທວະດາຈຶ່ງສໍາແດງສິ່ງນີ້ແກ່ໂຢຮັນ?

4. ໂຢຮັນເຫັນຍິງຜູ້ນີ້ງຊື່ວ່າແນວໃດ? ນາງເປັນຄົນຫລັກສະນະແນວໃດ?

5. ອໍານາດຂອງນາງມີຫລາຍປານໃດ? ມີໃຜແດ່ຕົກຢູ່ກ້ອງອໍານາດຂອງນາງ?

6. ເຣື່ອງທີ່ໂຢຮັນເຫັນນັ້ນມີຄວາມໝາຍແນວໃດ?

7. ເທວະດາຕົນນຶ່ງຮ້ອງອອກສຽງດັງວ່າ "ບາບີໂລນມະຫານະຄອນຫລົ້ມຈົມແລ້ວ" (18:2) ຫາກທ່ານເປັນຊາວບາບີໂລນທ່ານຈະເຮັດແນວໃດ?

8. ພຣະສຸຣະສຽງດັງອອກມາຈາກສວັນວ່າ ໄພ່ພົນຂອງເຮົາເອີຍ, ຈົ່ງອອກມາຈາກນະຄອນນັ້ນເສັຽ (18:4) ທ່ານຈະເຮັດແນວໃດກັບສຽງນັ້ນ.

# ບົດຮຽນທີ 12
# ພຣະເຈົ້າຈອມຣາຊາ

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້:  ພຣະນິມິດ 19:11- 20:10
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:  ພຣະນິມິດ 19:6- 20:15
ຈຸດສຳຄັນຂອງບົດຮຽນນີ້:  ເພື່ອບອກໃຫ້ຮູ້ວ່າພຣະເຢຊູປາບຊາຕານຢ່າງບໍ່ເຫລືອ
ຄຳຖາມເພື່ອການສຳຣວດ:  ເຣື່ອງນີ້ຈະຈົບລົງຍານໃດ?
ຈຸດປະສົງຂອງບົດຮຽນນີ້:  ເພື່ອອະທິບາຍພຣະເຢຊູປາບຊາຕານໃນວັນສຸດທ້າຍ

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ໃນໂລກນີ້ອາດຈະມີຫລາຍພຣະຫລາຍເຈົ້າ ແຕ່ພຣະເຈົ້າອົງທ່ຽງແທ້ນັ້ນມີພຽງແຕ່ອົງດຽວ, ພຣະອົງເປັນພຣະຜູ້ສ້າງໂລກຈັກກະວານ ແລະສັພສິ່ງຕ່າງໆໃນໂລກນີ້ຕລອດເຖິງມະນຸດແລະສັດທຸກຊະນິດ ພຣະອົງຊົງເປັນພຣະເຈົ້າອົງດຽວທີ່ປົກປ້ອງຄຸ້ມຄອງໂລກ. ພວກຊາຕານເປັນຝ່າຍກໍກວນຄວາມສງົບສຸກໃນໂລກຂອງພຣະອົງຢູ່ທຸກວັນ ແລະພຣະອົງໄດ້ກຳນົດວັນເດືອນປີຂອງມັນໄວ້ແລ້ວດັ່ງເຮົາຈະຮຽນໃນວັນນີ້. (ໃນບົດຮຽນນີ້ຂ້າພະເຈົ້າຈະບໍ່ນຳພາທ່ານເຂົ້າໄປເລິກເຖິງເຣື່ອງ Premillennialism, Amillennialism, Postmillenialism ດ້ວຍວ່າເປັນເຣື່ອງຂອງນັກສາສນາສາດ).

1. ຊົງປະທັບເທິງຫລັງມ້າຂາວ 19:11-16

ໂຢຮັນໄດ້ເຫັນສວັນໄຂອອກ ແລະເຫັນພຣະເຢຊູຊົງປະທັບເທິງຫລັງມ້າຂາວໃນຖ້າມກາງກອງທັບແຫ່ງເມືອງສວັນຄືຝູງເທວະດາຂອງພຣະອົງກຳລັງຈະສະເດັດລົງມາຍັງໂລກຄັ້ງທີສອງ ເພື່ອພິພາກສາຕັດສິນຕາມການຂອງມະນຸດທຸກຄົນ. "ແລ້ວຂ້າພະເຈົ້າໄດ້ເຫັນສວັນໄຂອອກ ແລະດັ່ງນີ້, ມີມ້າຂາວໂຕໜຶ່ງພຣະອົງຜູ້ປະທັບເທິງຫລັງມ້ານັ້ນຊົງມີນາມວ່າ "ສັດຊື່" ແລະ "ທ່ຽງແທ້" ພຣະອົງຊົງພິພາກສາແລະທຳເສິກດ້ວຍຍຸດຕິທັມ. (ຂໍ້ 11). ພວກນັກສາສນາສາດສັນນິຖານວ່ານີ້ແມ່ນສົງຄາມຄວາມດີແລະຄວາມຊົ່ວຕໍ່ສູ້ກັນດັ່ງທີ່ນິມິດຂອງໂຢຮັນທີ່ບັນທຶກໄວ້ໃນ "ໃນຂະນະນັ້ນໄດ້ເກີດສົງຄາມຂຶ້ນໃນຟ້າສວັນ ມີຄາເອັນກັບເທບບໍຣິວານຂອງຕົນໄດ້ຕໍ່ສູ້ຮົບກັບພະຍານາກ ພະຍານາກກັບບໍຣິວານຂອງມັນກໍໄດ້ຕໍ່ສູ້ ແຕ່ຝ່າຍພະຍາຍາກບໍ່ອາດຊັຍຊະນະໄດ້ ແລະພະຍານາກຈຶ່ງບໍ່ມີບ່ອນຢູ່ໃນສວັນຕໍ່ໄປອີກ (ພຣະນິມິດ 12:9). ສົງຄາມຄັ້ງແຮກພວກພະຍານາກໄດ້ເສັຽຊັຍຈຶ່ງບໍ່ມີບ່ອນຢູ່ໃນສວັນແລ້ວມາກໍ່ຄວາມຫວຸ້ນວາຍໃນໂລກ ສ່ວນສົງຄາມຄັ້ງທີສອງແມ່ນຄັ້ງທີ່ພຣະເຈົ້າຈະປາບພະຍານາກແລະພັກພວກຂອງມັນໃຫ້ໝົດສິ້ນ. ພະຍານາກທີ່ຄົນເຮົາຫລາຍຄົນຂາບໄຫວ້ຢູ່ທຸກວັນນີ້ມັນມີຣິດອຳນາດດ້ວຍວ່າມັນເຄີຍຢູ່ໃນສວັນຮ່ວມກັບຝູງເທວະດ າແລະມັນເຄີຍເປັນເໝືອນເທວະດາຂອງພຣະຜູ້ເປັນເຈົ້າ ເມື່ອມັນໝົດຣິດອຳນາດໃນສວັນມັນຈຶ່ງມາແຜ່ງຣິດໃນໂລກນີ້ເພື່ອຄົນທັງຫລາຍຈະໄດ້ໂຄຣົບຢຳເກງມັນ. ໂຢຮັນໄດ້ເຫັນນິມິດບັ້ນປາຍຂອງມັນແລ້ວຄືພວກມັນຈະຖືກມັດແລະຖິ້ມລົງນະຣົກ (ພຣະ

ນິມິດ 20:1-2).

ໃນສມັຍບູຮານເພິ່ນໃຊ້ມ້າສຳລັບການເດີນທາງຕລອດເຖິງການສູ້ຣົບໃນເສິກສົງຄາມ, ໂຢຮັນໄດ້ເຫັນຮູບພາບຂອງເສິກສົງຄາມແບບໂບຮານ ຄືເພິ່ນເຫັນພຣະເຢຊູປະທັບເທິງຫລັງມ້າຂາວໃນຖານກາງຝູງທະຫານແຫ່ງເມືອງສວັນຄືຝູງເທວະດາຈັດຕຽມສົງຄາມໃນລະຫວ່າງຄວາມດີແລະຄວາມຊົ່ວ. ພຣະເຢຊູຊົງປະທັບເທິງຫລັງມ້າຂາວຊຶ່ງເປັນສັນຍາລັກວ່າພຣະອົງຊົງສັດຊື່ແລະທ່ຽງແທ້, ໂຢຮັນບອກວ່າຜູ້ປະທັບເທິງຫລັງມ້າຂາວນັ້ນຊົງພຣະນາມວ່າ ສັດຊື່ແລະທ່ຽງ ແທ້.ໂຢຮັນຍັງບັນລະຍາຍເຖິງພຣະລັກສະນະຂອງພຣະອົງ, ພ້ອມທັງເຄື່ອງທົງຂອງພຣະອົງກໍບົ່ງບອກວ່າພຣະອົງຊົງເປັນຈອມກະສັດ ແລະຈອມເຈົ້ານາຍ. "ພຣະອົງຊົງມີພຣະນາມຈາຣຶກໄວ້ທີ່ເຄື່ອງທົງ ແລະພຣະອຸຣະ (ໜ້າເອິກ) ວ່າ ຈອມເຈົ້າກະສັດ ແລະຈອມເຈົ້ານາຍ" (ຂໍ້ 16).

2. <u>ຊາຕາກັມຂອງສັດຮ້າຍ 19:17-21</u>

ພວກບັນດາກະສັດແລະສັດຮ້າຍຝ່າຍໂລກພາກັນຮວມຕົວເພື່ອຕໍ່ສູ້ຜູ້ສະເດັດມາຈາກສວັນ, ໃນຂະນະທີ່ກອງທັບສວັນກຳລັງມານັ້ນ ມີເທວະດາຂອງພຣະເຈົ້າຢືນຢູ່ໃນດວງອາທິດຮ້ອງບອກໃຫ້ນົກທັງໂລກມາຕຽມກິນເນື້ອພວກສັດຮ້າຍ "ເພິ່ນໄດ້ປະກາດດ້ວຍສຽງດັງແກ່ນົກທັງປວງທີ່ບິນໄປມາໃນທ້ອງຟ້າວ່າ ຈົ່ງມາໂຮມກັນສຳລັບການກິນລ້ຽງໃຫຍ່ຂອງພຣະເຈົ້າ ເພື່ອຈະໄດ້ກິນຊີ້ນກະສັດ, ຊີ້ນນາຍທະຫານ, ຊີ້ນຊາຍສະກັນ, ຊີ້ນມ້າກັບຊີ້ນຄົນທີ່ຂີ່ມ້ານັ້ນ, ແລະຊີ້ນປະຊາຊົນທັງເສຣີແລະຂ້ອຍຂ້າທັງຜູ້ນ້ອຍແລະຜູ້ໃຫຍ່" (ຂໍ້ 17-18). ເທວະດາໄດ້ປະກາດຊັຍຊະນະກ່ອນສົງຄາມດ້ວຍຄວາມແນ່ໃຈດ້ວຍວ່າເຖິງເວລາທີ່ພຣະເຈົ້າຈະປາບມານຮ້າຍແລ້ວ.

ພວກສັດຮ້າຍພະຍານາກ, ມັງກອນແລະສັດຮ້າຍອື່ນໆທີ່ມີອຳນາດໃນໂລກຈະຖືກຈັບມັດຖິ້ມລົງບຶງໄຟ, ຜູ້ປະກາດພຣະທັມປອມກໍຈະຖືກຈັບມັດຖິ້ມລົງໃນບຶງໄຟ, ຄົນຂາບໄຫວ້ສັດຮ້າຍແລະຜູ້ສັ່ງໃຫ້ຄົນຂາບໄຫວ້ສັດຮ້າຍກໍຈະຖືກມັດຖິ້ມ ລົງບຶງໄຟ. "ສັດຮ້າຍນັ້ນໄດ້ຖືກຈັບພ້ອມດ້ວຍຄົນທີ່ປອມຕົວເປັນຜູ້ປະກາດພຣະທັມ, ທີ່ໄດ້ເຮັດໝາຍສຳຄັນຕໍ່ໜ້າສັດຮ້າຍນັ້ນ ແລະໃຊ້ໝາຍສຳຄັນນັ້ນຫລອກລວງຄົນທັງຫລາຍທີ່ຮັບເຄື່ອງໝາຍຂອງສັດຮ້າຍແລະບູຊາຮູບຂອງມັນ ເຂົາທັງສອງໄດ້ຖືກຖິ້ມລົງທັງເປັນໃນບຶງໄຟທີ່ໄໝ້ຢູ່ດ້ວຍມາດ" (ຂໍ້ 19-20). ຍັງມີຫລາຍຄົນທີ່ບໍ່ຖືກຈັບກໍຈະຕ້ອງຕາຍດ້ວຍຣິດອຳນາດທີ່ອອກຈາກປາກຂອງພຣະເຈົ້າເປັນການສິ້ນສຸດ. "ສ່ວນຄົນທີ່ຍັງເຫລືອຢູ່ນັ້ນ ໄດ້ຖືກຂ້າດ້ວຍພຣະແສງທີ່ອອກມາຈາກພຣະໂອດຂອງພຣະອົງຜູ້ຊົງປະທັບເທິງຫລັງມ້ານັ້ນ ແລະນົກທັງປວງກໍກິນຊີ້ນຂອງຄົນເຫລົ່ານັ້ນຈົນອີ່ມ" (ຂໍ້ 21).

3. <u>ຊາຕາກັມຂອງຊາຕານ 20:1-3</u>

ເທວະດາຕົນນຶ່ງຖືຂໍກະແຈຂອງເຫວເລິກ (ເຫວເລິກທີ່ໂຢຮັນກ່າວນີ້ມີຄວາມໝາຍວ່ານະຣົກ) ແລະຖືໂສ້ ເສັ້ນໃຫຍ່, ເທວະດາຕົນນີ້ເປັນຜູ້ຈັບມັດພວກພຍາມານແລະຊາຕານໄປຖິ້ມລົງນະຣົກ. "ເພິ່ນຖືຂໍກະແຈຂອງເຫວເລິກແລະຖືໂສ້ເສັ້ນໃຫຍ່ ເພິ່ນໄດ້ຈັບພະຍານາກຊຶ່ງເປັນງູແຕ່ດຶກດຳບັນຄືພຍາມານແລະຊາຕາ ນ ແລະໄດ້ຜູກມັດມັນໄວ້ລະຫວ່າງພັນປີແລ້ວຖິ້ມລົງເຫວເລິກ ແລະລັ່ນກະແຈທັງຕີຕາປະທັບໃສ່ ເພື່ອບໍ່ໃຫ້ມັນຫລອກລວງບັນດາປະຊາຊາດອີກຕໍ່ໄປ" (ຂໍ້ 1-3). ເຣື່ອງນີ້ເປັນຄຳຕອບຂອງຄົນຈຳນວນຫລວງຫລາຍທີ່ຖາມກັນວ່າເປັນຫຍັງພຣະເຈົ້າບໍ່ປາບຊາຕານ? ທັງນີ້ກໍເພາະວ່າບໍ່ເຖິງເວລາຂອງພຣະເຈົ້າເທື່ອ, ພຍາມານແລະຊາຕານນັ້ນພຣະເຈົ້າກຳໜົດອັນເວລາຂອງມັນໄວ້ແລ້ວໃນລະຍະພັນປີພວກມັນກໍຈະຖືກຈັບ ແລະພາຍຫລັງມາພວກມັນກໍຈະຖືກປ່ອຍໄປຊົ່ວຄາວ. ໂຢຮັນບໍ່ໄດ້ບອກວ່າເປັນຫຍັງພຣະເຈົ້າຈຶ່ງປ່ອຍພວກມັນຊົ່ວຄາວ ແຕ່ເຮົາກໍຮູ້ແລ້ວວ່າເປັນແຜນການຂອງພຣະເຈົ້າ ເມື່ອພວກຊາຕານຖືກ

ປ່ອຍອອກມາພວກມັນກໍຈະຊອກກັດກິນຄົນທີ່ຢູ່ຫ່າງໄກຈາກພຣະເຈົ້າ ແລະກັດກິນຄົນທັງຫລາຍທີ່ບໍ່ເຊື່ອພຣະເຈົ້າ.

4. <u>ສໍາລັບຄົນທີ່ເຊື່ອແລະໄວ້ວາງໃຈໃນພຣະເຈົ້າ (20:4-6).</u>

ໃນຂະນະທີ່ຊາຕານຖືກມັດຖິ້ມລົງເຫວເລິກນັ້ນ ໄພ່ພົນຂອງອົງພຣະຜູ້ເປັນເຈົ້າຜູ້ທີ່ຖືກຂ້າຍ້ອນການປະກາດນັ້ນໄດ້ຮັບສະງ່າຣາສີແລະປົກຄອງຮ່ວມກັບພຣະເຢຊູຄຣິດ. ໂຢຮັນເປັນພະຍານວ່າ "ແລ້ວຂ້າພະເຈົ້າໄດ້ເຫັນບັນລັງຫລາຍອັນແລະຜູ້ທີ່ນັ່ງເທິງບັນລັງນັ້ນເປັນຜູ້ທີ່ໄດ້ຮັບພຣະຣາຊທານອໍານາດພິພາກສາ ແລະຂ້າພະເຈົ້າຍັງໄດ້ເຫັນດວງວິນຍານຂອງຄົນທັງປວງທີ່ໄດ້ຖືກຕັດຄໍເພາະເປັນພະຍານຝ່າຍພຣະເຢຊູ ແລະເພາະພຣະທັມຂອງພຣະເຈົ້າຄືຜູ້ທີ່ບໍ່ໄດ້ບູຊາສັດຮ້າຍຫລືຮູບຂອງມັນແລະບໍ່ໄດ້ຮັບເຄື່ອງໝາຍຂອງມັນຕິດໄວ້ທີ່ໜ້າຜາກຫລືມືຂອງຕົນ  ຄົນເຫລົ່ານັ້ນກັບມີຊີວິດໃໝ່ແລະໄດ້ຄຸ້ມຄອງຮ່ວມກັບພຣະຄຣິດໃນລະຫວ່າງພັນປີ" (ຂໍ້ 4). ນັກສາສນາສາດຕີຄວາມໝາຍບັນລັງຫລາຍອັນນັ້ນແມ່ນບັນລັງຂອງສາວົກສິບສອງຄົນໂດຍເພິ່ນອ້າງອີງໃສ່ພຣະທັມລູກາ "ຝ່າຍພວກທ່ານທີ່ຕິດຕາມໝັ້ນຢູ່ກັບເຮົາໃນເວລາຖືກທົດລອງ ພຣະບິດາຊົງຈັດແຈງແຜ່ນດິນໃຫ້ແກ່ເຮົາຢ່າງໃດ  ເຮົາກໍຈັດແຈງແຜ່ນດິນນີ້ໄວ້ສໍາລັບທ່ານທັງຫລາຍເໝືອນກັນ ເພື່ອພວກທ່ານຈະໄດ້ກິນແລະດື່ມທີ່ໂຕະຂອງເຮົາໃນຣາຊແຜ່ນດິນຂອງເຮົາ ແລະພວກທ່ານຈະນັ່ງເທິງບັນລັງພິພາກສາພວກອິສຣາເອັນສິບສອງກະກຸນນັ້ນ" ( ລູກາ 22:18-22).  ສ່ວນດວງວິນຍານຂອງຄົນທີ່ຖືກຕັດຄໍແລະວິນຍານອື່ນໆຂອງຄົນຊອບທັມໃນພຣະເຢຊູຄຣິດນັ້ນເພິ່ນໄດ້ອ້າງໃສ່ພຣະທັມ 1ໂກຣິນໂທດັ່ງນີ້;  "ເຈົ້າທັງຫລາຍບໍ່ຮູ້ຫລືວ່າໄພ່ພົນຂອງພຣະເຈົ້າຈະພິພາກສາໂລກ  ຖ້າພວກເຈົ້າຈະພິພາກສາໂລກ  ເຈົ້າຈະບໍ່ສາມາດຕັດສິນເຣື່ອງເລັກ ນ້ອຍທີ່ສຸດຫລື ເຈົ້າບໍ່ຮູ້ຫລືວ່າພວກເຮົາຈະພິພາກສາພວກເທວະດາຫລາຍກວ່ານັ້ນເທົ່າໃດ  ເຮົາສົມຄວນຈະຕັດສິນຄວາມເຣື່ອງຊີວິດນີ້ "(1 ໂກຣິນໂທ 6:2-3).

<u>ຄໍາຖາມ:</u>

1. ໂຢຮັນເຫັນໃຜປະທັບເທິງຫລັງມ້າຂາວ?

2. ເພິ່ນປະທັບເທິງຫລັງມ້າຂາວເຮັດຫຍັງ?

3. ຜູ້ປະທັບເທິງຫລັງມ້າຂາວມີເຄື່ອງຫມາຍທີ່ຫນ້າເອິກແນວໃດ?

4. ເສິກສົງຄາມການຕໍ່ສູ້ຄັ້ງນີ້ແມ່ນໃຜຕໍ່ສູ້ກັບໃຜ?

5. ເທວະດາປະກາດໃຫ້ນົກທັງຫລາຍມາເຮັດຫຍັງ?

6. ຈະມີຫຍັງເກີດຂຶ້ນກັບພວກສັດຮ້າຍ?

7. ເທວະດາຕົນນຶ່ງຖືຂໍກະແຈແລະໂສ້ໄວ້ເຮັດຫຍັງ?

8. ຫລັງຈາກພຣະເຈົ້າຂັງພະຍາມານໄວ້ 1000 ປີ ແລ້ວເປັນຫຍັງເພິ່ນຈຶ່ງປ່ອຍມັນຊົ່ວຄາວ?

9. ໃນຂະນະທີ່ຈັບມັດຊາຕານນັ້ນພວກຄົນທີ່ເຊື່ອໃນພຣະເຈົ້າຈະເປັນແນວໃດ?

# ບົດຮຽນທີ 13
# ຟ້າໃໝ່ແລະແຜ່ນດິນໃໝ່

---

ຂໍ້ພຣະຄັມພີສຳລັບບົດຮຽນນີ້: ພຣະນິມິດ 21:1-- 22:21
ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້: ພຣະນິມິດ 21--22
ຈຸດສຳຄັນຂອງບົດຮຽນນີ້: ເພື່ອບອກໃຫ້ຮູ້ວ່າພຣະເຈົ້າຊົງໂຜດປະທານສິ່ງໃໝ່ແກ່ທຸກຄົນ
ຄຳຖາມເພື່ອການສຳຣວດ: ທຸກສິ່ງຈະກາຍເປັນສິ່ງໃໝ່ໄດ້ຢ່າງໃດ?
ຈຸດປະສົງຂອງບົດຮຽນນີ້: ເພື່ອອະທິບາຍນິມິດເຣື່ອງທ້ອງຟ້າໃໝ່ແລະແຜ່ນດິນໃໝ່.

ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

## ບົດນຳ

ພຣະນິມິດ 21-22 ເປັນນິມິດຕອນຈົບຂອງໂຢຮັນ ດ້ວຍຄວາມຊົມຊື່ນຍິນດີ ຄືພຣະເຈົ້າໄດ້ເຮັດຕາມພຣະສັນຍາຂອງພຣະອົງຄືຊີວິດຕລອດໄປເປັນນິດໂດຍເຮັດໃຫ້ທຸກຢ່າງກາຍເປັນສິ່ງໃໝ່ອີກ ແລະຍັງນຳຄົນທີ່ເຊື່ອໃນພຣະອົງໃຫ້ມາຢູ່ຕໍ່ໜ້າພຣະອົງ ເພື່ອສເວີຍສຸກຮ່ວມກັບພຣະອົງ.

## 1. ທຸກຢ່າງກາຍເປັນສິ່ງໃໝ່ 21:1-8

ທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ມີຄວາມໝາຍຕໍ່ໄພ່ພົນຂອງພຣະຜູ້ເປັນເຈົ້າເມື່ອພຣະເຢຊູຜູ້ຊົງເປັນພຣະເຈົ້າສະເດັດມາໃນສະພາບຂອງພະເຈົ້າໃນຄາວສຸດທ້າຍ. ຄຳວ່າ ອູຣາໂນສ ໃນພາສາກຣີກແປວ່າທ້ອງຟ້າ ຫລືທີ່ສູງກວ່າພື້ນດິນມີຄວາມໝາຍອີກວ່າອາກາດຫລືສວັນຊຶ່ງເປັນພຣະທີ່ນັ່ງຂອງອົງພຣະຜູ້ເປັນເຈົ້າ. ບາງຄົນເຊື່ອວ່າ ແຜ່ນດິນໃໝ່ແມ່ນໂລກຂອງເຮົານີ້ເອງ ໂດຍສະເພາະແມ່ນເພິ່ນອ້າງເຖິງ 2 ໂກຣິນໂທ "ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຊົງສ້າງຂຶ້ນໃໝ່ແລ້ວຖານະເກົ່າກໍລ່ວງໄປແລ້ວ ເບິ່ງແມ່ກາຍເປັນສິ່ງໃໝ່ທັງນັ້ນ" (2 ໂກຣິນໂທ 5:17). ດັ່ງນັ້ນເພິ່ນຈຶ່ງຕີຄວາມໝາຍວ່າການປ່ຽນແປງກາຍເປັນສິ່ງໃໝ່ນີ້ແມ່ນຢູ່ໃນໂລກນີ້ຊຶ່ງອັນເກົ່ານັ້ນຖືກທຳລາຍແລະກາຍເປັນສິ່ງໃໝ່ທັງນັ້ນ, "ໂດຍພຣະທັມອັນດຽວກັນນັ້ນແຫລະ ຟ້າແລະແຜ່ນດິນທີ່ມີຢູ່ໃນປັດຈຸບັນ ກໍຊົງຮັກສາໄວ້ສຳລັບໃຫ້ໄຟເຜົາຜານເສັຽ ຄືຊົງຮັກສາໄວ້ຈົນກວ່າຈະເຖິງວັນທີ່ບັນດາມະນຸດຊຶ່ງບໍ່ນັບຖືພຣະເຈົ້າຈະຖືກຊົງພິພາກສາແລະຈິບຫາຍໄປ" (2 ເປໂຕ 3: 7). ເປໂຕເວົ້າຕໍ່ໄປວ່າ "ວັນຂອງອົງພຣະຜູ້ເປັນເຈົ້າຈະມາເຖິງເໝືອນດັ່ງຂະໂມຍມາ ໃນວັນນັ້ນທ້ອງຟ້າຈະລ່ວງເສັຽໄປດ້ວຍສຽງດັງກ້ອງສນັ່ນ, ໂລກທາດຈະສລາຍໄປດ້ວຍໄຟ, ແລະແຜ່ນດິນໂລກກັບສາຣະພັດທຸກສິ່ງຈະໃໝ້ເສັຽໝົດ ເມື່ອຮູ້ແລ້ວວ່າສິ່ງທັງປວງຈະສລາຍໄປຢ່າງນີ້ ທ່ານທັງຫລາຍຄວນຈະເປັນຄົນຢ່າງໃດໃນການດຳເນີນຊີວິດບໍຣິສຸດແລະການນັບຖືພຣະເຈົ້າ" (2 ເປໂຕ 3:10-11). ອີງຕາມພຣະທັມນີ້ໂລກເຮົາຈະບໍ່ມີຕໍ່ໄປ.

ໂຢຮັນນິມິດເຫັນທ້ອງຟ້າໃຫມ່ແລະແຜ່ນດິນໂລກໃໝ່ເໝືອນກຸງເຢຣູຊາເລັມໃໝ່ຊຶ່ງເປັນນະຄອນສັກສິດ ແລະນະຄອນນີ້ ຄ້າຍຄືເຈົ້າສາວຜູ້ນຶ່ງທີ່ກຳລັງລໍຖ້າເຈົ້າບ່າວຂອງລາວ. ເພິ່ນໄດ້ປຽບທຽບເອົາກຸງເຢຣູຊາເລັມເປັນເຈົ້າສາວສຳລັບພຣະເຢຊູຄຣິດ, ດ້ວຍວ່າເຈົ້າສາວຈະຈັດແຈງໄວ້ທຸກຢ່າງສວຍງາມແລະເປັນລະບຽບຮຽບຮ້ອຍ ໃນວັນສົມຣົດນັ້ນເປັນວັນແຫ່ງຄວາມຊົມຊື່ນຍິນດີທັງສອງຝ່າຍ. "ນະຄອນນັ້ນໄດ້ຈັດຕຽມໄວ້ແລ້ວເໝືອນຢ່າງເຈົ້າສາວແຕ່ງຕົວໄວ້ສຳລັບເຈົ້າບ່າວ" (ພຣະນິມິດ 21:3). ທັງໝົດນີ້ເປັນຮູບພາບຂອງໄພ່ພົນຂອງພຣະເຈົ້າຈະໄດ້ສເວີຍສຸກໃນທ້ອງຟ້າໃໝ່ແລະແຜ່ນດິນໂລກໃໝ່ຮ່ວມກັບພຣະຄຣິດຕລອດໄປເປັນນິດ.

## 2. ເຢຣູຊາເລັມໃໝ່ 21:9-27

ພວກນັກວິທະຍາສາດທີ່ມີຄວາມຮູ້ຢ່າງສູງໃນໂລກແຕ່ບໍ່ສາມາດເຂົ້າໃຈໃນສິ່ງທີ່ຈະເກີດຂຶ້ນໃນອະນາຄົດ ແຕ່ພຣະເຈົ້າໂຜດປະທານໃຫ້ພວກຄຣິສຕຽນທີ່ໂລກຮ້ອງວ່າໂງ່ຈ້າໄດ້ຮູ້ ດັ່ງນັ້ນເຮົາຈຶ່ງສົມຄວນຂອບພຣະຄຸນພຣະເຈົ້າເປັນຢ່າງຍິ່ງ. "ຝ່າຍຄົນທັງຫລາຍທີ່ກຳລັງຈິບຫາຍນັ້ນ ເຂົາເຫັນວ່າເຣື່ອງໄມ້ກາງແຂນເປັນເຣື່ອງໂງ່ ແຕ່ສຳລັບເຮົາທັງຫລາຍທີ່ກຳລັງໂຜດໃຫ້ພົ້ນກໍເຫັນວ່າເປັນຣິດອຳນາດຂອງພຣະເຈົ້າ ເພາະມີຄຳຂຽນໄວ້ໃນພຣະຄັມພີວ່າ ເຮົາຈະທຳລາຍປັນຍາຂອງຄົນມີປັນຍາ ແລະຈະໃຫ້ຄວາມສລາດຂອງຄົນສູນເສັຽໄປ ຄົນມີປັນຍາຢູ່ໃສ, ນັກທັມຢູ່ໃສ, ນັກໂຕ້ຕອບບັນຫາສມັຍນີ້ຢູ່ໃສ,ພຣະເຈົ້າບໍ່ໄດ້ຊົງກະທຳໃຫ້ປັນຍາຂອງໂລກກາຍເປັນຄວາມໂງ່ຫລື ເພາະຕາມສະຕິປັນຍາຂອງພຣະເຈົ້າຊົງເຫັນວ່າ ມະນຸດບໍ່ສາມາດຮູ້ຈັກພຣະເຈົ້າໄດ້ດ້ວຍປັນຍາຂອງຕົນ ພຣະເຈົ້າຈຶ່ງຊອບພຣະທັຍຊົງໂຜດຄົນທັງຫລາຍທີ່ເຊື່ອນັ້ນ ໃຫ້ພົ້ນດ້ວຍຄຳເທສນາເຣື່ອງທີ່ເຂົາຖືວ່າໂງ່" (1 ໂກຣິນໂທ 1:18-21).

ເທວະດາໄດ້ສຳແດງໃຫ້ໂຢຮັນເຫັນກຸງເຢຣູຊາເລັມໃໝ່ຄ້າຍຄືເຈົ້າສາວທີ່ຈະເປັນມະເຫສີ(ເມັຽ) ຂອງພຣະເມສານ້ອຍ "ເຊີນມານີ້ ເຮົາຈະໃຫ້ທ່ານເຫັນເຈົ້າສາວທີ່ເປັນມະເຫສີຂອງພຣະເມສານ້ອຍ" (ຂໍ້ 9). ເຢຣູຊາເລັມໃໝ່ເປັນແຜ່ນດິນທີ່ສວຍງາມເຕັມໄປດ້ວຍແສງສີອັນສົດໃສ ນະຄອນນັ້ນມີກຳແພງອ້ອມເມືອງຊຶ່ງມີປະຕູສິບສອງປະຕູ ມີເທວະດາເຝົ້າຮັກສາ, ປະຕູທັງສິບສອງປະຕູແລະຫີນທັງສິບສອງກ້ອນນັ້ນໄດ້ຈາຣຶກເຖິງສາວົກສິບສອງຄົນຂອງພຣະເຢຊູຄຣິດ ຊຶ່ງໃນພຣະທັມຕອນນີ້ເອີ້ນວ່າພຣະເມສານ້ອຍ. (ຂໍ້ 11-14).

ໃນຂໍ້ 15-21 ໄດ້ກ່າວເຖິງຂນາດເນື້ອທີ່ແລະການປະດັບດ້ວຍຂອງມີຄ່າໃນນະຄອນເຢຣູຊາເລັມໃໝ່ຊຶ່ງເປັນການເກີນຄວາມເຂົ້າໃນຂອງມະນຸດ. ຂ້າພະເຈົ້າໄດ້ຍິນຄຳຊ່ຳລືກັນໃນຄວາມສວຍງາມຂອງ ລັດສະວີກັສ ວ່າເປັນເມືອງທີ່ມີແສງສີໄຟຮຸ່ງເໝືອນກາງເວັນ, ແສງໄຟນັ້ນມີທຸກສີ, ຖນົນຫົນທາງກໍເຕັມໄປດ້ວຍຜູ້ຄົນທ່ຽວຊົມຄວາມງາມຂອງເມືອງນັ້ນ. ເມື່ອເຂົ້າໄປຂ້າງໃນຂອງເມືອງນີ້ຈະເປັນບ່ອນການພະນັນເງິນລ້ານວ່າຊັ້ນເຂົາເຈົ້າວ່າ ສຳລັບຂ້າພະເຈົ້າຍັງບໍ່ເຄີຍເຫັນຈັກເທື່ອ ແຕ່ແທນທີ່ຂ້າພະເຈົ້າຈະລໍເວລາໄປຊົມຄວາມງາມຂອງ ລັດສະວີກັສ ຂ້າພະເຈົ້າຈະລໍຖ້າໄປຢູ່ເມືອງງາມຄືກຸງເຢຣູຊາເລັມໃໝ່ຫຼາຍກວ່າ ເພາະວ່າເມືອງນັ້ນບໍ່ຕ້ອງການແສງສະວ່າງຂອງດວງອາທິດແລະດວງຈັນເພາະຣັສມີຂອງພຣະເຈົ້າຊົງເປັນແສງສວ່າງ ແລະພຣະເມສານ້ອຍຊົງເປັນໂຄມໄຟ (ຂໍ້ 23). ພວກກະສັດໃນໂລກທັງຫລາຍຈະນຳເອົາສະງ່າຣາສີຂອງຕົນເຂົ້າໃນນະຄອນນັ້ນ ໃນນະຄອນນັ້ນຈະບໍ່ເປີດແລະປິດປະຕູດ້ວຍວ່ານະຄອນນັ້ນບໍ່ມີກາງຄືນ (ຄວາມຊົ່ວຮ້າຽ) ສິ່ງນຶ່ງສິ່ງໃດທີ່ຊົ່ວມົວໝອງ ຫລືຜູ້ເຮັດການອັນບໍ່ດີຈະເຂົ້າໄປໃນແຜ່ນດິນນັ້ນບໍ່ ໄດ້ເດັດຂາດ, ຜູ້ທີ່ຈະເຂົ້າໄປໃນນະຄອນນັ້ນແມ່ນຜູ້ທີ່ຈົດທະບຽນຂອງພຣະເມສານ້ອຍເທົ່ານັ້ນ (ຂໍ້ 24-27).

## 3. ແຜ່ນດິນໃໝ່ເປັນເໝືອນແມ່ນ້ຳແຫ່ງຊີວິດ 22:1-21

ເຣື່ອງຂອງມະນຸດເຮົາເລີ່ມຕົ້ນຈາກສວນເອເດນ ແລະກໍຈົບລົງໃນສວນອີກແຫ່ງນຶ່ງຊຶ່ງສວນນັ້ນມີຮູບພາບຢ່າງນີ້;

"ແມ່ນ້ຳໄຫລຜ່ານ ຖນົນຂອງນະຄອນນັ້ນ ຢູ່ຮີມແມ່ນ້ຳທັງສອງຟາກມີຕົ້ນໄມ້ແຫ່ງຊີວິດຊຶ່ງເກີດຜົນສິບສອງຊະນິດ ເກີດຜົນທຸກເດືອນ ແລະໃບໄມ້ນັ້ນສຳລັບປົວບັນດາປະຊາຊາດໃຫ້ດີ" (ຂໍ້ 2). ໂຢຮັນບອກເຮົາວ່າຕົ້ນໄມ້ແຫ່ງຊີວິດຕົ້ນນີ້ເກີດຜົນສິບສອງຊະນິດ ແລະຍັງເກີດຜົນທຸກເດືອນອີກ, ຂ້າພະເຈົ້າອາດພາບເບິ່ງຕົ້ນໄມ້ທີ່ມີໝາກສິບສອງຊະນິດກໍອາດພາບແນວໃດກະບໍ່ອອກ ບໍ່ຮູ້ວ່າໃນເດືອນດຽວກັນນັ້ນແຕ່ລະງ່າຈະເປັນໝາກໄມ້ຕ່າງກັນຫລືອອກປົນກັນບໍ່? ຫຼືມັນຈະອອກຜົນເດືອນນຶ່ງຊະນິດນຶ່ງ. ຫາກມີຕົ້ນໄມ້ແນວນີ້ເກີດຂຶ້ນໃນໂລກເຮົາກໍບໍ່ຈຳເປັນປູກຫລາຍຕົ້ນອີກ. ຄຳນຶ່ງທີ່ພຣະຄັມພີເວົ້າເຖິງເລື້ອຍໆຄືນ້ຳເບີ 12 ທີ່ເພິ່ນເວົ້າຫລາຍເທື່ອໃນພຣະຄັມພີ, ຂໍຍົກເອົາຕົວຢ່າງນ້ຳເບີ 12 ບາງຕອນດັ່ງນີ້; ລູກຂອງຢາໂຄບ 12 ຄົນ ຕໍ່ມາກໍເປັນສິບສອງຕະກູນ, ສາວົກ 12 ຄົນ, ແລະໃນພຣະທັມທີ່ເຮົາກຳລັງເວົ້າກັນນີ້ກໍເວົ້າເຖິງຕົ້ນໄມ້ 12 ຊະນິດແລະເກີດໝາກ 12 ເດືອນ ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງເຂົ້າໃຈວ່ານ້ຳເບີ 12 ຕ້ອງມີຄວາມໝາຍຢ່າງແນ່ນອນ ແມ່ນແຕ່ປີນຶ່ງກໍຍັງມີ12 ເດືອນ ເປັນຫຍັງຈຶ່ງບໍ່ເປັນນ້ຳເບີອື່ນຫາກນ້ຳເບີ 12 ບໍ່ສຳຄັນ.

ໃນຂະນະທີ່ເທວະດາຕົນນັ້ນສະແດງນິມິດແກ່ໂຢຮັນເພິ່ນໄດ້ຫລົງຂາບລົງຈະນະມັສການແທບຕີນຂອງເທວະດາ ແຕ່ເທວະດາຕົນນັ້ນໄດ້ຫ້າມເພິ່ນຢ່າງແຂງແຮງບໍ່ໃຫ້ກົ້ມນະມັສການ ແລະເພິ່ນຍັງບອກວ່າເພິ່ນເປັນຜູ້ຮັບໃຊ້ຢ່າງດຽວກັນກັບໂຢຮັນ "ເມື່ອຂ້າພະເຈົ້າໄດ້ຍິນແລະເຫັນແລ້ວ ກໍນ້ອມຕົວລົງຈະນະມັສການແທບຕີນຂອງເທວະດາຕົນ ທີ່ໄດ້ສະແດງເຫດການເຫລົ່ານີ້ແກ່ຂ້າພະເຈົ້າ ເທວະດາຕົນນັ້ນໄດ້ກ່າວກັບຂ້າພະເຈົ້າວ່າ ລະວັງ, ຢ່າເຮັດຢ່າງນັ້ນເຮົາເປັນຂ້ອຍໃຊ້ຢ່າງດຽວກັບທ່ານ ແລະກັບພວກພີ່ນ້ອງຂອງທ່ານຊຶ່ງເປັນຜູ້ປະກາດພຣະທັມ" (ຂໍ້ 8-9). ຄຳເວົ້າຂອງເທວະດາຕອນນີ້ໄດ້ບອກເຮົາທັງຫລາຍຜູ້ປະກາດພຣະທັມຂອງພຣະເຈົ້າໃຫ້ຮູ້ວ່າ ຜູ້ປະກາດພຣະທັມ ພຣະເຈົ້າຈະເປັນເໝືອນເທວະດາໃນແຜ່ນດິນເຢຣູຊາເລັມໃໝ່.

ເທວະດາບອກໂຢຮັນບໍ່ໃຫ້ປິດນິມິດທີ່ບັນທຶກວັນນີ້ ແຕ່ໃຫ້ເປີດໄວ້ເພື່ອທຸກຄົນຈະໄດ້ອ່ານແລະເຂົ້າໃຈດ້ວຍຕົນເອງໂດຍສະເພາະຢ່າງຍິ່ງແມ່ນສັ່ງໃຫ້ເປີດໄວ້ສຳລັບບຸກຄົນທີ່ເຊື່ອພຣະເຈົ້າ ແລະບຸກຄົນທີ່ເຊື່ອຊາຕານໃຫ້ໄດ້ອ່ານຢ່າງສົມໃຈເພື່ອເຂົາຈະໄດ້ຮູ້ວ່າອັນໃດຈະເກີດຂຶ້ນ ໂດຍບໍ່ໃຫ້ຊັກຊວນຄົນບໍ່ເຊື່ອໃຫ້ເຊື່ອອີກ ສ່ວນຜູ້ຊອບທັມນັ້ນກໍໃຫ້ດຳເນີນຄວາມຊອບທັມຕໍ່ໄປ (ຂໍ້ 10-11). ພຣະເຢຊູຈະສະເດັດມາຍັງໂລກອີກໃນໄວໆນີ້ ການສະເດັດມາຂອງພຣະອົງຄາວນີ້ບໍ່ເໝືອນຄາວກ່ອນທີ່ມາປະກາດເຣື່ອງແຜ່ນດິນສວັນ ແຕ່ພຣະອົງຈະມາພິພາກສາແລະໃຫ້ລາງວັນແຕ່ລະຄົນຕາມການຂອງບຸກຄົນນັ້ນ, ຄົນທີ່ຊຳຣະລ້າງເສື້ອຜ້າຂອງຕົນກໍເປັນສຸກ ມີຄວາມໝາຍວ່າຄົນທີ່ຊຳຣະຕົນເອງຈາກການຊົ່ວຮ້າຍແລະຊອກສແວງຫາພຣະເຈົ້າກໍຈະເປັນສຸກ(ຂໍ້ 11-15). ດ້ວຍເຫດນີ້ເຮົາທັງຫລາຍທີ່ເຊື່ອໃນພຣະເຈົ້າຈົ່ງອ່ານເຣື່ອງນີ້ໃຫ້ເຂົ້າໃຈແລະປະຕິບັດທຸກຂໍ້ຄວາມກ່ອນໜ້າພຣະເຢຊູຈະສະເດັດມາ.

ພຣະເຢຊູຊົງປະກາດວ່າ ພຣະອົງຊົງເປັນເຊື້ອສາຍຂອງກະສັດດາວິດທີ່ໄດ້ບັງເກີດທີ່ເບັດເລເຮັມ (ມັດທາຍ 1:1-17). ເປັນດາວເພັດທີ່ສ່ອງແສງໃຫ້ຄົນເຫັນແຈ້ງໃນເວລາກາງຄືນ, ແລະດາວນີ້ແຫລະຊົງນຳຄົນທັງຫລາຍອອກຈາກຄວາມມືດ "ເຮົານີ້ເປັນຮາກເຄົ້າແລະໜໍ່ເຊື້ອດາວິດ, ເປັນດາວເພັດດວງໃສຮຸ່ງ" (ຂໍ້ 15). ມີຄວາມໝາຍວ່າພຣະອົງຊົງເປັນຄວາມລອດພົ້ນຂອງຄົນທັງປວງ. ພຣະວິນຍານບໍຣິສຸດແລະເຈົ້າສາວ (ເຈົ້າສາວແຜ່ນດິນສວັນໃໝ່ ຫລືເຢຣູຊາເລັມໃໝ່) ຈະເຊີນຄົນທັງໂລກທີ່ເຊື່ອໃນພຣະເຢຊູເຂົ້າໃນແຜ່ນດິນສວັນໃໝ່ "ຝ່າຍພຣະວິນຍານແລະເຈົ້າສາວຊົງກ່າວວ່າເຊີນມາ ໃຫ້ຜູ້ໄດ້ຍິນນັ້ນທູນວ່າ ເຊີນມາ ໃຫ້ຜູ້ຫິວນ້ຳເຂົ້າມາ ຜູ້ມີໃຈປາຖນາກໍໃຫ້ຜູ້ນັ້ນມາຮັບນ້ຳສຳລັບຊີວິດໂດຍບໍ່ຕ້ອງເສັຽຄ່າ" (ຂໍ້ 17).

ໃນຕອນທ້າຍໂຢຮັນເຕືອນບໍ່ໃຫ້ຜູ້ໃດເພີ້ມເຕີມພຣະນິມິດນີ້ຢ່າງເດັດຂາດ ແລະຍັງຫ້າມບໍ່ໃຫ້ຜູ້ໃດຕັດອອກແມ່ນແຕ່ຄຳເວົ້າຄຳດຽວຢ່າງເດັດຂາດຖ້າຜູ້ໃດຍັງເຮັດແນວນັ້ນໂຢຮັນບອກວ່າ ພຣະເຈົ້າຈະຊົງປະຕິບັດຕໍ່ຜູ້ນັ້ນຢ່າງດຽວກັນ "ຖ້າຜູ້ໃດຈະເພີ້ມເຕີມຂໍ້ ຄວາມໃດໃສ່ໜັງສືນີ້ ພຣະເຈົ້າຈະຊົງເອົາພັຍອັນຕະລາຍທີ່ຂຽນໄວ້ໃນໜັງສືນ້ອນນີ້ ເພີ້ມເຕີມ

ແກ່ຜູ້ນັ້ນ ຖ້າຜູ້ໃດຕັດຂໍ້ຄວາມໃດອອກຈາກໜັງສືທຳນວາຍນີ້ ພຣະເຈົ້າກໍຈະຊົງຕັດສ່ວນແບ່ງຂອງຜູ້ນັ້ນ ທີ່ມີຢູ່ໃນຕົ້ນໄມ້ຊຶ່ງໃຫ້ຊີວິດ ແລະສ່ວນແບ່ງໃນນະຄອນສັກສິດ ທີ່ຂຽນໄວ້ໃນໜັງສືນ້ອນນີ້" (ຂໍ້ 19). ໂມເຊກໍໄດ້ເຕືອນໄວ້ໃນພຣະທັມສອງພຣະບັນຍັດບົດ 4 ແລ້ວ, ດັ່ງນັ້ນເຮົາທັງຫລາຍຜູ້ຢູ່ໃນພຣະທັມ, ຜູ້ສອນພຣະທັມຄວນລະມັດລະວັງເຣື່ອງນີ້ໃຫ້ຫລາຍຂຶ້ນ ໂດຍສະເພາະການຕີຄວາມໝາຍພຣະຄັມພີຢ່າໃຫ້ອອກນອກເຣື່ອງຫລືແປຕາມໃຈຕົນເອງ.

<u>ຄຳຖາມ:</u>

1. ທ້ອງຟ້າແລະແຜ່ນດິນໂລກໃໝ່ຈະເປັນໄປໄດ້ຢ່າງໃດ?

2. ທ້ອງຟ້າແລະແຜ່ນດິນໂລກໃໝ່ຈະເກີດຂຶ້ນເມື່ອໃດ?

3. ຄະນອນນີ້ຄ້າຍຄືໃຜກຳລັງລໍຖ້າໃຜ?

4. ພວກນັກວິທະຍາສາດຮູ້ເຣື່ອງນີ້ຫລາຍປານໃດ?

5. ເມື່ອພວກນັກວິທະຍາສາດທີ່ມີຄວາມຮູ້ບໍ່ສາມາດຮູ້ເປັນຫຍັງເຮົາຜູ້ມີປັນຍານ້ອຍຈຶ່ງຮູ້?

6. ຮູບຮ່າງຄວາມສວຍງາມຂອງແຜ່ນດິນສວັນໃໝ່ເປັນແນວໃດ?

7. ເປັນຫຍັງຈຶ່ງມີຕົ້ນໄມ້ສິບສອງເດືອນ ແລະສິບສອງຊະນິດ?

8. ເປັນຫຍັງເທວະດາຈຶ່ງບອກໂຢຮັນໃຫ້ເປີດບັນທຶກພຣະນິມິດນີ້ໄວ້?